# ຄຳແນະນຳໄປສູ່ຈຸດສຳຄັນຂອງການຕີຣາຄາປະເມີນຜົນເບີ່ງການເບີ່ງແຍງດູແລສ່ວນຕົວ

ຣາຍຣະອຽດຢູ່ໃນຈຸດສຳຄັນອັນນີ້ຈະຊ່ວຍທ່ານໃຫ້ເຂົ້າໃຈການຕີຣາຄາປະເມີນຜົນເບີ່ງການເບີ່ງແຍງດູແລສ່ວນຕົວຂອງທ່ານ.ພາກສ່ວນແຕ່ລະພາກສ່ວນເອົາຣາຍຣະອຽດໃຫ້ກ່ຽວກັບພາກສ່ວນຕ່າງໆຂອງການຕີຣາຄາປະເມີນຜົນ.ບີບໃສ່ສາຍຕໍ່ຢູ່ຂ້າງລຸ່ມນີ້ຫລືດຶງລົງລຸ່ມເພື່ອຈະເບີ່ງແຕ່ລະພາກສ່ວນ.

# ສາລະບານ

## ຈຸດສໍາຄັນສໍາລັບການຕີຣາຄາປະເມີນຜົນການເບິ່ງແຍງດູແລສ່ວນຕົວ


ຄໍາແນະນໍາໄປສູ່ຈຸດສໍາຄັນຂອງການຕີຣາຄາປະເມີນຜົນເບິ່ງການເບິ່ງແຍງດູແລສ່ວນຕົວ ........ 1

ກິຈກັມຂອງການດໍາຣົງຊີວິດປະຈໍາວັນ ........ 3

ຂໍ້ມູນຂອງການໃຫ້ຄະແນນ ........ 3

ການບັນຣະຍາຍຂອງກິຈກັມຂອງການດໍາຣົງຊີວິດປະຈໍາວັນ (ADLs): ........ 5

ກິຈກັມສໍາຄັນຂອງການດໍາຣົງຊີວິດປະຈໍາວັນ ........ 7

ຣາຍຣະອຽດທົ່ວໄປກ່ຽວກັບການມີເງື່ອນໄຂສໍາລັບກຸ່ມອາຣົມແລະການປະພຶດ ........ 9

ການມີເງື່ອນໄຂພາຍໄຕ້ແບບວິທີ#1 ........ 10

ຈຸດສໍາຄັນຂອງອາຣົມແລະການປະພຶດ#1 ........ 12

ການມີເງື່ອນໄຂພາຍໄຕ້ແບບວິທີ#2 ........ 14

ຈຸດສໍາຄັນຂອງອາຣົມແລະການປະພຶດ#2 ........ 21

ຄະແນນການທໍາງານຂອງມັນສະມອງ ........ 27

ຄວາມຫຍຸ້ງຍາກສັບສົນທາງການແພດ ........ 30

ການເບິ່ງແຍງດູແລທີ່ດີເດັ່ນ: #1 ........ 36

ການມີເງື່ອນໄຂພາຍໄຕ້ແບບວິທີ#2: ........ 38

ການອູ້ມຊູທີ່ບໍ່ເປັນທາງການ: ........ 40

ການຊັກເຄື່ອງຢູ່ນອກເຮືອນ,ການອອກຕະລາດ,ຫລືອາຍອຸ່ນຈາກຟືນດັງໄຟ ........ 55

# ກິຈກັມຂອງການດຳຣົງຊີວິດປະຈຳວັນ

ກິຈກັມຂອງການດຳຣົງຊີວິດປະຈຳວັນ (ADLs) ເປັນກິຈກັມຈຳເປັນຕົວຢ່າງວ່າການນຸ່ງເຄື່ອງ,ການຍ້າຍໄປມາອ້ອມແອ້ມ, ແລະການກິນ.ແນວທາງທີ່ພວກເຮົາໃຫ້ຄະແນນການຊ່ວຍເຫລືອທີ່ທ່ານໄດ້ຮັບນຳ ADLs ຫລີ້ນບົດບາດໃຫຍ່ຢູ່ໃນຊົ່ວໂມງຢູ່ໃນເຮືອນຂອງທ່ານຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນຂອງທ່ານເອງຫລືອັຕຣາປະຈຳວັນຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນຄອບຄົວຜູ້ໃຫຍ່,ບ່ອນຢູ່ທີ່ຖືກຊ່ວຍເຫລືອ,ຫລືແບບສະຖານທີ່ອາສັຍຢູ່.ເລກຄະແນນ(0-4) ໄດ້ຖືກແຕ່ງຕັ້ງໃສ່ກິຈກັມພາລະກິດຂອງຂອງການດຳຣົງຊີວິດປະຈຳວັນ (ADL) ແຕ່ລະອັນ (ເບິ່ງຂ້າງລຸ່ມນີ້) .

ທຳອິດພວກເຮົາຈະບອກທ່ານວ່າ ADL ໄດ້ຖືກໃຫ້ຄະແນນແນວໃດຢູ່ໃນການຕີຣາຄາປະເມີນຜົນຂອງທ່ານ.ຫລັງຈາກນັ້ນ,ພວກເຮົາຈະອະທິບາຍ ADL ແຕ່ລະຢ່າງ.

## ການໃຫ້ຄະແນນຂອງກິຈກັມຂອງການດຳຣົງຊີວິດປະຈຳວັນ (ADLs):

### ຂໍ້ມູນຂອງການໃຫ້ຄະແນນ

**ຄະແນນຂອງທ່ານຂຶ້ນນຳຂໍ້ມູນໃຫຍ່ສອງຢ່າງ:**

1. ການຊ່ວຍເຫລືອ <u>ແນວໃດ</u> ທີ່ທ່ານໄດ້ຮັບໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.

   a) <u>ການຄວບຄຸມເບິ່ງນຳ</u> ຫມາຍເຖິງຜູ້ເບິ່ງແຍງດູແລຂອງທ່ານຊ່ວຍເຫລືອທ່ານໂດຍບໍ່ຕ້ອງໄດ້ຈັບທ່ານ.

   b) <u>ການຈູງບໍ່ມີນ້ຳຫນັກ</u> ຫມາຍເຖິງຜູ້ເບິ່ງແຍງດູແລຂອງທ່ານຊ່ວຍເຫລືອທ່ານໄດ້ຈັບທ່ານ,ແຕ່ບໍ່ໄດ້ຍົກຫລືອູ້ມຊູທ່ານຂຶ້ນ.

   c) <u>ການຈູງມີນ້ຳຫນັກ</u> ຫມາຍເຖິງທ່ານອີງຕົວທ່ານໃສ່ຜູ້ເບິ່ງແຍງດູແລຂອງທ່ານຫລືຜູ້ເບິ່ງແຍງດູແລຂອງທ່ານໄດ້ຍົກຫລືອູ້ມຊູທ່ານຂຶ້ນຫລືສ່ວນນຶ່ງຂອງຮ່າງກາຍຂອງທ່ານ.

2. <u>ມີຈັກເທື່ອ</u> ທີ່ທ່ານໄດ້ຮັບຄວາມຊ່ວຍເຫລືອແນວນັ້ນໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.

   a) ພວກເຮົານັບເອົາແຕ່ການຊ່ວຍເຫລືອທີ່ທ່ານໄດ້ຮັບຢ່າງຫນ້ອຍ 3 ເທື່ອໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.

   b) ຖ້າຫາກວ່າທ່ານໄດ້ຮັບຄວາມຊ່ວຍເຫລືອແຕ່ 1 ຫລື 2 ເທື່ອເທົ່ານັ້ນ,ມັນຈະບໍ່ໄລ່ເອົາ.

ທ່ານອາດຈະໄດ້ຮັບຄວາມຊ່ວຍເຫລືອນຳບາງຢ່າງ,ແຕ່ບໍ່ແມ່ນຫມົດທຸກຢ່າງ,ພາກສ່ວນຂອງພາລະຫນ້າທີ່.

- ຕົວຢ່າງວ່າ,ການສຸບໃສ່ເກີບແລະຖົງເທົ້າເປັນພາກສ່ວນນຶ່ງຂອງການນຸ່ງເຄື່ອງ.ພວກເຮົາເບິ່ງວ່າການຊ່ວຍເຫລືອເທົ່າໃດທີ່ທ່ານໄດ້ຮັບນຳພາລະກິດທັງຫມົດແລະການຊ່ວຍເຫລືອເທົ່າໃດທີ່ທ່ານໄດ້ຮັບນຳພາກສ່ວນຂອງພາລະກິດ.

ພວກເຮົາເບິ່ງວ່າທ່ານເຮັດພາລະຫນ້າທີ່ຂອງທ່ານແນວໃດ:

- ການໃຊ້ເຄື່ອງອຸປກອນ (ເຊັ່ນວ່າແນວພາຍ່າງ,ໄມ້ຄ້ອນເທົ້າຫລືຕັ່ງນັ່ງລໍ້ຊຸກ) ;ແລະ

- ຫລັງຈາກທີ່ຜູ້ເບິ່ງແຍງດູແລຂອງທ່ານແຕ່ງຕັ້ງທ່ານເພື່ອຈະເຮັດພາລະກິດ (ເຊັ່ນວ່າເອົາແນວພາຍ່າງຂອງທ່ານມາໃຫ້ທ່ານ,ອາຫານເພື່ອຈະກິນ,ຫລືແປງຖູແຂ້ວເພື່ອຈະຖູແຂ້ວ)

ການຫວັງເພິ່ງທັງຫມົດ (ຄະແນນເປັນ **4**):

ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານປະຕິບັດພາລະກິດທັງຫມົດໃຫ້ທ່ານທຸກໆເທື່ອທີ່ທ່ານຕ້ອງການມັນ ແລະ ພາລະກິດໄດ້ເກີດຂຶ້ນຢ່າງຫນ້ອຍ3 ເທື່ອໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.ທ່ານບໍ່ສາມາດທີ່ຈະເຮັດພາກສ່ວນໃດຂອງພາລະກິດອັນນີ້ໃນຣະຫວ່າງ 7 ວັນທັງຫມົດກ່ອນການຕີຣາຄາປະເມີນຜົນຂອງທ່ານ.

ການຊ່ວຍເຫລືອກ້ວາງຂວາງ (ຄະແນນເປັນ **3**):

- ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານປະຕິບັດສ່ວນນຶ່ງຂອງພາລະກິດຢ່າງຄົບຖ້ວນສຳລັບທ່ານ3 ເທື່ອຫລືຫລາຍກວ່າໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ;ຫລື

- ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານໄດ້ເອົາການຊ່ວຍເຫລືອແກ່ນ້ຳຫນັກໃຫ້ໃນຣະຫວ່າງພາລະກິດ3 ເທື່ອຫລືຫລາຍກວ່າໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.

ການຊ່ວຍເຫລືອຈຳກັດ (ຄະແນນເປັນ **2** ):

ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານໄດ້ຊ່ວຍເຫລືອທ່ານເຮັດພາລະກິດຫລືພາກສ່ວນຂອງພາລະກິດໃຫ້ແລ້ວ ແລະ ທ່ານໄດ້ເຂົ້າຮ່ວມຢ່າງຈິງຈັງ.ການຊ່ວຍເຫລືອ ບໍ່ໄດ້ ຖືກແກ່ນ້ຳຫນັກ (ຕາມທີ່ຖືກອະທິບາຍຢູ່ຂ້າງເທີງນີ້) .ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານໄດ້ຊ່ວຍເຫລືອທ່ານແບບນີ້ 3 ເທື່ອຫລືຫລາຍກວ່າໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.

ການຊ່ວຍເຫລືອນຳການກຳກັບຄວບຄຸມນຳ (ຄະແນນເປັນ **1**):

ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານໄດ້ເຕືອນທ່ານ,ເວົ້ານຳທ່ານໂດຍຜ່ານພາລະກິດຫລືພາກສ່ວນຂອງພາລະກິດ,ແລະໄດ້ຢືນຢູ່ໃກ້ໆເພື່ອຈະຄວບຄຸມກຳກັບ3 ເທື່ອຫລືຫລາຍກວ່າໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.ທ່ານເຮັດພາລະກິດໂດຍປາສຈາກການຊ່ວຍເຫລືອດ້ວຍມື.

**ບໍ່ຂຶ້ນນຳໃຜ (ຄະແນນເປັນ 0):**

ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານບໍ່ຊ່ວຍເຫລືອທ່ານນຳພາລະກິດ <u>ຫລື</u> ທ່ານໄດ້ຮັບຄວາມຊ່ວຍເຫລືອແຕ່1 ຫລື 2 ເທື່ອເທົ່ານັ້ນໃນ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ.

**ກິຈກັມບໍ່ໄດ້ເກີດຂຶ້ນ/ບໍ່ມີຜູ້ໃຫ້ການບໍຣິການ (ຄະແນນເປັນ 4):**

ພາລະຫນ້າທີ່ບໍ່ໄດ້ເກີດຂຶ້ນໃນຕະລອດ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານຍ້ອນວ່າທ່ານບໍ່ມີຜູ້ໃຫ້ການເບິ່ງແຍງດູແລວ່າງທີ່ຈະຊ່ວຍເຫລືອທ່ານ.

**ກິຈກັມບໍ່ໄດ້ເກີດຂຶ້ນ/ລູກຄ້າບໍ່ຊາມາດ (ຄະແນນເປັນ 4):**

ພາລະຫນ້າທີ່ບໍ່ໄດ້ເກີດຂຶ້ນໃນຕະລອດ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານຍ້ອນວ່າທ່ານບໍ່ສາມາດທີ່ຈະເຮັດມັນໄດ້ເຖິງແມ່ນວ່າທ່ານຈະມີຄວາມຊ່ວຍເຫລືອຈາກຜູ້ໃຫ້ການເບິ່ງແຍງດູແລຢູ່ກໍຕາມ (ເຊັ່ນວ່າການຍ່າງ,ຖ້າຫາກເປັນເປັ້ຣລ່ອຍ) .

**ກິຈກັມບໍ່ໄດ້ເກີດຂຶ້ນ/ລູກຄ້າປະຕິເສດ (ຄະແນນເປັນ 0):**

ພາລະຫນ້າທີ່ບໍ່ໄດ້ເກີດຂຶ້ນໃນຕະລອດ 7 ວັນກ່ອນການຕີຣາຄາປະເມີນຜົນຂອງທ່ານຍ້ອນວ່າທ່ານເລືອກເອົາທີ່ຈະບໍ່ຮັບເອົາຄວາມຊ່ວຍເຫລືອນຳຫລືບໍ່ເຮັດພາລະຫນ້າທີ່.

## ການບັນຣະຍາຍຂອງກິຈກັມຂອງການດຳຣົງຊີວິດປະຈຳວັນ (**ADLs**):

ພວກເຮົາເບິ່ງວ່າທ່ານ ຍ້າຍ ໃນສາມແບບຕ່າງກັນ.ພວກເຮົາໃຊ້ຜົນອອກມາ ອັນສູງທີ່ສຸດ
ຂອງທັງສາມຢ່າງ.ຖ້າຫາກວ່າທ່ານບໍ່ສາ
ມາດຍ່າງໄດ້ບາງເທື່ອແລະຍັງໃຊ້ຕັ່ງນັ່ງລໍ້ຊຸກບາງເທື່ອຢູ່,ພວກເຮົາເບິ່ງວ່າທ່ານຕ້ອງການການຊ່ວຍເຫລືອຫລາຍປານໃດນຳທັງສອງຢ່າງແລະໃຊ້ຄະແນນສູງສຸດ.

**ຍ່າງເຂົ້າຫ້ອງ:** ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະຍ່າງເຂົ້າເຮືອນຂອງທ່ານ.

- ອັນນີ້ຫມາຍເຖິງເຂດແດນຢູ່ທາງໃນທັງຫມົດຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນຫລືຢູ່ໃນເຮືອນຄອບຄົວຜູ້ໃຫຍ່.
- ອັນນີ້ຫມາຍເຖິງຫ້ອງຂອງທ່ານ,ທາງຍ່າງກາງເຮືອນແລະເຂດນັ່ງຫລິ້ນຖ້າຫາກວ່າທ່ານອາສັຍຢູ່ຕາມຕຶກອາຄານໃຫຍ່ເຊັ່ນວ່າສະຖານທີ່ອາສັຍຢູ່ທີ່ຖືກຊ່ວຍເຫລືອ.

**ການຍ້າຍໄປມາ <u>ຢູ່ໃນ</u> ຫ້ອງ:** ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະຍ້າຍໄປມາອ້ອມເຮືອນຂອງທ່ານຖ້າຫາກວ່າທ່ານໃຊ້ຕັ່ງນັ່ງລໍ້ຊຸກ.

- ອັນນີ້ຫມາຍເຖິງວ່າທ່ານໄດ້ຮັບການຊ່ວຍເຫລືອຫລາຍປານໃດເພື່ອຈະເຮັດໃຫ້ຕັ່ງນັ່ງລໍ້ຊຸກຂອງທ່ານຍ້າຍທີ່.

**ການຍ້າຍໄປມາ <u>ຢູ່ນອກ</u> ຫ້ອງ:** ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະຍ່າງ,ລວມທັງຄັນໃດ,ທາງລ້ຽວ,ຫລືພື້ນທີ່ບໍ່ພຽງ ແລະ/ຫລືຍ້າຍຕັ່ງນັ່ງລໍ້ຊຸກຂອງທ່ານ,ຖ້າຫາກວ່າທ່ານໃຊ້ຕັ່ງນັ່ງລໍ້ຊຸກ.

- ອັນນີ້ຫມາຍເຖິງຂ້າງນອກຂອງເຮືອນຂອງທ່ານຫລືເຮືອນຄອບຄົວຜູ້ໃຫຍ່,ແຕ່ວ່າຍັງຢູ່ໃນເຂດແດນ.ມັນລວມເອົາການໄປຫາຫລືມາຈາກລະບຽງຫລັງບ້ານຫລືລະບຽງຫນ້າບ້ານ,ເດີ່ນຫລັງບ້ານ,ໄປຫາຕູ້ໄປສະນີ,ເພື່ອຈະພົບກັບຄົນຂ້າງຄຽງ,ອື່ນໆ.

- ຖ້າຫາກວ່າທ່ານອາສັຍຢູ່ໃນຕຶກອາຄານໃຫຍ່,ເຊັ່ນວ່າສະຖານທີ່ອາສັຍຢູ່ທີ່ຖືກຊ່ວຍເຫລືອ,ອັນນີ້ຫມາຍເຖິງເຂດແດນທີ່ຢູ່ໄກຈາກຫ້ອງນອນຂອງທ່ານເຊັ່ນວ່າຫ້ອງກິນເຂົ້າ,ສູນກາງກິຈກັມ,ແລະເຂດແດນຂ້າງນອກຢູ່ໄກ້ໆເຊັ່ນວ່າສວນຫລັງບ້ານຫລືບ່ອນຈອດຣົດ.

**ການຕຶງໄປມາຢູ່ເທິງຕຽງ:**ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະຍ້າຍໄປແລະຈາກທ່ານອນຢູ່,ປິ້ນຂ້າງນຸ່ງໄປຫາຂ້າງນຶ່ງ, ແລະຕັ້ງຕົວຮ່າງກາຍຂອງທ່ານຢູ່ຕຽງ,ຕັ້ງນອນລົງຫລືເຟີນີເຈີຊະນິດອື່ນອີກ.

ການຍ້າຍທີ່:ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະ:

- ການເຂົ້າແລະອອກຈາກຕັ່ງເກົ້າອີ້,ຕັ່ງໂຊຟາ,ຕຽງ,ຫລືເຟີນີເຈີອື່ນໆ.

- ຢືນຂຶ້ນແລະ/ຫລືນັ່ງລົງ;

- ການເຂົ້າແລະ/ຫລືອອກຈາກຕັ່ງນັ່ງລໍ້ຊຸກ.

ການຍ້າຍທີ່ໄດ້ລວມເອົາການເຂົ້າໄປຫລືອອກຈາກຫ້ອງອາບນໍ້າ/ບ່ອນຢືນອາບນໍ້າ,ເຂົ້າຫລືອອກຈາກສ້ວມຖ່າຍຫລືເຂົ້າຫລືອອກຈາກ ຣົດ.ສິ່ງເຫລົ່ານີ້ຖືກເວົ້າເຖິງຢູ່ພາຍໄຕ້ການອາບນໍ້າ,ການເຂົ້າຫ້ອງນໍ້າ,ແລະການຂົນສົ່ງ.

**ການເຂົ້າຫ້ອງນໍ້າ:**ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະເຂົ້າໄປຫລືອອກຈາກສ້ວມຖ່າຍ,ເຄື່ອງນັ່ງຖ່າຍເທິງຕຽງ,ຫລືວັ້ຽງຮອງຖ່າຍ,ການເຊັດອອກຫລືການລ້າງຕົນເອງ,ການປ່ຽນແຜ່ນຮອງຫລືສິ້ງຊ້ອນໃນ,ແລະການແປງເຄື່ອງນຸ່ງ.ມັນຍັງລວມເອົາການຊ່ວຍເຫລືອທີ່ທ່ານໄດ້ຮັບອີກຄືກັນເພື່ອຈະໄປເຂົ້າຫ້ອງນໍ້າເຖິງແມ່ນວ່າທ່ານຈະບໍ່ໃຊ້ຫ້ອງນໍ້າກໍຕາມ,ລວມທັງຄວາມຊ່ວຍເຫລືອນໍາທໍ່ຢາງ,ທໍ່ຕໍ່ຈາກການຜ່າຕັດ,ວັ້ຽງ,ຫລືແນວຮອງຍ່ຽວ.

**ການກິນ:**ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະກິນແລະດື່ມ.ອັນນີ້ຫມາຍຄວາມວ່າການໄດ້ອາຫານຫລືນໍ້າຈາກຊາມ ຫລືຈອກໄປໃສ່ປາກຂອງທ່ານຫລືການກິນໂດຍທາງອື່ນເຊັ່ນວ່າການປ້ອນທາງທໍ່.

**ການນຸ່ງເຄື່ອງ:**ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະນຸ່ງ,ຮັດ,ແລະປົດອອກເຄື່ອງນຸ່ງທຸກໆຢ່າງ,ລວມທັງເຄື່ອງນຸ່ງນອນ,ຖົງເທົ້າແລະເກີບ,ແລະເຄື່ອງນຸ່ງທີ່ທ່ານນຸ່ງເມື່ອເວລາທ່ານອອກໄປຂ້າງນອກ.ມັນຍັງລວມເອົາການສຸບໃສ່ແລະປົດອອກເຫລັກມັດແຂນມັດຂາ,ແຂ່ງຂາປອມ,ແລະທໍ່ກົດດັນ(**TED**).

**ອະນາມັຍສ່ວນຕົວ:** ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະເຮັດນຳຄວາມຕ້ອງການໃນການແຕ່ງຕົວແລະອະນາມັຍສ່ວນຕົວຂອງທ່ານ,ລວມເອົາການຫວີຜົມຂອງທ່ານ,ການຖູແຂ້ວ,ການບົວຣະບັດແຂ້ວປອມ,ການແຖຫນວດ,ການທາເຄື່ອງສຳອາງ,ການລ້າງ/ການເຮັດໃຫ້ຫນ້າແລະມືຂອງທ່ານໃຫ້ແຫ້ງ,ການບົວຣະບັດເລັບມືເລັບຕີນແລະການຊ່ວຍເຫລືອນຳປະຈຳເດືອນ (ການບົວຣະບັດເຣື່ອງສ່ວນຕົວຜູ້ຍິງ) .ມັນລວມເອົາການລ້າງຜົມຂອງທ່ານຢູ່ໃນອ່າງສ່ວຍຫນ້າຢູ່ເຮືອນຂອງທ່ານຫລືຢູ່ຮ້ານເສີມສວຍ/ຮ້ານຕັດຜົມ,ແຕ່ວ່າບໍ່ລວມເອົາການອາບນ້ຳຫລືການຢືນອາບນ້ຳ.

ຄະແນນ ADL ທັງຫມົດຂອງທ່ານແມ່ນຈຳນວນບວກເຂົ້າໃສ່ກັນຂອງຄະແນນສຳລັບພາລະຫນ້າທີ່ຕໍ່ລົງໄປນີ້:

| | | |
|---|---|---|
| ອະນາມັຍສ່ວນຕົວ | ການເຫນັງຕີງໄປມາຢູ່ຕຽງ | ການຍ້າຍໄປມາ |
| ການກິນອາຫານ | ການໃຊ້ຫ້ອງນ້ຳ | ການນຸ່ງເຄື່ອງ |

ແລະຄະແນນສູງສຸດທີ່ຖືກເອົາໃຫ້ຈາກການຍ່າງເຂົ້າຫ້ອງ,ການເຄື່ອນທີ່ໄປມາຢູ່ໃນຫ້ອງ,
ແລະການເຄື່ອນທີ່ໄປມາຢູ່ນອກຫ້ອງ.

**ການອາບນ້ຳແລະການກຳກັບນຳຢາແມ່ນ ADLs, ແຕ່ວ່າເຂົາເຈົ້າບໍ່ໄລ່ໃສ່ນຳຄະແນນ ADLຂອງທ່ານ.**ຊົ່ວໂມງທົ່ວໄປຂອງທ່ານໄດ້ຖືກລຸດລົງເມື່ອເວລາທ່ານມີການອູ້ມຊູທີ່ບໍ່ເປັນທາງການແນວນຶ່ງຫລືທັງສອງ.

**ການອາບນ້ຳ:**ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອການອາບນ້ຳຫມົດຕົວ,ການອາບນ້ຳຢືນເອົາຫລືໃຊ້ຟອງນ້ຳ.ມັນຍັງລວມເອົາອີກຄືກັນການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະເຂົ້າໄປຫລືອອກຈາກອ່າງອາບນ້ຳ/ບ່ອນຢືນອາບນ້ຳ.

**ການຄວບຄຸມນຳຢາ:** ການຊ່ວຍເຫລືອທີ່ທ່ານໄດ້ຮັບເພື່ອຈະເອົາຫລືໃຊ້ຢາສັ່ງຊື້ຈາກທ່ານຫມໍ,ຢາຊື້ເອົາຕາມຮ້ານໂລດ,ຢາໄວຕາມິນ,ຫລືຢາຫຍ້າ.

# ກິຈກັມສຳຄັນຂອງການດຳຣົງຊີວິດປະຈຳວັນ

**IADL:** ກິຈກັມສຳຄັນຂອງການດຳຣົງຊີວິດປະຈຳວັນ (**IADLs**) ເປັນກິຈກັມປະຈຳທີ່ຖືກເຮັດລົງໄປຢູ່ອ້ອມແອ້ມເຮືອນຫລືຢູ່ໃນຊຸມນຸມຊົນ. **IADLs** ລວມເອົາການເຮັດອາຫານກິນ,ວຽກບ້ານ,ການອອກຕະລາດ,ການເດີນທາງໄປຫາຫມາຍນັດທ່ານຫມໍ.ການສະສົມໄມ້ດັງຟືນຍັງຖືກລວມໃສ່ອີກຄືກັນຖ້າຫາກວ່າບ່ອນມາບ່ອນດຽວຂອງອາຍອຸ່ນຂອງທ່ານແມ່ນໄມ້ດັງຟືນ.

ການເຮັດຄາບເຂົ້າ ຍັງຖືກເອີ້ນອີກວ່າແມ່ນ ການຈັດແຈງຄາບເຂົ້າ. ມັນລວມເອົາ:

- ການວາງແຜນເຮັດກິນ;ແລະ

- ການວາງແຜນເຮັດກິນ;ແລະ
- ການເຮັດກິນ;ແລະ
- ການແຕ່ງອາຫານແລະເຄື່ອງໃຊ້ເຮືອນຄົວ

ມັນຕ້ອງລວມເອົາການເຮັດກິນແລະການຈັດແຈງຄາບເຂົ້າຕົວຈິງ.

**ວຽກບ້ານ** ລວມເອົາ:

- ລ້າງຖ້ວຍ;
- ການປັດຂີ້ຝຸ່ນ;
- ການມ້ຽນບ່ອນນອນແລະການປ່ຽນຕຽງນອນ
- ການດູດຂີ້ຝຸ່ນ
- ການທຳຄວາມສະອາດຫ້ອງນ້ຳແລະຫ້ອງອື່ນໆ;
- ການເອົາຂີ້ເຫຍື້ອອອກ;
- ຊຽບຮ້ອຍຂື້ນ;ແລະ
- ການຊັກເຄື່ອງ.

**ການອອກຕະລາດ**ລວມເອົາການຊື້ເອົາອາຫານ,ສິ່ງຈຳເປັນດ້ານພະຍາບານ,ແລະສິ່ງຂອງໃນເຮືອນອື່ນໆ.ມັນຍັງລວມເອົາໄປຫາແລະກັບມາຈາກຮ້ານຄ້າພ້ອມທັງເອົາເຄື່ອງຂອງໄວ້ຢູ່ບ່ອນມ້ຽນ.

**ການຂົນສົ່ງໄປມາ**ໄດ້ຖືກຈຳກັດເຖິງການເດີນທາງໄປຫາແລະກັບຈາກຜູ້ໃຫ້ການປິ່ນປົວສຸຂະພາບ.ມັນລວມເອົາການຂັບຣົດພາທ່ານໄປແລະກັບຈາກຫມາຍນັດ.ມັນຍັງລວມເອົາການຕິດຕາມທ່ານໄປຫາຫມາຍນັດຖ້າຫາກວ່າຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງທ່ານບໍ່ໃຊ້ຣົດຂອງເຂົາເຈົ້າເອງເພື່ອຈະພາທ່ານໄປຫາຫມາຍນັດຂອງທ່ານ.

## ອາຣົມແລະການປະພຶດ:

ການປາກົດມີຢູ່ຂອງອາຣົມແລະການປະພຶດບາງຢ່າງພ້ອມທັງສິ່ງອື່ນໆສາມາດສະທ້ອນເຖິງຈຳນວນຊົ່ວໂມງຫລືອັຕຣາຊົ່ວໂມງຂອງທ່ານ.ສິ່ງອື່ນໆເຫລົ່ານີ້ກ່ຽວຂ້ອງນຳວ່າອາຣົມແລະການປະພຶດຈະສະທ້ອນເຖິງທ່ານແນວໃດດຽວນີ້ຫລືໄດ້ສະທ້ອນເຖິງທ່ານໃນຜ່ານມາແນວໃດ.ຖ້າຫາກວ່າທ່ານຖືກສະທ້ອນເຖິງໃນດຽວນີ້,ດົນປານໃດເທື່ອນຶ່ງທີ່ທ່ານຖືກສະທ້ອນເຖິງແມ່ນສຳຄັນ.ມັນຍັງສຳຄັນອີກຄືກັນທີ່ຈະຮູ້ຈັກວ່າມັນຈະງ່າຍປານໃດສຳລັບຜູ້ເບິ່ງແຍງດູແລທີ່ຈະກຳກັບຄວບຄຸມອາຣົມຫລືການປະພຶດທີ່ສະທ້ອນເຖິງທ່ານດຽວນີ້.ຖ້າຫາກວ່າອາຣົມຫລືການປະພຶດສະທ້ອນເຖິງໃນຜ່ານມາ,ມັນສຳຄັນທີ່ຈະຮູ້ຈັກວ່າສິ່ງທີ່ຜູ້ເບິ່ງແຍງດູແລເຮັດເພື່ອຈະກຳກັບຄວບຄຸມນັ້ນໃຊ້ການໄດ້ດີຫລືບໍ່.

ທຳອິດ,ພວກເຮົາເອົາລາຍລະອຽດທົ່ວໄປໃຫ້ທ່ານກ່ຽວກັບການມີເງື່ອນໄຂໄດ້ຮັບສຳລັບກຸ່ມ ອາລົມແລະການປະພຶດ.ຫລັງຈາກນັ້ນແມ່ນສອງພາກສ່ວນທີ່ອະທິບາຍສອງຫົນທາງແຕກ ຕ່າງກັນເພື່ອຈະມີເງື່ອນໄຂສຳລັບກຸ່ມອາລົມແລະການປະພຶດ.ຕົວຢ່າງໄດ້ຖືກເອົາໃຫ້ສຳລັບ ແຕ່ລະວິທີ.ຫລັງຈາກແຕ່ລະພາກສ່ວນ,ມັນມີຈຸດສຳຄັນທີ່ເອົາລາຍລະອຽດເພີ້ມເຕີມໃຫ້.

## ລາຍລະອຽດທົ່ວໄປກ່ຽວກັບການມີເງື່ອນໄຂສຳລັບກຸ່ມອາລົມແລະການປະພຶດ

ມັນມີຢູ່ສອງຫົນທາງເພື່ອຈະມີເງື່ອນໄຂສຳລັບກຸ່ມອາລົມແລະການປະພຶດ.ທັງສອງຫົນທາງມີສອງສິ່ງຕໍ່ລົງໄປນີ້ທີ່ຕົງກັນ:

- ທ່ານມີອາລົມຫລືການປະພຶດທີ່ມີເງື່ອນໄຂ;ແລະ
- ສະພາບຂອງການປະພຶດຂອງທ່ານຈະແມ່ນແນວນຶ່ງບໍ່ວ່າຈະເປັນ ປັດຈຸບັນ ຫລືຜ່ານມາ (ຖືກຕີຄວາມໝາຍຢູ່ຂ້າງລຸ່ມ).

  ພວກເຮົາເບິ່ງວ່າ ເມື່ອໃດ ການປະພຶດເກີດຂື້ນ.

  - ທ່ານມີອາລົມຫລືການປະພຶດ ໃນປັດຈຸບັນ ຖ້າຫາກວ່າມັນໄດ້ເກີດຂື້ນໃນ 7 ວັນຜ່ານມາ.
  - ທ່ານມີອາລົມຫລືການປະພຶດ ໃນຜ່ານມາ ຖ້າຫາກວ່າມັນບໍ່ໄດ້ເກີດຂື້ນໃນ 7 ວັນຜ່ານມາ.ແຕ່ວ່າມັນໄດ້ເກີດຂື້ນໃນ 5 ປີຜ່ານມາ.

ສຳລັບການປະພຶດ ປັດຈຸບັນ ຫລາຍໆຢ່າງ (ແຕ່ບໍ່ແມ່ນທັງຫມົດ) ,ພວກເຮົາເບິ່ງໃສ່:

- ລະຍະເວລາຫ່າງກັນ:ດົນປານໃດເທື່ອນຶ່ງທີ່ມັນເກີດຂື້ນໃນ 7 ວັນຜ່ານມາ;ແລະ
- ການດັດແປງໄດ້: ມັນງ່າຍເທົ່າໃດສຳລັບຜູ້ເບິ່ງແຍງດູແລທີ່ຈະກຳກັບຄວບຄຸມນຳອາລົມຫລືການປະພຶດໃນ 7 ວັນຜ່ານມາ.

  ເມື່ອ ການດັດແປງໄດ້ ຖືກພິຈາລະນາເບິ່ງ,ພວກເຮົາເບິ່ງເພື່ອຈະຮູ້ຈັກວ່າການປະພຶດແມ່ນ:

  - ຖືກດັດແປງງ່າຍໆ-ຫມາຍເຖິງການປະພຶດແມ່ນງ່າຍທີ່ຈະຄວບຄຸມນຳ;ຫລື
  - ດັດແປງບໍ່ໄດ້ຢ່າງງ່າຍໆ-ຫມາຍເຖິງການປະພຶດແມ່ນຍາກທີ່ຈະຄວບຄຸມກຳກັບ.

ສຳລັບການປະພຶດ ຜ່ານມາ ທຸກໆຢ່າງພວກເຮົາຫລຽວເບິ່ງ:

- ການເຂົ້າແຊກແຊງນຳ:ສິ່ງທີ່ຜູ້ໃຫ້ການເບິ່ງແຍງດູແລເຮັດເພື່ອຈະຄວບຄຸມນຳອາຣົມຫລືການປະພຶດ,ຖ້າຕ້ອງການ.ເມື່ອເວລາ ການເຂົ້າແຊກແຊງນຳໄດ້ຖືກພິຈາຣະນາເບິ່ງ,ພວກເຮົາເບິ່ງວ່າການເຂົ້າແຊກແຊງເຫລົ່ານັ້ນມີຜົນໃຊ້ໄດ້ຫລືບໍ່.

ຫມາຍເຫດ:ສະພາບ,ການດັດແປງໄດ້,ຫລືການເຂົ້າແຊກແຊງບໍ່ກ່ຽວນຳຖ້າຫາກວ່າທ່ານມີຄະແນນຂອງຄວາມອຸກອັ່ງຫລາຍເກີນກວ່າ 14 ຫລືຕ້ອງການການປິ່ນປົວສຸຂະພາບໂຣກຈິດຫລືໂຄງການສຸຂະພາບໂຣກຈິດ.

## ການມີເງື່ອນໄຂພາຍໃຕ້ແບບວິທີ#1

ທ່ານມີເງື່ອນໄຂຖ້າຫາກວ່າທ່ານມີອາຣົມຫລືການປະພຶດປັດຈຸບັນຫລືຜ່ານມາທີ່ຖືກບົ່ງຢູ່ໃນອາຣົມແລະການປະພຶດຈຸດສຳຄັນ **#1**.ຈຸດສຳຄັນ **#1** ແມ່ນຢູ່ຫລັງຈາກຕົວຢ່າງໂລດ.

ຕົວຢ່າງ:

ຕົວຢ່າງ **#1:**

**Sally** ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້.ລາວ ຮ້ອງໃຫ້ແລະນ້ຳຕາຍ້ອຍ ທຸກໆວັນ.ລາວ ມີເງື່ອນໄຂໄດ້ຮັບ ສຳລັບກຸ່ມອາຣົມແລະການປະພຶດພາຍໃຕ້ແບບວິທີ **#1**.ສະພາບຂອງ **Sally** ສຳລັບການປະພຶດອັນນີ້ແມ່ນ ປັດຈຸບັນ.ຣະຍະເວລາຫ່າງກັນ ທີ່ **Sally** ຮ້ອງໃຫ້ແລະນ້ຳຕາຍ້ອຍແມ່ນ 4 ມື້ຫລືຫລາຍມື້ກວ່າຕໍ່ອາທິດ.
ການດັດແປງໄດ້ແລະການເຂົ້າແຊກແຊງບໍ່ຖືກພິຈາຣະນາເບິ່ງ-ມັນບໍ່ກ່ຽວຂ້ອງນຳ. **Sally**
ສອດຄ່ອງນຳກົດຣະບຽບສອງຢ່າງສຳລັບການມີເງື່ອນໄຂ.ຈົ່ງເບິ່ງຂໍ້ຄວາມຕັດອອກມາຈາກຈຸດສຳຄັນ
ຂ້າງລຸ່ມນີ້.ຂໍ້ຄວາມຕັດອອກມາອັນນີ້ບອກທ່ານວ່າ ການຮ້ອງໃຫ້ແລະການນ້ຳຕາຫລັ່ງໄຫລອອກມາ ຕ້ອງເປັນການປະພຶດປັດຈຸບັນ ທີ່ເກີດຂຶ້ນຢ່າງຫນ້ອຍ 4 ມື້ຫລືຫລາຍກວ່າຕໍ່ອາທິດ ຈະເປັນການປະພຶດທີ່ມີເງື່ອນໄຂແບບທີ **#1**.

| ອາຣົມຫລືການປະພຶດ | ສະພາບ | ຣະຍະເວລາຫ່າງກັນ | ການດັດແປງໄດ້ | ການເຂົ້າແຊກແຊງນຳ |
|---|---|---|---|---|
| ການຮ້ອງໃຫ້;ນ້ຳຕາຫລັ່ງໄຫລ | ມີຢູ່ປັດຈຸບັນ | 4 ຫລືຫລາຍມື້ກວ່າຕໍ່ອາທິດ | ບໍ່ກ່ຽວ | ບໍ່ກ່ຽວ |

ຕົວຢ່າງ **#2:**

**Bob** ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້.**Bob** ອອກໄປຫນ້າຣະບຽງຂອງລາວແລະແກ້ເຄື່ອງຂອງລາວອອກ (ແກ້ຜ້າອອກຢູ່ຕາມສາທາຣະນະ) .ອັນນີ້ໄດ້ເກີດຂຶ້ນຢ່າງຫນ້ອຍ ເທື່ອນຶ່ງໃນ 7 ວັນ ກ່ອນການຕີຣາຄາປະເມີນຜົນ.ມັນ ບໍ່ແມ່ນງ່າຍໆ ສຳລັບຜູ້ເບິ່ງແຍງດູແລຂອງລາວທີ່ຈະຄວບຄຸມການປະພຶດອັນນີ້.ລາວ ມີເງື່ອນໄຂໄດ້ຮັບ ກຸ່ມອາຣົມແລະການປະພຶດພາຍໃຕ້ແບບວິທີ **#1.**
ສະພາບຂອງ **Bob** ສຳລັບການປະພຶດອັນນີ້ແມ່ນ ປັດຈຸບັນ.ການປະພຶດຂອງ **Bob** ແມ່ນ ຖືກດັດແປງບໍ່ໄດ້ງ່າຍໆ. ຣະຍະເວລາ

ແລະການເຂົ້າແຊກແຊງນຳບໍ່ໄດ້ຖືກພິຈາຣະນາເບິ່ງ-ມັນບໍ່ກ່ຽວຂ້ອງນຳ. Bob ສອດຄ່ອງນຳກົດກຳນົດສອງຢ່າງເພື່ອຈະມີເງື່ອນໄຂ.

| ອາຣົມຫລືການປະພຶດ | ສະພາບ | ຣະຍະເວລາຫ່າງກັນ | ການດັດແປງໄດ້ | ການເຂົ້າແຊກແຊງນຳ |
|---|---|---|---|---|
| ການແກ້ຜ້າຢູ່ຕໍ່ຫນ້າສາທາຣະນະຊົນ | ປັດຈຸບັນ | ບໍ່ກ່ຽວ | ດັດແປງບໍ່ໄດ້ຢ່າງງ່າຍໆ | ບໍ່ກ່ຽວ |

## ຕົວຢ່າງ **#3:**

Sam ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້.ລາວ ເຄີຍທຸບຫລືແກວ່ງສິ່ງຂອງ.ລາວ ບໍ່ໄດ້ທັກຫລືແກວ່ງສິ່ງຂອງແນວໃດໃນ 7 ວັນ ກ່ອນການຕີຣາຄາປະເມີນຜົນ.ລາວ
ບໍ່ມີອາຣົມຫລືການປະພຶດແນວອື່ນແນວໃດແນວນຶ່ງທີ່ຖືກບົ່ງຢູ່ໃນຕາຕະລາງຂ້າງລຸ່ມ.Sam ບໍ່ມີເງື່ອນໄຂໄດ້ຮັບ <u>ຕໍ່ໄປອີກແລ້ວ</u> ສຳລັບກຸ່ມອາຣົມແລະການປະພຶດພາຍໄຕ້ແບບວິທີ **#1.**ສະພາບຂອງ Sam ສຳລັບການປະພຶດອັນນີ້ແມ່ນ
ບໍ່ແມ່ນປັດຈຸບັນຕໍ່ໄປອີກແລ້ວ.ລາວບໍ່ສອດຄ່ອງນຳກົດກຳນົດສຳລັບການມີເງື່ອນໄຂ.

| ອາຣົມຫລືການປະພຶດ | ສະພາບ | ຣະຍະເວລາຫ່າງກັນ | ການດັດແປງໄດ້ | ການເຂົ້າແຊກແຊງນຳ |
|---|---|---|---|---|
| ທຸບ/ແກວ່ງສິ່ງຂອງ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |

## ຕົວຢ່າງ **#4:**

John ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້. John ເຄີຍກິນສິ່ງທີ່ກິນບໍ່ໄດ້.ລາວ ບໍ່ໄດ້ເຮັດແນວນີ້ມາກວ່າ 3 ປີຫນ້ອຍນຶ່ງແລ້ວ.
ຜູ້ເບິ່ງແຍງດູແລຂອງລາວເຕືອນໃຈລາວບໍ່ໃຫ້ເຮັດແນວນີ້ແລະເຮັດໃຫ້ແນ່ໃຈວ່າສິ່ງທີ່ກິນບໍ່ໄດ້ທີ່ລາວເຄີຍກິນໄດ້ຖືກເກັບຮັກສາໄວ້ໃນບ່ອນທີ່ເຂົ້າເຖິງບໍ່ໄດ້ສຳລັບ John. ລາວບໍ່ມີການປະພຶດດ້ານອາຣົມຫລືການປະພຶດແນວອື່ນແນວໃດທີ່ຖືກບົ່ງຢູ່ໃນຕາຕະລາງຂ້າງລຸ່ມນີ້.ສະພາບຂອງ John ສຳລັບການປະພຶດອັນນີ້ແມ່ນ ຢູ່ໃນອະດີດຜ່ານມາ. ການປະພຶດອັນນີ້ໄດ້ຖືກແກ້ໄກດ້ວຍການເຂົ້າແຊກແຊງນຳປັດຈຸບັນ. John <u>ມີເງື່ອນໄຂໄດ້ຮັບ</u> ສຳລັບກຸ່ມອາຣົມແລະການປະພຶດພາຍໄຕ້ແບບວິທີ **#1.**

| ອາຣົມຫລືການປະພຶດ | ສະພາບ | ຣະຍະເວລາຫ່າງກັນ | ການດັດແປງໄດ້ | ການເຂົ້າແຊກແຊງນຳ |
|---|---|---|---|---|
| ກິນສິ່ງທີ່ກິນບໍ່ໄດ້ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂຶ້ນມາ ພ້ອມທັງການ ເຂົ້າແຊກແຊງ ປັດຈຸບັນ |

## ຈຸດສຳຄັນຂອງອາລົມແລະການປະພຶດ**#1**

| ອາລົມແລະການປະພຶດ | ສະພາບ | ຣະຍະຫ່າງກັນ | ການດັດແປງໄດ້ | ການເວົ້າແຊກແຊງນຳ |
|---|---|---|---|---|
| ເປັນການຈິນຕະທຳຮ້າຍ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຂັດຂືນຕໍ່ສູ້ໃນຣະຫວ່າງການເບິ່ງແຍງດູແລສ່ວນຕົວ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຂັດຂືນຕໍ່ສູ້ໃນຣະຫວ່າງການເບິ່ງແຍງດູແລສ່ວນຕົວ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເໜີຂຶ້ນມາ ພ້ອມທັງການ ເວົ້າແຊກແຊງ ປັດຈຸບັນ |
| ການຮ້ອງໃຫ້;ນ້ຳຕາຫລັ່ງໄຫລ | ປັດຈຸບັນ | 4 ຫລືຫລາຍມື້ກວ່າຕໍ່ອາທິດ | ບໍ່ກ່ຽວ | ບໍ່ກ່ຽວ |
| ການຫລົງເຊື່ອຜິດ:ການຫລົງເຊື່ອຜິດແມ່ນຕາຍໂຕ,ຄວາມເຊື່ອຜິດພາດ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເໜີຂຶ້ນມາ ພ້ອມທັງການ ເວົ້າແຊກແຊງ ປັດຈຸບັນ |
| ຄະແນນຂອງຄວາມອຸກໃຈ 14 ຫລືຫລາຍກວ່າ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ການແກ້ຜ້າຢູ່ຕໍ່ຫນ້າສາທາຣະນະຊົນ | ປັດຈຸບັນ | ບໍ່ກ່ຽວ | ດັດແປງບໍ່ໄດ້ຢ່າງງ່າຍໆ | ບໍ່ກ່ຽວ |
| ລຳຄານ/ໃຈຮ້າຍໄດ້ງ່າຍໆ | ປັດຈຸບັນ | ບໍ່ກ່ຽວ | ດັດແປງບໍ່ໄດ້ຢ່າງງ່າຍໆ | ບໍ່ກ່ຽວ |
| ກິນສິ່ງທີ່ກິນບໍ່ໄດ້ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ກິນສິ່ງທີ່ກິນບໍ່ໄດ້ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເໜີຂຶ້ນມາ ພ້ອມທັງການ ເວົ້າແຊກແຊງ ປັດຈຸບັນ |
| ການລະເມີເພີ້ຝັນ:ການລະເມີເພີ້ຝັນແມ່ນປະສົບປະການທັງດ້ານຄວາມຮູ້ສຶກທີ່ບໍ່ສາມາດພິສູດໄດ້ໂດຍຄົນໃດຄົນນຶ່ງ. | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |

| | | | | |
|---|---|---|---|---|
| ການຊຸກເຊື່ອງສິ່ງຂອງ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງປັດຈຸບັນ |
| ການສະສົມໄວ້/ການເກັບເອົາໄວ້ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງປັດຈຸບັນ |
| ການຮັກສາໂຣກຈິດ/ໂຄງການ | ການບຳບັດຫລືໂຄງການແມ່ນຕ້ອງການ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຄຳຮ້ອງທຸກ/ຄຳຖາມຊ້ຳແລ້ວຊ້ຳອີກ | ປັດຈຸບັນ | ເກີດຂື້ນແຕ່ລະວັນ | ບໍ່ກ່ຽວ | ບໍ່ກ່ຽວ |
| ຄວາມຫ່ວງໄຍ/ຄຳຖາມທີ່ຫລຳຄືນ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງປັດຈຸບັນ |
| ການເຫນັງຕີງ/ການຍ່າງໄປຍ່າງມາທີ່ຫລຳຄືນ | ປັດຈຸບັນ | ເກີດຂື້ນແຕ່ລະວັນ | ບໍ່ກ່ຽວ | ບໍ່ກ່ຽວ |
| ຂັດຂືນຕໍ່ການເບິ່ງແຍງດູແລ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຂັດຂືນຕໍ່ການເບິ່ງແຍງດູແລ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງປັດຈຸບັນ |
| ການສະແດງອອກມາທາງເພດ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ການສະແດງອອກມາທາງເພດ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງປັດຈຸບັນ |
| ການຖົ່ມນ້ຳລາຍ | ປັດຈຸບັນ | ບໍ່ກ່ຽວ | ດັດແປງບໍ່ໄດ້ຢ່າງງ່າຍໆ | ບໍ່ກ່ຽວ |
| ການຖົ່ມນ້ຳລາຍ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງປັດຈຸບັນ |
| ທຸບ/ແກວ່ງສິ່ງຂອງ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |

| | | | | |
|---|---|---|---|---|
| ການສູບຢາທີ່ບໍ່ປອດພັຍ | ປັດຈຸບັນ | ບໍ່ກ່ຽວ | ດັດແປງບໍ່ໄດ້ຢ່າງງ່າຍໆ | ບໍ່ກ່ຽວ |
| ຕື່ນຂື້ນຫມົດຄືນແລະຕ້ອງການການແຊກແຊງນຳ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຍ່າງໄປຍ່າງມາແລະຊອກຫາທາງອອກ:ຍ້າຍທີ່ໂດຍບໍ່ມີຈຸດປະສົງແຈ່ມແຈ້ງແລະພະຍາຍາມທີ່ຈະອອກຈາກບ່ອນຢູ່ຫລືສະຖານທີ່ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຍ່າງໄປຍ່າງມາແລະຊອກຫາທາງອອກ:ຍ້າຍທີ່ໂດຍບໍ່ມີຈຸດປະສົງແຈ່ມແຈ້ງແລະພະຍາຍາມທີ່ຈະອອກຈາກບ່ອນຢູ່ຫລືສະຖານທີ່ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເຂົ້າແຊກແຊງປັດຈຸບັນ |
| ຍ່າງໄປຍ່າງມາແລະຊອກຫາທາງອອກ:ຍ້າຍທີ່ໂດຍບໍ່ມີຈຸດປະສົງແຈ່ມແຈ້ງ,ແຕ່ວ່າບໍ່ພະຍາຍາມທີ່ຈະອອກຈາກບ່ອນຢູ່ຫລືສະຖານທີ່ | ປັດຈຸບັນ | ບໍ່ກ່ຽວ | ບໍ່ກ່ຽວ | ບໍ່ກ່ຽວ |
| ຍ່າງໄປຍ່າງມາແລະຊອກຫາທາງອອກ:ຍ້າຍທີ່ໂດຍບໍ່ມີຈຸດປະສົງແຈ່ມແຈ້ງ,ແຕ່ວ່າບໍ່ພະຍາຍາມທີ່ຈະອອກຈາກບ່ອນຢູ່ຫລືສະຖານທີ່ | ຢູ່ໃນຜ່ານມາ | ບໍ່ກ່ຽວ | ບໍ່ກ່ຽວ | ຖືກສະເນີຂື້ນມາພ້ອມທັງການເຂົ້າແຊກແຊງປັດຈຸບັນ |
| ການຮ້ອງໃສ່/ການຮ້ອງຂື້ນ | ປັດຈຸບັນ | ເກີດຂື້ນ 4 ຫລືຫລາຍມື້ຕໍ່ອາທິດ | ບໍ່ກ່ຽວ | ບໍ່ກ່ຽວ |

## ການມີເງື່ອນໄຂພາຍໃຕ້ແບບວິທີ#2

ການປະພຶດທີ່ມີເງື່ອນໄຂມີຢູ່ຫ້າຂະແນງສຳລັບວິທີການ #2. ການປະພຶດແຕ່ລະຢ່າງໄດ້ຖືກບົ່ງຢູ່ໃນຈຸດສຳຄັນ #2. ເພື່ອຈະມີເງື່ອນໄຂພາຍໃຕ້ວິທີການ #2, ທ່ານຕ້ອງມີຄະແນນການປະພຶດ (BPS) ຫລາຍກວ່າ 1, ຄະແນນ CPS 3 ຫລືຫລາຍກວ່າ, ແລະຄະແນນ ADL 2 ຫລືຫລາຍກວ່າ.ຈຸດສຳຄັນ #2 ຍັງຊ່ວຍເຫລືອທ່ານໃຫ້ເຂົ້າໃຈ BPSຂອງທ່ານ.ຈຸດສຳຄັນ #2 ແມ່ນຢູ່ຫລັງຈາກຕົວຢ່າງໂລດ.

ຈຳພວກແຕ່ລະຢ່າງມີຈຳນວນ ສູງສຸດ ຂອງຄະແນນຂອງການປະພຶດ.ຈຳນວນສູງສຸດຂອງຄະແນນຂອງການປະພຶດສຳລັບ:

- ຂະແນງ ນຶ່ງ ແມ່ນ 2 ຄະແນນ
- ຂະແນງ ສອງ ແມ່ນ 3 ຄະແນນ
- ຂະແນງ ສາມ ແມ່ນ 4 ຄະແນນ
- ຂະແນງ ສີ່ ແມ່ນ 10 ຄະແນນ
- ຂະແນງ ຫ້າ ແມ່ນ 12 ຄະແນນ

ຊີ້ບອກການປະພຶດແຕ່ລະຢ່າງເພື່ອຈະພິຈາຣະນາເບິ່ງວ່າມັນເປັນການພະພຶດປັດຈຸບັນ ຫລືການປະພຶດ ຜ່ານມາ. ຖ້າຫາກວ່າມັນເປັນການປະພຶດປັດຈຸບັນ,ເພື່ອຈະເບິ່ງວ່າມັນເກີດຂຶ້ນ 1-3 ມື້ຕໍ່ອາທິດ, 4-6 ມື້ຕໍ່ອາທິດ,ຫລື ທຸກໆມື້ບໍ່.ຄະແນນນ້ຳຫນັກສຳລັບການປະພຶດປັດຈຸບັນແມ່ນ:

- 1-3 ເທື່ອຕໍ່ອາທິດ: .5
- 4-6 ເທື່ອຕໍ່ອາທິດ: .75
- ປະຈຳວັນ: 1

ຄະແນນນ້ຳຫນັກສຳລັບການປະພຶດຜ່ານມາແມ່ນ:

- ຜ່ານມາໂດຍບໍ່ມີການເຂົ້າແຊກແຊງ: .25
- ຜ່ານມາພ້ອມທັງການເຂົ້າແຊກແຊງ: .25

ຕໍ່ມາໃຫ້ພິຈາຣະນາເບິ່ງວ່າການປະພຶດຈະ ດັດແປງໄດ້ງ່າຍໆ ຫລື ດັດແປງບໍ່ໄດ້ງ່າຍໆ.ການດັດແປງໄດ້ຂອງການປະພຶດແລະຂະແນງຂອງການປະພຶດຊີ້ບອກຄະແນນຂອງຄຸນຄ່າ.ຄະແນນຂອງຄຸນຄ່າສຳລັບການປະພຶດແມ່ນ:

ຂະແນງ 1 ການປະພຶດ:

- ຖືກຕ້ອງໃນປັດຈຸບັນຫລືຜ່ານມາແລະດັດແປງບໍ່ໄດ້ງ່າຍໆ:.5
- ຖືກຕ້ອງໃນປັດຈຸບັນແລະດັດແປງບໍ່ໄດ້ງ່າຍໆ: 1

ຂະແນງ 2 ການປະພຶດ:

- ຖືກຕ້ອງໃນປັດຈຸບັນຫລືຜ່ານມາແລະດັດແປງບໍ່ໄດ້ງ່າຍໆ: 1
- ມີຢູ່ປັດຈຸບັນແລະບໍ່ສາມາດຖືກດັດແປງໄດ້ງ່າຍໆ: 2

ຂະແນງ 3 ການປະພຶດ:

- ຖືກຕ້ອງໃນປັດຈຸບັນຫລືຜ່ານມາແລະດັດແປງບໍ່ໄດ້ງ່າຍໆ: 2
- ມີຢູ່ປັດຈຸບັນແລະບໍ່ສາມາດຖືກດັດແປງໄດ້ງ່າຍໆ: 3

ຂະແນງ 4 ການປະພຶດ:

- ຖືກຕ້ອງໃນປັດຈຸບັນຫລືຜ່ານມາແລະດັດແປງບໍ່ໄດ້ງ່າຍໆ: 4
- ມີຢູ່ປັດຈຸບັນແລະບໍ່ສາມາດຖືກດັດແປງໄດ້ງ່າຍໆ: 5

ຂະແນງ 5 ການປະພຶດ:

- ຖືກຕ້ອງໃນປັດຈຸບັນຫລືຜ່ານມາແລະດັດແປງບໍ່ໄດ້ງ່າຍໆ: 5
- ມີຢູ່ປັດຈຸບັນແລະບໍ່ສາມາດຖືກດັດແປງໄດ້ງ່າຍໆ: 6

ຄະແນນນ້ຳຫນັກຄູນໃຫ້ຄະແນນຄຸນຄ່າ=ຄະແນນ BPS ສຳລັບການປະພຶດ.

**ຕົວຢ່າງ:**

**ຕົວຢ່າງ #1:**

Tom ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້.ລາວ ເຊື່ອງສິ່ງຂອງ (ການປະພຶດຂະແນງ 1) ແລະບໍ່ປອດພັຍໃນເວລາລາວເຣັດກິນ (ການເຣັດກິນທີ່ບໍ່ປອດພັຍ:ຂະແນງ 3) .ລາວຍັງ ຍ່າງວົນວຽນໄປມາແລະຊອກຫາທາງອອກ (ຂະແນງ 4) .ການປະພຶດເຫລົ່ານີ້ທັງສາມຢ່າງແມ່ນ ປັດຈຸບັນ. ມັນເກີດຂື້ນທຸກໆວັນ.ຜູ້ເບິ່ງແຍງດູແລຂອງລາວ ບໍ່ສາມາດດັດແປງໄດ້ງ່າຍໆ ສຳລັບການເຊື່ອງສິ່ງຂອງ. ການເຣັດກິນທີ່ບໍ່ປອດພັຍແລະການຍ່າງວົນວຽນໄປມາແລະຊອກຫາທາງອອກຂອງ Tom ສາມາດ ຖືກດັດແປງໄດ້ງ່າຍໆ.ຄະແນນການປະພຶດ(BPS) ຂອງລາວສຳລັບການເຊື່ອງສິ່ງຂອງແມ່ນ 1. BPS ຂອງລາວສຳລັບການເຣັດກິນທີ່ບໍ່ປອດພັຍແມ່ນ 2. BPS ຂອງລາວສຳລັບການ ຍ່າງວົນວຽນໄປມາແລະຊອກຫາທາງອອກແມ່ນ 4. BPS ທັງຫມົດຂອງລາວແມ່ນ 7.

ຄະແນນ ADL ຂອງ Tom ແມ່ນ 8 ແລະຄະແນນ CPS ຂອງລາວແມ່ນ 3. ລາວ ສອດຄ່ອງ ນຳກົດເກນສຳລັບກຸ່ມອາຣົມ ແລະການປະພຶດ.

ຕາຕະລາງຂອງຕົວຢ່າງ **#1:**

| ການປະພຶດປັດຈຸບັນ | ສະພາບ/ຣະຍະຫ່າງກັນ/ການດັດແປງໄດ້ | ນ້ຳຫນັກ | ຄຸນຄ່າ | BPS |
|---|---|---|---|---|
| ການຂຸກເຂື່ອງສິ່ງຂອງ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 1 | 1 x 1= 1 |
| ການຄິວກິນທີ່ບໍ່ປອດພັຍ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ດັດແປງບໍ່ໄດ້ງ່າຍໆ | 1 | 2 | 1 x 2 = 2 |
| ຍ່າງວິນວຽນໄປມາ/ຊອກ ຫາທາງອອກ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ດັດແປງບໍ່ໄດ້ງ່າຍໆ | 1 | 4 | 1 x 4 = 4 |

ຄະແນນ BPS ທັງຫມົດ = 7

ຕົວຢ່າງ **#2:**

Jane ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້. Jane ຍ່າງວິນວຽນໄປມາແລະຊອກຫາທາງອອກ (ຂະແນງ 4). ລາວເຮັດແນວນີ້ 4-6 ເທື່ອຕໍ່ອາທິດ.ການປະພຶດອັນນີ້ແມ່ນຖືກດັດແປງບໍ່ໄດ້ງ່າຍໆ. Jane ເຄີຍ ທຸບສິ່ງຂອງໃຫ້ແຕກ (ຂະແນງ 4),ແຕ່ວ່າລາວບໍ່ໄດ້ເຮັດອັນນີ້ 2
ປີແລ້ວຍ້ອນວ່າຜູ້ເບິ່ງແຍງດູແລຂອງລາວຄວບຄຸມການປະພຶດອັນນີ້ດ້ວຍການເຂົ້າແຊກແຊງປັດຈຸບັນ. ການປະພຶດອັນນີ້ແມ່ນ ການປະພຶດຜ່ານມາ ດ້ວຍ ການເຂົ້າແຊກແຊງ. Jane ເປັນ ຈູ່ໂຈມຕໍ່ສູ້ ເມື່ອເວລາຜູ້ເບິ່ງແຍງດູແລຂອງລາວຕ້ອງ ໄດ້ອາບນ້ຳໃຫ້ລາວ (ຂະແນງ 5).ອັນນີ້ເກີດຂື້ນອາທິດນຶ່ງເທື່ອນຶ່ງແລະ ຖືກດັດແປງບໍ່ໄດ້ງ່າຍໆ. BPS ຂອງ Jane ແມ່ນ 8.

ຄະແນນ ADL ຂອງ Jane ແມ່ນ 9 ແລະຄະແນນ CPS ແມ່ນ 3. ລາວສອດຄ່ອງນຳກົດເກນສຳລັບກຸ່ມອາຣົມແລະ ການປະພຶດ.

ຕົວຢ່າງ **#2** ຕາຕະລາງ**:**

| ການປະພຶດປັດຈຸບັນ | ສະພາບ/ຣະຍະຫ່າງກັນ/ການດັດແປງໄດ້ | ນ້ຳຫນັກ | ຄຸນຄ່າ | BPS |
|---|---|---|---|---|
| ຍ່າງວິນວຽນໄປມາ/ ຊອກຫາທາງອອກ | ຖືກຕ້ອງໃນປັດຈຸບັນ /4-6 ມື້ຕໍ່ອາທິດ/ບໍ່ດັດແປງບໍ່ໄດ້ງ່າຍໆ | .75 | 5 | .75 x 5 = 3.75 |
| ຂັດຂືນຕໍ່ສູ້ໃນຣະຫວ່າງ ການເບິ່ງແຍງດູແລ | ຖືກຕ້ອງໃນປັດຈຸບັນ /1-3 ມື້ຕໍ່ອາທິດ/ບໍ່ດັດແປງບໍ່ໄດ້ງ່າຍໆ | .5 | 6 | .5 x 6 = 3 |

ການປະພຶດປັດຈຸບັນ BPS = 6.75

| ການປະພຶດໃນຜ່ານມາ | ສະພາບ/ຣະຍະຫ່າງກັນ/ການດັດແປງໄດ້ | ນ້ຳຫນັກ | ຄູນຄ່າ | BPS |
|---|---|---|---|---|
| ທຸບ/ແກວ່ງສິ່ງຂອງ | ແມ່ນ | .25 | 5 | .25 x 5 = 1.25 |

ການປະພຶດໃນຜ່ານມາ BPS = 1.25

ຄະແນນ BPS ທັງຫມົດ= 8 (6.75 + 1.25)

ຕົວຢ່າງ **#3:**

Bert ໄດ້ຖືກຕີຣາຄາປະເມີນຜົນເບິ່ງມື້ນີ້.Bert ຮ້ອງໃຫ້ແລະນ∂ຕາໄຫລ (ຂະແນງ1) ໃນແບບ ປະຈຳວັນ. ການປະພຶດອັນນີ້ບໍ່ຖືກດັດແປງໄດ້ງ່າຍໆ.ລາວ ຄອບງຳກ່ຽວກັບສຸຂະພາບຂອງລາວອີກຄືກັນ (ຂະແນງ1) ໃນແບບ ປະຈຳວັນ.ການຮ້ອງໃຫ້ຂອງລາວ,ການປະພຶດອັນນີ້ບໍ່ຖືກດັດແປງໄດ້ງ່າຍໆ. Bert ງຸນງົງແລະ ເລື່ອນລອຍ (ຂະແນງ1) ໃບແບບປະຈຳວັນ.ການປະພຶດອັນນີ້ບໍ່ຖືກດັດແປງໄດ້ງ່າຍໆ. ລາວ ກ່າວຫາຄົນອື່ນວ່າຂີ້ລັກຂອງ (ຂະແນງ2) .ລາວເຮັດອັນນີ້ໃນແບບປະຈຳວັນ.ການປະພຶດອັນນີ້ຖືກດັດແປງບໍ່ໄດ້ງ່າຍໆ. BPS ຂອງ Bert ແມ່ນ 4.

ຄະແນນ ADL ຂອງ Bert ແມ່ນ 11ແລະ ຄະແນນ CPS ຂອງລາວແມ່ນ 3 . 11ລາວສອດຄ່ອງນຳກົດເກນສຳລັບກຸ່ມອາຣົມແລະການປະພຶດ.

ຕົວຢ່າງ **#3** ຕາຕະລາງ:

| ການປະພຶດ | ສະພາບ/ຣະຍະຫ່າງກັນ/ການດັດແປງໄດ້ | ນ້ຳຫນັກ | ຄູນຄ່າ | BPS |
|---|---|---|---|---|
| ຮ້ອງໃຫ້/ນ້ຳຕາໄຫລ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 1 | 1 x 1 = 1 |
| ເປັນຫ່ວງຫລາຍກ່ຽວກັບສຸຂະພາບຫລືການທຳງານຂອງຮ່າງກາຍ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 1 | 1 x 1 = 1 |
| ການເຫນັງຕຶງ/ການຍ່າງໄປຍ່າງມາທີ່ຫລຳຄືນ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 1 | 1 x 1 = 1 |
| ຖິ້ມໂທດໃສ່ຄົນອື່ນວ່າຂະໂມຍ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 2 | 1 x 2 = 2 |

ຄະແນນ BPS ທັງຫມົດ = 4

BPS ຂອງ Bert ມີແຕ່ 4 ເທົ່ານັ້ນຍ້ອນວ່າການປະພຶດ 3 ຢ່າງທຳອິດແມ່ນການປະພຶດຂະແນງນຶ່ງ.ຈຳນວນຄະແນນສູງສຸດທີ່ Bert ສາມາດໄດ້ຮັບຈາກການປະພຶດຂະແນງນຶ່ງແມ່ນ 2. ເພາະສະນັ້ນ,ເຖິງແມ່ນວ່າຄະແນນທັງຫມົດສຳລັບການປະພຶດ 3 ຢ່າງທຳອິດແມ່ນ 3, ຄະແນນຫລາຍທີ່ສຸດທີ່ Bert ສາມາດໄດ້ຮັບຈາກການປະພຶດ3 ຢ່າງທຳອິດແມ່ນ 2. ນຳສຳລັບຄຳເຕືອນກ່ຽວກັບຈຳນວນຂອງຄະແນນສູງສຸດທີ່ຖືກອະນຸຍາດໃຫ້ໄດ້ຕາມຂະແນງ.ຈຸດສຳຄັນບອກທ່ານກ່ຽວກັບຈຳນວນຂອງຄະແນນສູງສຸດທີ່ສາມາດຖືກເອົາໃຫ້ໄດ້ສຳລັບແຕ່ລະຂະແນງຂອງການປະພຶດແລະອະທິບາຍວ່າການປະພຶດແນວໃດແມ່ນຢູ່ໃນແຕ່ລະກໍຣະນີ.

ເມື່ອບວກຄະແນນ BPS ທັງຫມົດຂອງລາວເຂົ້າໃສ່ກັນ,ບວກສູງສຸດສຳລັບການປະພຶດຂະແນງນຶ່ງຊຶ່ງແມ່ນ 2 ໃສ່ຄະແນນແນວອື່ນຂອງລາວສຳລັບການກ່າວຫາຄົນອື່ນວ່າຂີ້ລັກຊຶ່ງແມ່ນ 2. ອັນນີ້ອອກມາເປັນ 4.

**ຕົວຢ່າງ #4:**

Connie ໄດ້ຖືກຕີຣາຄາປະເມີນຜົນເບິ່ງໃນມື້ນີ້. Connie ເຮັດ ສຽງເວົ້າອອກມາທີ່ບໍ່ເຫມາະສົມ (ຂະແນງ 1) ໃນແບບປະຈຳວັນ. ການປະພຶດອັນນີ້ແມ່ນ ຖືກດັດແປງບໍ່ໄດ້ງ່າຍໆ. Connie ຍັງມີ ຄຳຖາມຊ້ຳຄືນ (ຂະແນງ 2) ສຳລັບຜູ້ເບິ່ງແຍງດູແລຂອງລາວໃນແບບ ປະຈຳວັນ, ການປະພຶດອັນນີ້ແມ່ນ ຖືກດັດແປງບໍ່ໄດ້ງ່າຍໆ. Connie ປ້ອຍດ່າທາງປາກເປົ່າ (ຂະແນງ 2) ໃນແບບ ປະຈຳວັນ, ແຕ່ວ່າການປະພຶດອັນນີ້ແມ່ນຖືກດັດແປງໄດ້ງ່າຍໆ. Connie ບາງເທື່ອ ຖົ່ມນ້ຳລາຍ (ຂະແນງ 2) ໃສ່ຜູ້ເບິ່ງແຍງດູແລຂອງລາວ.ອັນນີ້ເກີດຂຶ້ນ1-3 ເທື່ອຕໍ່ອາທິດ.ການປະພຶດອັນນີ້ແມ່ນ ຖືກດັດແປງບໍ່ໄດ້ງ່າຍໆ.Connie ເຄີຍ ແກ້ຜ້າອອກກາງສາທາຣະນະຊົນ (ຂະແນງ 3) ,ແຕ່ວ່າລາວບໍ່ໄດ້ເຮັດອັນນີ້ຫລາຍກວ່າປີນຶ່ງແລ້ວ. ຜູ້ເບິ່ງແຍງດູແລຂອງລາວເຕືອນ Connie ບໍ່ໃຫ້ແກ້ຜ້າລາວອອກບໍ່ວ່າເວລາໃດທີ່ Connie ອອກໄປນອກ.ການປະພຶດອັນນີ້ໄດ້ຖືກຄວບຄຸມນຳດ້ວຍການເຂົ້າແຊກແຊງ. Connie ເຄີຍ ເປັນຈູ່ໂຈມຕີ (ຂະແນງ 4) ໃສ່ຫມູ່ຢູ່ນຳກັນຂອງລາວ.ລາວບໍ່ໄດ້ຈູ່ໂຈມຕີກາຍສອງປີແລ້ວ.ຜູ້ເບິ່ງແຍງດູແລຂອງລາວຈື່ໄດ້ວ່າແມ່ນຫຍັງເລີ້ມຕົ້ນການປະພຶດຈູ່ໂຈມຕີຂອງ Connie ແລະສາມາດທີ່ຈະເຮັດໃຫ້ລາວໃຈເຢັນລົງຫລືເອົາລາວອອກຈາກສະພາບແວດລ້ອມເລີ້ມຕົ້ນ.ການປະພຶດອັນນີ້ດຽວນີ້ໄດ້ ຖືກຄວບຄຸມນຳດ້ວຍການເຂົ້າແຊກແຊງ. BPS ຂອງ Connie ແມ່ນ 5.5.

ຄະແນນ ADL ຂອງ Connie ແມ່ນ 13 ແລະຄະແນນ CPS ແມ່ນ 4. ລາວສອດຄ່ອງນຳກົດເກນສຳລັບກຸ່ມອາຣົມແລະການປະພຶດ.

ຕົວຢ່າງ **#4** ຕາຕະລາງ:

| ການປະພຶດປັດຈຸບັນ | ສະພາບ/ຣະຍະຫ່າງກັນ/ການດັດແປງໄດ້ | ນ້ຳໜັກ | ຄຸນຄ່າ | BPS |
|---|---|---|---|---|
| ສຽງເວົ້າທີ່ບໍ່ເໝາະສົມ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 1 | 1 x 1 = 1 |
| ຄວາມຫ່ວງໄຍ/ຄຳຖາມທີ່ຫລໍາຄືນ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ບໍ່ດັດແປງບໍ່ໄດ້ງ່າຍໆ | 1 | 2 | 1 x 2 = 2 |
| ອິ່ມຫ້ັງທາງປາກເປົ່າ | ຖືກຕ້ອງໃນປັດຈຸບັນ/ປະຈຳວັນ/ດັດແປງບໍ່ໄດ້ງ່າຍໆ | 1 | 1 | 1 x 1 = 1 |
| ການຖົ່ມນ້ຳລາຍ | ຖືກຕ້ອງໃນປັດຈຸບັນ /1-3 ມື້ຕໍ່ອາທິດ/ບໍ່ດັດແປງບໍ່ໄດ້ງ່າຍໆ | .5 | 2 | .5 x 2 = 1 |

ການປະພຶດປັດຈຸບັນ BPS = 4

| ການປະພຶດຜ່ານມາ | ຖືກສະເນີຂື້ນມາພ້ອມທັງການເວົ້າແຊກແຊງ | ນ້ຳໜັກ | ຄຸນຄ່າ | BPS |
|---|---|---|---|---|
| ການແກ້ຜ້າຢູ່ຕໍ່ໜ້າສາທາຣະນະຊົນ | ແມ່ນ | .25 | 2 | .25 x 2 = .5 |
| ເປັນການຈົມຕີທຳຮ້າຍ | ແມ່ນ | .25 | 4 | .25 x 4 = 1 |

ການປະພຶດໃນຜ່ານມາ BPS = 1.5

ຄະແນນ BPS ທັງໝົດ = 5.5 (4 + 1.5)

BPS ທັງໝົດຂອງ Connie ແມ່ນ 5.5 ແທນທີ່ວ່າຈະແມ່ນ 6.5 ຍ້ອນວ່າການປະພຶດອັນທີສອງ,ສາມ,ແລະສີ່ແມ່ນການປະພຶດຂະແນງສອງ.ມັນມີໜວກ 3-ຄະແນນໃສ່ຈຳນວນຄະແນນສູງສຸດສຳລັບຂະແນງສອງ.

## ຈຸດສຳຄັນຂອງອາຣົມແລະການປະພຶດ#2

| ອາຣົມແລະການປະພຶດ | ການປະພຶດປັດຈຸບັນຫລືຜ່ານມາ | | | |
|---|---|---|---|---|
| | ນ້ຳຫນັກ | | ຄຸນຄ່າ | ທັງຫມົດ |
| ຂະແນງ ນຶ່ງ | | | | |
| ການຮ້ອງໄຫ້ແລະການນ້ຳຕາໄຫລ | **Past w/Intervention = .25<br>1-3 days per week = .5<br>4-6 days per week = .75<br>Daily = 1** | **X** | **Past-w/intervention = .5<br>Easily Altered = .5<br>Not Easily Altered = 1** | Total of Weight x Value |
| ລຳຄານ/ໃຈຮ້າຍໄດ້ງ່າຍໆ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | **X** | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ເປັນຫ່ວງຫລາຍກ່ຽວກັບສຸຂະພາບຫລືການທຳງານຂອງຮ່າງກາຍ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | **X** | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ການເຫນັງຕຶງ/ການຍ່າງໄປຍ່າງມາທີ່ຫລຳຄືນ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | **X** | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ການຊຸກເຊື່ອງສິ່ງຂອງ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | **X** | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |

| | | | | |
|---|---|---|---|---|
| ການສະສົມໄວ້/ການເກັບເອົາໄວ້ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ສຽງເວົ້າທີ່ບໍ່ເຫມາະສົມ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ຍ່າງໄປຍ່າງມາແລະຊອກຫາທາງອອກ:ຍ້າຍທີ່ໂດຍບໍ່ມີຈຸດປະສົງແຈ່ມແຈ້ງ,ແຕ່ວ່າບໍ່ພະຍາຍາມທີ່ຈະອອກຈາກບ່ອນຢູ່ຫລືສະຖານທີ່ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = .5<br>ດັດແປງໄດ້ງ່າຍໆ = .5<br>ດັດແປງບໍ່ໄດ້ງ່າຍໆ = 1 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ຈຳນວນຄະແນນສູງສຸດທີ່ທ່ານສາມາດໄດ້ຮັບຢູ່ໃນຂະແນງ ນຶ່ງ ແມ່ນ 2. | | | | ຕື່ມຄະແນນໃສ່ຈາກແຖວຂ້າງເທິງສຳລັບຄະແນນຂອງຂະແນງນຶ່ງ ຍົກເວັ້ນ ແຕ່ຄະແນນບໍ່ສາມາດຫລາຍເກີນກວ່າ 2 |
| ຂະແນງ ສອງ | | | | |
| ຄຳຮ້ອງທຸກ/ຄຳຖາມຊ້ຳແລ້ວຊ້ຳອີກ | ຜ່ານມາພ້ອມທັງການເຂົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເຂົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |

| | | | | |
|---|---|---|---|---|
| ຄົ້ນຊະຊາຍແລະເອົາສິ່ງຂອງຄົນອື່ນ | ຜ່ານມາພ້ອມທັງການເວົ້າ<br>ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳ<br>ຫນັກ x ຄຸນຄ່າ |
| ຂິ່ມເຫັງທາງປາກເປົ່າ | ຜ່ານມາພ້ອມທັງການເວົ້າ<br>ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳ<br>ຫນັກ x ຄຸນຄ່າ |
| ການຮ້ອງໃສ່/ການຮ້ອງຂື້ນ | ຜ່ານມາພ້ອມທັງການເວົ້າ<br>ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳ<br>ຫນັກ x ຄຸນຄ່າ |
| ການຖົ່ມນ້ຳລາຍ | ຜ່ານມາພ້ອມທັງການເວົ້າ<br>ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳ<br>ຫນັກ x ຄຸນຄ່າ |
| ຄວາມຢ້ານກົວຫລືຄວາມສົງສັຍ<br>ທີ່ບໍ່ນ່າເປັນຄວາມຈິງ. | ຜ່ານມາພ້ອມທັງການເວົ້າ<br>ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳ<br>ຫນັກ x ຄຸນຄ່າ |
| ຖິ້ມໂທດໃສ່ຄົນອື່ນວ່າຂະໂມຍ | ຜ່ານມາພ້ອມທັງການເວົ້າ<br>ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 1<br>ດັດແປງໄດ້ງ່າຍໆ = 1<br>ດັດແປງບໍ່ໄດ້ງ່າຍໆ = 2 | ທັງຫມົດຂອງນ້ຳ<br>ຫນັກ x ຄຸນຄ່າ |

| | | | | |
|---|---|---|---|---|
| ຈຳນວນຄະແນນສູງສຸດທີ່ທ່ານສາມາດໄດ້ຮັບຢູ່ໃນຂະແນງ ສອງ ແມ່ນ 3. | | | | ຕື່ມຄະແນນໃສ່ຈາກແຖວຂ້າງເທິງສຳລັບຄະແນນຂອງຂະແນງສອງ ຍົກເວັ້ນ ແຕ່ຄະແນນບໍ່ສາມາດຫລາຍເກີນກວ່າ 3 |
| ຂະແນງ ສາມ | | | | |
| ຂັດຂືນຕໍ່ການເບິ່ງແຍງດູແລດ້ວຍຄຳເວົ້າ/ທ່າທາງ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ຕື່ນຂຶ້ນມາຍາມກາງຄືນ,ຕ້ອງມີການເວົ້າແຊກແຊງ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ການຄິວກິນທີ່ບໍ່ປອດພັຍ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ການເຂົ້າຫ້ອງນ້ຳທີ່ບໍ່ເຫມາະສົມ/ກິຈກັມເປັນປະຈຳເດືອນ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ການສູບຢາທີ່ບໍ່ປອດພັຍ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |

| | | | | |
|---|---|---|---|---|
| ອອກຈາກເຮືອນແລະຫລົງທາງ | ຜ່ານມາພ້ອມທັງການເວົ້າ ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈໍາວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນໍ້າ ຫນັກ x ຄຸນຄ່າ |
| ການແກ້ຜ້າຢູ່ຕໍ່ຫນ້າສາທາ ຣະນະຊົນ | ຜ່ານມາພ້ອມທັງການເວົ້າ ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈໍາວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 2<br>ດັດແປງໄດ້ງ່າຍໆ = 2<br>ດັດແປງບໍ່ໄດ້ງ່າຍໆ = 3 | ທັງຫມົດຂອງນໍ້າ ຫນັກ x ຄຸນຄ່າ |
| ຈໍານວນຄະແນນສູງສຸດທີ່ທ່ານສາມາດໄດ້ຮັບຢູ່ໃນຂະແນງ ສາມ ແມ່ນ 4. | | | | ຕື່ມຄະແນນໃສ່ຈາກແຖວຂ້າງເທິງສໍາລັບຄະແນນຂອງຂະແນງ ສາມ ຍົກເວັ້ນແຕ່ຄະແນນບໍ່ສາມາດຫລາຍເກີນກວ່າ 4 |
| ຂະແນງ ສີ່ | | | | |
| ເຮັດຕົນເອງບາດເຈັບ-ໂດຍເຈຕນາ (ລວມທັງທຸບຫົວຕົນເອງ) | ຜ່ານມາພ້ອມທັງການເວົ້າ ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈໍາວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 4<br>ດັດແປງໄດ້ງ່າຍໆ = 4<br>ດັດແປງບໍ່ໄດ້ງ່າຍໆ = 5 | ທັງຫມົດຂອງນໍ້າ ຫນັກ x ຄຸນຄ່າ |
| ຍ່າງໄປຍ່າງມາແລະຊອກຫາທາງອອກ:ຍ້າຍທີ່ໂດຍບໍ່ມີຈຸດປະສົງແຈ່ມແຈ້ງແລະພະຍາຍາມທີ່ຈະອອກຈາກບ່ອນຢູ່ຫລືສະຖານທີ | ຜ່ານມາພ້ອມທັງການເວົ້າ ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈໍາວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 4<br>ດັດແປງໄດ້ງ່າຍໆ = 4<br>ດັດແປງບໍ່ໄດ້ງ່າຍໆ = 5 | ທັງຫມົດຂອງນໍ້າ ຫນັກ x ຄຸນຄ່າ |
| ການສະແດງອອກມາທາງເພດ | ຜ່ານມາພ້ອມທັງການເວົ້າ ແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈໍາວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 4<br>ດັດແປງໄດ້ງ່າຍໆ = 4<br>ດັດແປງບໍ່ໄດ້ງ່າຍໆ = 5 | ທັງຫມົດຂອງນໍ້າ ຫນັກ x ຄຸນຄ່າ |

| | | | | |
|---|---|---|---|---|
| ການຂູ່ຂວັນ/ການຂົ່ມຂູ່ (ບໍ່ມີການສັມຜັດທາງຮ່າງກາຍ) | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 4<br>ດັດແປງໄດ້ງ່າຍໆ = 4<br>ດັດແປງບໍ່ໄດ້ງ່າຍໆ = 5 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ໂຈມຕີທຳຮ້າຍ (ຕ້ອງມີການສັມຜັດທາງຮ່າງກາຍ) | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 4<br>ດັດແປງໄດ້ງ່າຍໆ = 4<br>ດັດແປງບໍ່ໄດ້ງ່າຍໆ = 5 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ທຸບ/ແກວ່ງສີ່ງຂອງ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 4<br>ດັດແປງໄດ້ງ່າຍໆ = 4<br>ດັດແປງບໍ່ໄດ້ງ່າຍໆ = 5 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ຈຳນວນຄະແນນສູງສຸດທີ່ທ່ານສາມາດໄດ້ຮັບຢູ່ໃນຂະແນງ ສີ່ ແມ່ນ10. | | | | ຕື່ມຄະແນນໃສ່ຈາກແຖວຂ້າງເທິງສຳລັບຄະແນນຂອງຂະແນງ ສີ່ ຍົກເວັ້ນ ແຕ່ຄະແນນບໍ່ສາມາດຫລາຍເກີນກວ່າ 10 |
| ຂະແນງ ຫ້າ | | | | |
| ການຕັ້ງໄຟ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 5<br>ດັດແປງໄດ້ງ່າຍໆ = 5<br>ດັດແປງບໍ່ໄດ້ງ່າຍໆ = 6 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |
| ຂັດຂືນຕໍ່ສູ້ໃນຣະຫວ່າງການເບິ່ງແຍງດູແລ | ຜ່ານມາພ້ອມທັງການເວົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | X | ຜ່ານມາ<br>ພ້ອມທັງການເວົ້າແຊກແຊງ = 5<br>ດັດແປງໄດ້ງ່າຍໆ = 5<br>ດັດແປງບໍ່ໄດ້ງ່າຍໆ = 6 | ທັງຫມົດຂອງນ້ຳຫນັກ x ຄຸນຄ່າ |

| | | | | |
|---|---|---|---|---|
| ກິນສິ່ງທີ່ກິນບໍ່ໄດ້ | ຜ່ານມາພ້ອມທັງການເອົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | **X** | ຜ່ານມາ<br>ພ້ອມທັງການເອົ້າແຊກແຊງ = 5<br>ດັດແປງໄດ້ງ່າຍໆ = 5<br>ດັດແປງບໍ່ໄດ້ງ່າຍໆ = 6 | ທັງຫມົດຂອງນ້ຳຫນັກ x ຄູນຄ່າ |
| ຊອກຫາຂາຄູ່ສົມສຸ່ທາງເພດທີ່ຕົກຢູ່ໃນອັນຕະລາຍໄດ້ງ່າຍໆ | ຜ່ານມາພ້ອມທັງການເອົ້າແຊກແຊງ= .25<br>1-3 ວັນຕໍ່ອາທິດ = .5<br>4-6 ວັນຕໍ່ອາທິດ = .75<br>ປະຈຳວັນຕໍ່ = 1 | **X** | ຜ່ານມາ<br>ພ້ອມທັງການເອົ້າແຊກແຊງ = 5<br>ດັດແປງໄດ້ງ່າຍໆ = 5<br>ດັດແປງບໍ່ໄດ້ງ່າຍໆ = 6 | ທັງຫມົດຂອງນ້ຳຫນັກ x ຄູນຄ່າ |
| ຈຳນວນຄະແນນສູງສຸດທີ່ທ່ານສາມາດໄດ້ຮັບຢູ່ໃນຂະແນງ ຫ້າ ແມ່ນ12. | | | | ຕື່ມຄະແນນໃສ່ຈາກແຖວຂ້າງເທິງສຳລັບຄະແນນຂອງຂະແນງຫ້າ ຍົກເວັ້ນ ແຕ່ຄະແນນບໍ່ສາມາດຫລາຍເກີນກວ່າ 12 |

## ຄະແນນການທຳງານຂອງມັນສະມອງ

ຄະແນນຂອງການທຳງານຂອງມັນສະມອງ (**CPS**)ຂອງທ່ານໄດ້ຖືກອີງໃສ່ສິ່ງຕໍ່ລົງໄປນີ້.ຢູ່ໃນກໍຣະນີສ່ວນຫລາຍ,ພວກເຮົາເບິ່ງວ່າທ່ານເຮັດໄດ້ດີເທົ່າໃນ:

- ຕິດຕໍ່ປະສານງານ;
- ການທຳການຕັດສິນໃຈ;ແລະ
- ຈື່ຈຳເຫດການເກີດຂຶ້ນໃນຫມໍ່ໆມານີ້

ພວກເຮົາຫລຽວເບິ່ງໃສ່ແນວອື່ນສອງແນວ:

- ທ່ານຫມົດສະຕິບໍ່?
- ທ່ານບໍ່ສາມາດທີ່ຈະທຳການຕັດສິນໃຈ <u>ແລະ</u> ປ້ອນຕົນເອງບໍ່?

## ການຕິດຕໍ່:

ພວກເຮົາໃຫ້ຄະແນນວ່າທ່ານບອກຄົນໃກ້ສິດທ່ານທີ່ສຸດໄດ້ດີປານໃດກ່ຽວກັບສິ່ງທີ່ທ່ານຕ້ອງການຫລືຢາກໄດ້,ທັສນະ,ບັນຫາຮີບດ່ວນ,ແລະການເວົ້າລົມສົນທະນາກັນ.ທ່ານອາດຈະເວົ້າ,ຂຽນ,ເຊັນຊື່,ຕີພິມ,ຫລືໃຊ້ຫົນທາງອື່ນເພື່ອຈະຕິດຕໍ່ນຳກັນ.ພວກເຮົາອະທິບາຍວ່າທ່ານຕິດຕໍ່ກັນໄດ້ດີປານໃດຢູ່ຂ້າງລຸ່ມນີ້.

- **ເຂົ້າໃຈ**:ທ່ານສະແດງແນວຄິດອອກມາຢ່າງແຈ່ມແຈ້ງ.

- **ຕາມທັມມະດາເຂົ້າໃຈ**:ທ່ານມີຄວາມລຳບາກໃນການຊອກຫາຄຳເວົ້າທີ່ຖືກຕ້ອງຫລືຄິດໃຫ້ແລ້ວ.ອັນນີ້ເຮັດໃຫ້ທ່ານຊັກຊ້າທີ່ຈະຕອບຫລືທ່ານຕ້ອງການໃຫ້ບອກຕື່ມອີກເພື່ອຈະເຂົ້າໃຈ.

- **ເຂົ້າໃຈບາງເທື່ອ**: ທ່ານສາມາດທີ່ຈະສະແດງຄວາມຕ້ອງການງ່າຍໆທີ່ສຸດອອກມາເທົ່ານັ້ນເຊັ່ນວ່າອາຫານ,ນ້ຳດື່ມ,ນອນ,ຫລືຫ້ອງນ້ຳ.

- **ເຂົ້າໃຈຫນ້ອຍທີ່ສຸດ/ບໍ່ເຂົ້າໃຈຈັກເທື່ອ**:ຖ້າຫາກວ່າທ່ານບໍ່ເຂົ້າໃຈຈັກຢ່າງເລີຍ,ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານຕ້ອງໄດ້ແປອະທິບາຍສຽງຫລືພາສາຂອງຮ່າງກາຍໂດຍສະເພາະ.ຕົວຢ່າງແມ່ນວ່າທ່ານສະແດງຄວາມຫິວ,ຄວາມເຈັບປວດ,ຫລືຄວາມຕ້ອງການເຂົ້າຫ້ອງນ້ຳ ອອກມາແນວໃດ.

### ຣາຍຣະອຽດພິເສດກ່ຽວກັບເດັກນ້ອຍ ແລະ ການຕິດຕໍ່ກັນ:

ເດັກນ້ອຍຈະຖືກຖືວ່າໂດຍອັຕໂນມັດໂລດຢູ່ໃນຣະດັບດຽວກັນກັບ ເຂົ້າໃຈ ຈົນກວ່າຮອດວັນເກີດປີທີ 3rd ຂອງເຂົາເຈົ້າ

## ການທຳການຕັດສິນໃຈ:

ພວກເຮົາໃຫ້ຄະແນນວ່າທ່ານສາມາດແລະທຳການຕັດສິນໃຈທຸກໆວັນແນວໃດກ່ຽວກັບພາລະຫນ້າທີ່ຫລືກິຈກັມຂອງການດຳຣົງຊີວິດປະຈຳວັນ.ອີງຕາມການຕັດສິນໃຈທີ່ທ່ານເຮັດລົງໄປໃນເຈັດວັນກ່ອນການຕີຣາຄາປະເມີນຜົນຂອງທ່ານ,ພວກເຮົາຕີຣາຄາເບິ່ງວ່າທ່ານໄດ້:

- **ບໍ່ຂື້ນນຳໃຜ**:ການຕັດສິນໃຈຂອງທ່ານກ່ຽວກັບສິ່ງທີ່ເຮັດປະຈຳວັນຂອງທ່ານແມ່ນສະມ່ຳສະເມີແລະຖືກວາງແຜນ.ການຕັດສິນເຫລົ່ານີ້ສະທ້ອນເຖິງແບບດຳຣົງຊີວິດຂອງທ່ານ,ທາງເລືອກ,ປະເພນີ,ແລະມູນຄ່າ.

- **ຄວາມຫຍຸ້ງຍາກຢູ່ໃນສະພາບການໃຫມ່**:ກິຈກັມປະຈຳວັນຂອງທ່ານໄດ້ຖືກວາງແຜນໄວ້.ທ່ານສາມາດທີ່ຈະທຳການຕັດສິນໃຈໃນສະພາບການທີ່ຄ້າຍຄຽງກັນ,ແຕ່ວ່າທ່ານມີບັນຫາໃນການທຳການຕັດສິນໃຈໃນສະພາບການໃຫມ່ຫລືເມື່ອປະເຊີນຫນ້ານຳພະລະກິດອັນໃຫມ່.

- **ການຕັດສິນໃຈບໍ່ດີ/ບໍ່ຮູ້ຈັກເຖິງຜົນສະທ້ອນ**: ການຕັດສິນໃຈຂອງທ່ານແມ່ນບໍ່ດີ.ທ່ານຕ້ອງການການເຕືອນໃຈ,ການຊີ້ນຳ,ແລະການກຳກັບຄວບຄຸມນຳໃນການວາງແຜນ,ການຈັດແຈງແລະການດັດແປງສິ່ງເຮັດປະຈຳວັນ.ທ່ານຈະພະຍາຍາມທີ່ຈະທຳການຕັດສິນໃຈ,ແຕ່ວ່າເຮັດໄດ້ບໍ່ດີເທົ່າໃດ.

- **ການຕັດສິນໃຈບໍ່ມີ/ໜ້ອຍນຶ່ງ**:ເຖິງແມ່ນວ່າຈະຖືກເຕືອນໃຈ,ຄວາມສາມາດຂອງທ່ານທີ່ຈະທຳກັນຕັດສິນໃຈແມ່ນເຣັດບໍ່ໄດ້ຮ້າຍແຮງ.ທ່ານບໍ່ເຄີຍຈັກເທື່ອຫລືໜ້ອຍທີ່ສຸດທີ່ຈະທຳການຕັດສິນໃຈ.

- **ການໝົດສະຕິ**:ທ່ານຢູ່ໃນການໝົດສະຕິຫລືພະຍາດເສັຽສະຕິ.

### ຣາຍຣະອຽດພິເສດກ່ຽວກັບເດັກນ້ອຍ ແລະ ການທຳການຕັດສິນໃຈ:

ເດັກນ້ອຍຈະຖືກຖືວ່າໂດຍອັຕໂນມັດໂລດຢູ່ໃນຣະດັບດຽວກັນກັບ ບໍ່ຂຶ້ນນຳໃຜ ຈົນກວ່າຮອດວັນເກີດປີທີ 12th ຂອງເຂົາເຈົ້າ.

**ຄວາມຊົງຈຳຣະຍະສັ້ນ**: ພວກເຮົາຕີຣາຄາເບິ່ງວ່າທ່ານຈື່ຈຳສິ່ງທີ່ເກີດຂຶ້ນໃນໝໍ່ໆມານີ້ໄດ້ດີເທົ່າໃດ.

- **ບັນຫານຳຄວາມຊົງຈຳຣະຍະສັ້ນ**: ພວກເຮົາຕີຣາຄາເບິ່ງອັນນີ້ໃນສອງທາງຕ່າງກັນ.

  - ທ່ານມີບັນຫານຳການຈື່ຈຳໃນສິ່ງທີ່ໄດ້ເກີດຂຶ້ນໃນໝໍ່ໆມານີ້.ມັນຫລາຍກວ່າການຫລົງລືມທັມມະດາ.

  - ຄົນສ່ວນຫລາຍຖືກຖາມໃຫ້ຈື່ເອົາໄວ້ແລະແລ້ວເວົ້າຫລຳຄືນ 3 ຄຳເວົ້າ.ທ່ານມີພະຍາດຄວາມຈື່ຈຳຊຸກຊ້ຳຖ້າຫາກວ່າທ່ານບໍ່ສາມາດຈື່ຄຳເວົ້າຄຳນຶ່ງຫລືຫລາຍຄຳ.

### ຣາຍຣະອຽດພິເສດກ່ຽວກັບເດັກນ້ອຍ ແລະ ຄວາມຊົງຈຳຣະຍະສັ້ນ:

ເດັກນ້ອຍຈະຖືກຖືວ່າໂດຍອັຕໂນມັດໂລດຢູ່ໃນຣະດັບດຽວກັນກັບ ບໍ່ມີບັນຫາຫຍັງ ຈົນກວ່າຮອດວັນເກີດປີທີ 12th ຂອງເຂົາເຈົ້າ.

ອັນນີ້ແມ່ນສາຍຕໍ່ລິງຄ໌ໄປຫາກົດຣະບຽບທີ່ເວົ້າເຖິງລະແນນການທຳງານຂອງຄວາມຊົງຈຳ.

**http://apps.leg.wa.gov/wac/default.aspx?cite=388-106-0090**

## ຄວາມຫຍຸ້ງຍາກສັບສົນທາງການແພດ

ຄວາມຫຍຸ້ງຍາກສັບສົນທາງການແພດລວມເອົາສະພາບການພະຍາບານແລະ/ຫລືຄວາມຕ້ອງດ້ານການປິ່ນປົວຫລາຍໆຢ່າງ.ຈຸດສຳຄັນຢູ່ຂ້າງລຸ່ມນີ້ບໍ່ງລາຍຊື່ຂອງສະພາບການພະຍາບານແລະຄວາມຕ້ອງການດ້ານການປິ່ນປົວພະຍາບານເຫລົ່ານັ້ນທຸກໆຢ່າງ. ຢ່າງຫນ້ອຍສະພາບການພະຍາບານແລະ/ຫລືຄວາມຕ້ອງດ້ານການປິ່ນປົວແນວນຶ່ງຕ້ອງມີປາກົດຢູ່ພ້ອມທັງຄະແນນ ADL ຕ່ຳສຸດເພື່ອຈະມີເງື່ອນໄຂໄດ້ຮັບ.ຕົວຢ່າງ,ການກວດພົບພະຍາດ ALS ທີ່ມີຄະແນນ ADL 10 ຈະບໍ່ມີເງື່ອນໄຂສຳລັບຄວາມຫຍຸ້ງຍາກສັບສົນທາງການແພດ.

| ສະພາບຫລືຄວາມຕ້ອງການເບິ່ງແຍງ | ຄະແນນ **ADL** |
|---|---|
| **ALS (**ພະຍາດ **Lou Gehrig)** | **15** ຫລືຫລາຍກວ່າ |
| ພະຍາດ **Aphasia** (ສະແດງອອກມາແລະ/ຫລືຟັງຮັບເອົາ) | **2** ຫລືຫລາຍກວ່າ |
| **ໂຄງການຖ່າຍຫນັກ**:ໂຄງການປະຈຳ,ດຳເນີນຕໍ່ໄປຊຶ່ງອາດຈະລວມເອົາການເຂົ້າແຊກແຊງນຳນອກຈາກຢາກິນທາງປາກເຊັ່ນວ່າການເຮັດໃຫ້ຮູ້ຈັກ,ຢາຍັດກົ້ນຫລືນ້ຳຍັດກົ້ນຂາຍຕາມຮ້ານ. | **11** ຫລືຫລາຍກວ່າ |
| **ບາດໄຟໄຫມ້** ແລະອັນນຶ່ງຫລືຫລາຍອັນຂອງສິ່ງຕໍ່ລົງໄປນີ້:<br><br>**ການເອົາຜ້າພັນບາດໃສ່**<br><br>**ການບົວຣະບັດບາດ/ຜິວຫນັງ**:ອັນນີ້ແມ່ນວິທີທາງເພື່ອຈະປິ່ນປົວຜິວຫນັງເປີດ,ບາດເປື່ອຍ,ຫລືຫລັງຈາກການປາດຜ່າຕັດເພື່ອຈະເຮັດໃຫ້ແຫ້ງຈອດໄວ. | **2** ຫລືຫລາຍກວ່າ |
| **ພະຍາດເຊເລໂບຣພອລຊີ** | **15** ຫລືຫລາຍກວ່າ |
| **ພະຍາດຣະບົບການຫາຍໃຈຕັນຊຳເຮື້ອ (COPD) &** **ການຂາດລົມຫາຍໃຈ** (ເວລາພັກຜ່ອນຫລືອອກແຮງຫລາຍ) | **11** ຫລືຫລາຍກວ່າ |

| | |
|---|---|
| ພະຍາດຣະບົບການຫາຍໃຈຕັນຊຳເຮື້ອ **(COPD) &** ການວຽນຫົວ/ຢືນຕົງບໍ່ໄດ້ | 11 ຫລືຫລາຍກວ່າ |
| ພະຍາດ **Diabetes Mellitus** (ຕ້ອງເພິ່ງອິນຊູລິນ) | 15 ຫລືຫລາຍກວ່າ |
| ພະຍາດ**Diabetes Mellitus** (ບໍ່ຕ້ອງເພິ່ງອິນຊູລິນ) | 15 ຫລືຫລາຍກວ່າ |
| ການຟອກເລືອດ | 11 ຫລືຫລາຍກວ່າ |
| ອີດີມາ (ການໃຂ່ຂື້ນຈາກການສະສົມນ້ຳຢູ່ໃນຜິວຫນັງ) | 15 ຫລືຫລາຍກວ່າ |
| ພະຍາດແລະການຂາດລົມຫາຍໃຈ (ໃນເວລາພັກຜ່ອນຫລືອອກກຳລັງແຮງ) | 11 ຫລືຫລາຍກວ່າ |
| ເອັມຟີຊີມາ **&** ການຫາຍໃຈສັ້ນ/ການຢືນບໍ່ທ່ຽງ | 11 ຫລືຫລາຍກວ່າ |
| ທັສນະພະຍາດຈົບເຫັນແນ່ນອນ (ຈະມີຊີວິດຢູ່ໄດ້ຕ່ຳກວ່າຫົກເດືອນ) | 15 ຫລືຫລາຍກວ່າ |
| ເຮມີເພລເກັຽ (ການເປັນເປັ້ຽລ່ອຍຂອງຂ້າງນຶ່ງຂອງຮ່າງກາຍ) | 15 ຫລືຫລາຍກວ່າ |
| ການປິ່ນປົວລໍຖ້າເສັຽຊີວິດ | 15 ຫລືຫລາຍກວ່າ |

| | |
|---|---|
| ການສັກຢາ | 15 ຫລືຫລາຍກວ່າ |
| ຢາສັກໃສ່ເສັ້ນເລືອດ | 11 ຫລືຫລາຍກວ່າ |
| **ພົກຍ່ຽວ: ອົດກັ້ນບໍ່ໄດ້ເລື້ອຍໆ** ໝາຍຄວາມວ່າທ່ານຢາກຈະຍ່ຽວເຫັ່ຽຫລືບໍ່ສາມາດຄວບຄຸມການປວດຍ່ຽວທຸກໆມື້.<br><br>**ພົກຍ່ຽວ: ເກືອບອົດກັ້ນບໍ່ໄດ້ຕະລອດເວລາ** ໝາຍຄວາມວ່າທ່ານຍ່ຽວເຫັ່ຽຫລືບໍ່ສາມາດຄວບຄຸມການປວດຍ່ຽວຫລາຍໆເທື່ອຕໍ່ມື້.<br><br>**ໂຄງການຖ່າຍໜັກ: ອົດກັ້ນບໍ່ໄດ້ຢູ່ເລື້ອຍໆ** ໝາຍຄວາມວ່າທ່ານຂີ້ເຫັ່ຽຫລືບໍ່ສາມາດຄວບຄຸມການຕ່າຍໜັກຂອງທ່ານ 2 ຫລື 3 ເທື່ອຕໍ່ອາທິດ.<br><br>**ໂຄງການຖ່າຍໜັກ: ເກືອບອົດກັ້ນບໍ່ໄດ້ຕະລອດເວລາ** ໝາຍຄວາມວ່າທ່ານຂີ້ເຫັ່ຽຫລືບໍ່ສາມາດຄວບຄຸມການຕ່າຍໜັກຂອງທ່ານທຸກໆເວລາ.<br><br><u>ແລະ</u><br><br>**ທ່ານໃຊ້ແລະຕ້ອງການຄວາມຊ່ວຍເຫລືອນຳແຜ່ນຮອງກົ້ນຫລືສິ້ງຊ້ອນໃນ,ນຳການທຳຄວາມສະອາດ,ຫລືນຳທໍ່ອອກນອກຫລືການຜ່າຕັດ.ທ່ານເຣັດອາໂຈມຫລືນ້ຳຍ່ຽວເຫັ່ຽອອກໃສ່ຜິວໜັງຂອງທ່ານ;ຫລື**<br><br>**ທ່ານບໍ່ໃຊ້ແຜ່ນຮອງຫລືສິ້ງຊ້ອນໃນ,ມີການຜ່າຕັດ,**ຫລືທໍ່ຢາງຕໍ່ອອກນອກ.ທ່ານເຣັດອາໂຈມຫລືນ້ຳຍ່ຽວເຫັ່ຽອອກມາໃສ່ຜິວໜັງຂອງທ່ານ. | 11 ຫລືຫລາຍກວ່າ |

| | |
|---|---|
| ທ່ານໃຊ້ແຜນການເຂົ້າຫ້ອງນ້ຳທີ່ຖືກຫມາຍນັດໄວ້ແລ້ວຊຶ່ງຫມາຍຄວາມວ່າຜູ້ໃຫ້ການເບິ່ງແຍງດູແລຂອງທ່ານພາທ່ານໄປເຂົ້າສ້ວມຖ່າຍ,ເອົາງ້ຽງຢ່ຽວໃຫ້ທ່ານ,ຫລືເຕືອນທ່ານໃຫ້ໄປເຂົ້າຫ້ອງນ້ຳຕາມເວລາທີ່ຖືກຕັ້ງໄວ້.ມັນສາມາດລວມເອົາການຝຶກແອບທ່ານໃຫ້ໄປຫລືໃຫ້ທ່ານໄປອີງຕາມຄິວ. | |
| **ການຄວບຄຸມນຳທໍ່ IV** | 11 ຫລືຫລາຍກວ່າ |
| **ຜິວຫນັງແຂງຫລາຍໆບ່ອນ** | 15 ຫລືຫລາຍກວ່າ |
| ທ່ານຕ້ອງການ ການອູ້ມຊູອາຫານທາງ IV ຫລືການປ້ອນທາງທໍ່;<u>ແລະ</u><br><br>ແຄລໍຣີທັງຫມົດຂອງທ່ານທີ່ໄດ້ຮັບທາງ IV ຫລືທໍ່ແມ່ນຢ່າງຫນ້ອຍ 25%; ແລະ<br><br>ການເອົານ້ຳເຂົ້າໄປໂດຍທາງ IV ຫລືທໍ່ຂອງທ່ານຫລາຍເກີນກວ່າ 2 ຈອກຕໍ່ມື້. | 2 ຫລືຫລາຍກວ່າ |
| **ອອກ໌ຊີເຈັນທາງຫນ້າກາກຫລືທາງທໍ່** | 11 ຫລືຫລາຍກວ່າ |

| ສະພາບຫລືຄວາມຕ້ອງການເບິ່ງແຍງ | ຄະແນນ **ADL** |
|---|---|
| **ການບົວຣະບັດການຜ່າຕັດ** | 2 ຫລືຫລາຍກວ່າ |
| **ການເຈັບປວດແຕ່ລະວັນ** ໝາຍເຖິງວ່າທ່ານພົບພໍ້ກັບຄວາມເຈັບປວດຊໍ່າໃດຊໍ່ານຶ່ງທຸກໆວັນ. | 15 ຫລືຫລາຍກວ່າ |
| **ພະຍາດພາກິນຊັນ** | 15 ຫລືຫລາຍກວ່າ |
| **ໂຄງການຊ່ວງທາງຂອງການເຫນັງຕືງທີ່ບໍ່ທໍາງານ** ໄດ້ຖືກອອກແບບມາໂດຍຜູ້ຊ່ຽວຊານ (ນາຍຫມໍຫລືຫມໍບໍາບັດ) .ໂຄງການຮັກສາຄວາມອ່ອນໂຍນແລະການເຫນັງຕືງທີ່ໃຊ້ການໄດ້ດີຢູ່ຕາມຂໍ້ຕໍ່ຂອງຮ່າງກາຍ. | 11 ຫລືຫລາຍກວ່າ |
| **ກະດູກແຕກຫັກທີ່ຄວບຄຸມບໍ່ໄດ້** | 15 ຫລືຫລາຍກວ່າ |
| **ພະຍາດກົວດຣິເປລເກັຽ** (ການເປັນລ່ອຍຂອງແຂນແລະຂາທັງຫມົດ) | 15 ຫລືຫລາຍກວ່າ |
| **ການປິ່ນປົວໃຊ້ແສງຣັງສີ ຫລື ການຝັງແສງຣັງສີ** | 11 ຫລືຫລາຍກວ່າ |
| **ພະຍາດຣູມາຕອຍອາໄທຣຕິສ** | 15 ຫລືຫລາຍກວ່າ |
| ທ່ານມີ ບັນຫານໍາການກືນກິນໃນປັດຈຸບັນ <u>ແລະ</u> ທ່ານຕ້ອງການຄວາມຊ່ວຍເຫລືອນໍາການກິນ. | 11 ຫລືຫລາຍກວ່າ |
| **ຕຸ່ມໄຂ່** (ຕຸ່ມມາຈາກຕຽງນອນ) ທີ່ມີ:<br>ບ່ອນຜິວຫນັງແດງເປັນມາດົນນານ (ໂດຍບໍ່ມີບ່ອນແຕກຢູ່ໃນຜິວຫນັງ) ທີ່ບໍ່ຫາຍໄປເມື່ອ | 2 ຫລືຫລາຍກວ່າ |

ເວລາຄວາມກົດດັນໄດ້ຖືກປ່ອຍອອກຢູ່ຈຸດກົດດັນ.

ການເສັຽຫນັງລອກອອກສ່ວນນຶ່ງ ໃນບ່ອນນຶ່ງຫລືຫລາຍບ່ອນໃນຮ່າງກາຍຂອງທ່ານທີ່ຄ້າຍຄືກັນກັບຮອຍບວບຊ້ຳ,ນ້ຳຫນອງ,ຫລືຂຸມຕື້ນໆຢູ່ບ່ອນເຂ່ງຕືງ;ຫລື

ຄວາມຫນາເຕັມຫມົດຂອງຜິວຫນັງທີ່ເສັຽຢູ່ເທິງຈຸດເຂ່ງຕືງຊຶ່ງເບິ່ງຄືວ່າເປັນຂຸມເລິກ. ທ່ານອາດຈະເຫັນກ້າມຊີ້ນຫລືກະດູກ.

<u>ຫລື</u>

**ຜິວຫນັງທີ່ຫມົດຄວາມຮູ້ສຶກຕໍ່ຄວາມເຈັບປວດແລະ/ຫລືຄວາມກົດດັນ:** ທ່ານບໍ່ສາມາດທີ່ຈະຮູ້ສຶກຄວາມເຈັບປວດຫລືຄວາມກົດດັນໃນບ່ອນນຶ່ງຫລືຫລາຍບ່ອນຂອງຮ່າງກາຍຂອງທ່ານ.

<u>ຫລື</u>

**ປາກບາດເປີດ:**ປາກບາດເປີດແມ່ນຫນັງເປັນນ້ຳຫນອງຫລືຕຸ່ມຜິວຫນັງອື່ນໆ.ມັນບໍ່ລວມເອົາບາດເປື່ອຍ,ມຸ່ນມ່ານ,ຫລືຮອຍປາດ.

<u>ຫລື</u>

**ບາດເປື່ອຍເລືອດບໍ່ໄຫລ (ເສັ້ນເລືອດ) :** ເລືອດບໍ່ໄຫລຫລືບາດເປື່ອຍຕັນເສັ້ນເລືອດແມ່ນບາດເປື່ອຍຕາມຜິວຫນັງໃນສ່ວນນຶ່ງຂອງຮ່າງກາຍທີ່ຕັນການໄຫລຂອງເລືອດ.ບາດເປື່ອຍອາດຈະເປີດຫລືປິດ.ມັນຖືກພົບເຫັນສ່ວນຫລາຍຢູ່ຕາມຂາຫລືຂີ້ແຂ່ງທາງລຸ່ມ.

<u>ແລະ</u>

ການບົວຣະບັດປາກບາດ ຊຶ່ງລວມເອົາການເຂົ້າແຊກແຊງນຳສຳລັບການປິ່ນປົວປາກບາດຢູ່ໃນທຸກໆຣະດັບ;ຫລື

ເຄື່ອງຜ່ອນຄາຍຄວາມກົດດັນ ຊຶ່ງລວມເອົາຂອງແຫລວແຈວ໌,ລົມ,ຫລືເບາະຮອງນັ່ງສຳລັບຕັ່ງນັ່ງແລະເສື່ອນອນສູບດ້ວຍລົມ,ຕຽງປິ່ນປົວເສັຽລົມຫນ້ອຍນຶ່ງ,ເສື່ອຟູນ້ຳຫລສູບລົມ.

**ໂຄງການປີ້ນຂ້າງແລະ/ຫລືການຕັ້ງທ່າໃຫມ່:**ໂຄງການທີ່ດຳເນີນຕໍ່ໄປແລະສະມ່ຳສະເມີສຳລັບການປ່ຽນທ່າທາງຂອງຮ່າງກາຍຂອງທ່ານເພື່ອຫລີກເວັ້ນຜິວຫນັງແຕກແຫງ:ຫລື

| | |
|---|---|
| ການເອົາຜ້າພັນບາດໃສ່;ຫລື<br><br>**ການບົວຣະບັດບາດ/ຜິວໜັງ**:ອັນນີ້ແມ່ນວິທີທາງເພື່ອຈະປິ່ນປົວຜິວໜັງເປີດ,ບາດເປື່ອຍ, ຫລືຫລັງຈາກການປາດຜ່າຕັດເພື່ອຈະເຮັດໃຫ້ແຫ້ງຈອດໄວ. | |
| **ການປິ່ນປົວໂດຍການດູດລົມອອກ** | 2 ຫລືຫລາຍກວ່າ |
| **ການບົວຣະບັດທີ່ຊ່ວຍຫາຍໃຈ** | 11 ຫລືຫລາຍກວ່າ |
| **ເຄື່ອງຈັກປັ່ມລົມ ຫລື ເຄື່ອງຊ່ວຍຫາຍໃຈ** | 11 ຫລືຫລາຍກວ່າ |
| **ການຝຶກແອບນຳການຍ່າງ**: ການຝຶກແອບອັນນີ້ໄດ້ຖືກອອກແບບມາແລະກຳກັບເບິ່ງນຳໂດຍຜູ້ຊ່ຽວຊານ (ນາຍໝໍຫລືໝໍບຳບັດ) ສຳລັບຈຸດປະສົງຂອງການຝຶກຝົນໃຫ້ດີຄືນຫລືການປົວແປງ.ຜູ້ໃຫ້ການເບິ່ງແຍງດູແລຂອງທ່ານທຳການຝຶກແອບຢ່າງໜ້ອຍ 15 ນາທີທຸກໆວັນ. | 11 ຫລືຫລາຍກວ່າ |

## ການເບິ່ງແຍງດູແລທີ່ດີເດັ່ນ:

ການເບິ່ງແຍງດູແລທີ່ດີເດັ່ນເປັນຂະແນງຂອງການເບິ່ງແຍງດູແລທີ່ຕ້ອງມີການປະສົມເຂົ້າກັນຂອງຄວາມຕ້ອງການດ້ານການເບິ່ງແຍງດູແລອັນເຈາະຈົງ.ມັນມີສອງຫົນທາງທີ່ຈະມີເງື່ອນໄຂສຳລັບການເບິ່ງແຍງດູແລທີ່ດີເດັ່ນ.

## ການມີເງື່ອນໄຂພາຍໃຕ້ແບບວິທີ#1:

ທ່ານຕ້ອງສອດຄ່ອງນຳກົດເກນ <u>ທັງຫມົດ</u> ສີ່ຢ່າງທີ່ຖືກບົ່ງຢູ່ຂ້າງລຸ່ມນີ້ເພື່ອຈະມີເງື່ອນໄຂ.

1. ຄະແນນ ADL 22 ຫລືສູງກວ່າ; ແລະ
2. ຄວາມຕ້ອງການສຳລັບໂຄງການປິ່ນເບື້ອງ/ຕັ້ງທ່າໃຫມ່;<u>ແລະ</u>
3. ການປິ່ນປົວທີ່ມີເງື່ອນໄຂ,ເຄື່ອງຈັກໃຊ້,ແລະການຊ່ວຍເຫລືອອັນເຈາະຈົງທີ່ທ່ານຕ້ອງການທີ່ກ່ຽວຂ້ອງນຳການເຂົ້າຫ້ອງນ້ຳ;<u>ແລະ</u>

4. ຄວາມຕ້ອງການສຳລັບໂຄງການຊ່ວງຂອງການເຫນັງຕີງທີ່ຖືກເອົາໃຫ້ໂດຍຜູ້ໃຫ້ການບໍຣິການ ທີ່ຖືກຈ່າຍເງິນໃຫ້ໂດຍກົມ **DSHS** ທີ່ມີເງື່ອນໄຂ;ແລະ

ຕາຕະລາງຂ້າງລຸ່ມນີ້ບົ່ງລາຍຊື່ກົດຣະບຽບ **2-4** ຢ່າງຣະອຽດຕື່ມອີກ.

2. **ໂຄງການປົ້ນຂ້າງແລະ/ຫລືການຕັ້ງທ່າໃຫມ່**:ໂຄງການທີ່ດຳເນີນຕໍ່ໄປແລະສະມ່ຳສະເມີສຳລັບການປ່ຽນທ່າທາງຂອງຮ່າງກາຍຂອງທ່ານເພື່ອຫລີກເວັ້ນຜີວຫນັງແຕກແຫງ (ເຈັບຕີນເຈັບໂຕຈາກນອນຕຽງ) .

3. **ການປິ່ນປົວທີ່ມີເງື່ອນໄຂ,ເຄື່ອງຈັກໃຊ້,ແລະການຊ່ວຍເຫລືອອັນເຈາະຈົງທີ່ທ່ານຕ້ອງການທີ່ກ່ຽວຂ້ອງນຳການເຂົ້າຫ້ອງນ້ຳ.**

**ຕ້ອງລວມເອົານຶ່ງຫລືຫລາຍຢ່າງຂອງສິ່ງຕໍ່ລົງໄປນີ້:**

- ທໍ່ຢາງຣະບາຍອອກນອກ
- ທໍ່ຢາງໃສ່ປຸດໆຢ່ອນໆ
- ທໍ່ຢາງຢັດໃສ່
- ໂຄງການຖ່າຍຫນັກ:ໂຄງການປະຈຳ,ດຳເນີນຕໍ່ໄປຊຶ່ງອາດຈະລວມເອົາການເຂົ້າແຊກແຊງນຳນອກຈາກຢາກິນທາງປາກເຊັ່ນວ່າການເຮັດໃຫ້ຮູ້ຈັກ,ຢາຢັດກົ້ນຫລືນ້ຳຢັດກົ້ນຂາຍຕາມຮ້ານ.
- ການປິ່ນປົວການຜ່າຕັດ
- ການຫວັງເພີ່ງທັງຫມົດຫມາຍເຖິງວ່າທ່ານບໍ່ສາມາດທີ່ຈະເຮັດແນວໃດໄດ້ເລີຍກ່ຽວກັບການເຂົ້າຫ້ອງນ້ຳ. ທ່ານບໍ່ສາມາດທີ່ຈະເຂົ້າແລະອອກຈາກສ້ວມຖ່າຍ,ເຄື່ອງນັ່ງຖ່າຍເທິງຕຽງ,ຫລືວັ້ງຽງຮອງຖ່າຍ.ທ່ານບໍ່ສາມາດເຊັດອອກຫລືລ້າງຕົວທ່ານເອງ,ປ່ຽນແຜ່ນຮອງຫລືສິ້ງຊ້ອນໃນ.ແລະແປງເຄື່ອງນຸ່ງ.ຖ້າຫາກວ່າທ່ານຈະບໍ່ໃຊ້ຫ້ອງນ້ຳ, ທ່ານຫວັງເພີ່ງທັງຫມົດທຸກຢ່າງໃສ່ຄົນອື່ນຄົນໃດຄົນນຶ່ງສຳລັບຄວາມຊ່ວຍເຫລືອນຳທໍ່ຢາງ,ທໍ່ຕໍ່ຈາກການຜ່າຕັດ, ວັ້ງຽງ,ຫລືແນວຮອງຢ່ຽວ.

4. **ໂຄງການຊ່ວງຂອງການເຫນັງຕີງ**:ໂຄງການຊ່ວງຂອງການເຫນັງຕີງໄດ້ຖືກອອກແບບມາໂດຍຜູ້ຊ່ຽວຊານ (ນາຍຫມໍຫລືຜູ້ປິ່ນປົວ) .ໂຄງການຮັກສາການອ່ອນໂຍນໄດ້ແລະການເຫນັງຕີງທີ່ໃຊ້ໄດ້ດີທີ່ສຸດຢູ່ຕາມຂໍ້ຕໍ່ຂອງຮ່າງກາຍ.ມັນມີໂຄງການຊ່ວງຂອງການເຫນັງຕີງຢູ່ສອງຊະນິດ.

**ໂຄງການຊ່ວງທາງຂອງການເຫນັງຕີງທີ່ທຳງານໄດ້ດີ**: ອັນນີ້ແມ່ນການອອກກຳລັງກາຍທີ່ທ່ານເຮັດເພື່ອຈະຮັກສາບຳບັດການທຳງານຂອງຂໍ້ຕໍ່ຂອງທ່ານ.ທ່ານອາດຈະຕ້ອງການຄວາມຊ່ວຍເຫລືອນຳການສັນຍານບອກຫລືການເຕືອນໃຈໂດຍຜູ້ໃຫ້ການເບິ່ງແຍງດູແລ.

<u>ຫລື</u>

**ໂຄງການຊ່ວງທາງຂອງການເຫນັງຕີງທີ່ບໍ່ທຳງານ (ທ່ານຕ້ອງມີອາຍຸແກ່ກວ່າ 3 ປີ)** : ທ່ານບໍ່ສາມາດທີ່ຈະຍ້າຍຂໍ້ຕໍ່ແລະທ່ານຕ້ອງການຜູ້ເບິ່ງແຍງດູແລທີ່ຈະທຳການຮັກສາການເຫນັງຕີງສຳລັບແຕ່ລະຂໍ້ຕໍ່.

ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນ,ໂຄງການຊ່ວງຣະຍະຂອງການເຫັນງຕີງຕ້ອງຖືກເອົາໃຫ້ໂດຍ:ຜູ້ເບິ່ງແຍງດູແລສ່ວນບຸກຄົນ **(IP)**, ຜູ້ເບິ່ງແຍງດູແລຈາກຫ້ອງການ,ນາຍຫມໍຍານເອກຊົນຫລືການເບິ່ງແຍງດູແລທີ່ຖືກຊື້ບອກໂດຍຕົນເອງ **(IP ເທົ່ານັ້ນ)**. ຖ້າຫາກວ່າທ່ານອາສັຍຢູ່ໃນບ່ອນຢູ່ແບບໂຮງຫມໍ,ມັນຕ້ອງຖືກເອົາໃຫ້ໂດຍສະມາຊິກຂອງເຮືອນຄອບຄົວຜູ້ໃຫຍ່/ເຮືອນກິນນອນ, **RN/LPN**ຂອງສະຖານທີ່ປິ່ນປົວ,ພະນັກງານຂອງສະຖານທີ່,ຫລືນາຍຫມໍຍານເອກຊົນ.

## ການມີເງື່ອນໄຂພາຍໃຕ້ແບບວິທີ#2:

ທ່ານຕ້ອງສອດຄ່ອງນຳກົດເກນ <u>ທັງຫມົດ</u> ຫ້າຢ່າງທີ່ຖືກບົ່ງຢູ່ຂ້າງລຸ່ມນີ້ເພື່ອຈະມີເງື່ອນໄຂ.

1. ຄະແນນ ADL 22 ຫລືສູງກວ່າ; ແລະ

2. ຄວາມຕ້ອງການສຳລັບໂຄງການປິ້ນເບື້ອງ/ຕັ້ງທ່າໃຫມ່;<u>ແລະ</u>

3. ຄວາມຕ້ອງການສຳລັບໂຄງການຊ່ວງຂອງການເຫນັງຕີງທີ່ຖືກເອົາໃຫ້ໂດຍຜູ້ໃຫ້ການບໍຣິການທີ່ຖືກຈ່າຍເງິນໃຫ້ໂດຍກົມ DSHS ທີ່ມີເງື່ອນໄຂ;<u>ແລະ</u>

4. ການອູ້ມຊູອາຫານທາງ IV ຫລືການປ້ອນອາຫານທາງທໍ່ຊຶ່ງຈຳນວນຄາລໍຣີທັງຫມົດທີ່ໄດ້ຮັບຕໍ່ IV ຫລືທາງທໍ່ໃຫຍ່ກວ່າ 50% ແລະການກິນນ້ຳເຂົ້າໄປໂດຍ IV ຫລືທາງທໍ່ໃຫຍ່ກວ່າ 2 ຈອກ;<u>ແລະ</u>

5. ຄວາມຕ້ອງການສຳລັບຄວາມຊ່ວຍເຫລືອນຳການຟອກເລືອດຫລືເຄື່ອງປັ່ມອາກາດ/ເຄື່ອງຊ່ວຍຫາຍໃຈທີ່ຖືກເອົາໃຫ້ໂດຍຜູ້ໃຫ້ການບໍຣິການທີ່ຖືກຈ່າຍເງິນໃຫ້ໂດຍກົມ DSHS ທີ່ມີເງື່ອນໄຂ.

ຕາຕະລາງຂ້າງລຸ່ມນີ້ບົ່ງລາຍຊື່ກິດຈະບຽບ 2-5 ຢ່າງລະອຽດຕື່ມອີກ.

2. **ໂຄງການປິ່ນຂ້າງແລະ/ຫລືການຕັ້ງທ່າໃຫມ່**:ໂຄງການທີ່ດຳເນີນຕໍ່ໄປແລະສະໝ່ຳສະເມີສຳລັບການປ່ຽນທ່າທາງຂອງຮ່າງກາຍຂອງທ່ານເພື່ອຫລີກເວັ້ນຜິວຫນັງແຕກແຫງ (ເຈັບຕົນເຈັບໂຕຈາກນອນຕຽງ) .

3. **ໂຄງການຊ່ວງຂອງການເຫນັງຕຶງ**:ໂຄງການຊ່ວງຂອງການເຫນັງຕຶງໄດ້ຖືກອອກແບບມາໂດຍຜູ້ຊ່ຽວຊານ (ນາຍຫມໍຫລືຜູ້ປິ່ນປົວ) .ໂຄງການຮັກສາການອ່ອນໂຍນໄດ້ແລະການເຫນັງຕຶງທີ່ໃຊ້ໄດ້ດີທີ່ສຸດຢູ່ຕາມຂໍ້ຕໍ່ຂອງຮ່າງກາຍ.ມັນມີໂຄງການຊ່ວງຂອງການເຫນັງຕຶງຢູ່ສອງຊະນິດ.

**ໂຄງການຊ່ວງທາງຂອງການເຫນັງຕຶງທີ່ທຳງານໄດ້ດີ**: ອັນນີ້ແມ່ນການອອກກຳລັງກາຍເພື່ອຈະຮັກສາບຳບັດການທຳງານຂອງຂໍ້ຕໍ່ຂອງທ່ານ.ທ່ານອາດຈະຕ້ອງການຄວາມຊ່ວຍເຫລືອນຳການສັນຍານບອກຫລືການເຕືອນໃຈໂດຍຜູ້ໃຫ້ການເບິ່ງແຍງດູແລ.

<u>ຫລື</u>

**ໂຄງການຊ່ວງທາງຂອງການເຫນັງຕຶງທີ່ບໍ່ທຳງານ (ທ່ານຕ້ອງມີອາຍຸແກ່ກວ່າ 3 ປີ)** : ທ່ານບໍ່ສາມາດທີ່ຈະຍ້າຍຂໍ້ຕໍ່ແລະທ່ານຕ້ອງການຜູ້ເບິ່ງແຍງດູແລທີ່ຈະທຳການຮັກສາການເຫນັງຕຶງສຳລັບແຕ່ລະຂໍ້ຕໍ່.

ຖ້າຫາກວ່າທ່ານອາສັຍຢູ່ໃນເຮືອນ,ໂຄງການຊ່ວງຣະຍະຂອງການເຫັນງຕຶງຕ້ອງຖືກເອົາໃຫ້ໂດຍ:ຜູ້ເບິ່ງແຍງດູແລສ່ວນບຸກຄົນ (IP), ຜູ້ເບິ່ງແຍງດູແລຈາກຫ້ອງການ,ນາຍຫມໍຍາມເອກຊົນຫລືການເບິ່ງແຍງດູແລທີ່ຖືກຊີ້ບອກໂດຍຕົນເອງ (IP ເທົ່ານັ້ນ). ຖ້າຫາກວ່າທ່ານອາສັຍຢູ່ໃນບ່ອນຢູ່ແບບໂຮງຫມໍ,ມັນຕ້ອງຖືກເອົາໃຫ້ໂດຍສະມາຊິກຂອງເຮືອນຄອບຄົວຜູ້ໃຫຍ່/ເຮືອນກິນນອນ, RN/LPNຂອງສະຖານທີ່ປິ່ນປົວ,ພະນັກງານຂອງສະຖານທີ່,ຫລືນາຍຫມໍຍາມເອກຊົນ.

4. **ການອູ້ມຊູດ້ານອາຫານການກິນ/ນ້ຳດື່ມ:ທັງສາມຢ່າງຢູ່ຂ້າງລຸ່ມນີ້ແມ່ນຕ້ອງມີ.**

- ທ່ານຕ້ອງການການອູ້ມຊູອາຫານທາງ IV ຫລືການປ້ອນທາງທໍ່;

- ແຄລໍຣີທັງຫມົດຂອງທ່ານທີ່ໄດ້ຮັບທາງ IV ຫລືທໍ່ແມ່ນຢ່າງຫນ້ອຍ 50%;

- ການເອົານ້ຳເຂົ້າໄປໂດຍທາງ IV ຫລືທໍ່ຂອງທ່ານຫລາຍເກີນກວ່າ 2 ຈອກຕໍ່ມື້.

5. **ການອູ້ມຊູດ້ານການຟອກເລືອດ ຫລື ເຄື່ອງຈັກປັ່ມອາກາດ/ເຄື່ອງຈັກຊ່ວຍຫາຍໃຈ**: ທ່ານຕ້ອງການຄວາມຊ່ວຍເຫລືອໃນການໃຊ້ເຄື່ອງຈັກປັ່ມອາກາດຫລືເຄື່ອງຈັກຊ່ວຍຫາຍໃຈຫລືນຳການຟອກເລືອດຈາກຜູ້ໃຫ້ການບໍຣິການທີ່ຖືກຈ່າຍເງິນໃຫ້ໂດຍກົມ DSHS ຜູ້ທີ່ມີຄຸນນະວຸດທິ:ຜູ້ໃຫ້ການບໍຣິການສ່ວນບຸກຄົນ (IP), ຜູ້ໃຫ້ການບໍຣິການຈາກອົງການ,ນາຍຫມໍຜ້າຍາມເອກຊົນ,ຫລືການເບິ່ງແຍງດູແລຊີ້ນຳໂດຍຕົນເອງ (IP ເທົ່ານັ້ນ).

**ການອູ້ມຊູດ້ານການຟອກເລືອດ ຫລື ເຄື່ອ ງຈັກປັ່ນອາກາດ/ເຄື່ອງຈັກຊ່ວຍຫາຍໃຈ:** ທ່ານຕ້ອງການຄວາມຊ່ວຍເຫລືອໃນການໃຊ້ເຄື່ອ ງຈັກປັ່ນອາກາດຫລືເຄື່ອງຈັກຊ່ວຍຫາຍໃຈຫລືນຳການຟອກເລືອດຈາກຜູ້ໃຫ້ການບໍຣິການທີ່ຖືກຈ່າຍເງິນໃຫ້ໂດຍກົມ DSHS ຜູ້ທີ່ມີຄຸນນະວຸດທິ. ຖ້າຫາກວ່າທ່ານອາສັຍຢູ່ເຮືອນ,ຄວາມຊ່ວຍເຫລືອຕ້ອງຖືກເອົາໃຫ້ໂດຍ:ຜູ້ໃຫ້ການບໍຣິການສ່ວນບຸກຄົນ (IP), ຜູ້ໃຫ້ການບໍຣິການຈາກອົງການ,ນາຍຫມໍເຝົ້າຍາມເອກຊົນ,ຫລືການເບິ່ງແຍງດູແລຊີ້ນຳໂດຍຕົນເອງ (IP ເທົ່ານັ້ນ).ຖ້າຫາກວ່າທ່ານອາສັຍຢູ່ບ່ອນບ້ານອາສັຍຢູ່,ມັນຕ້ອງຖືກເອົາໃຫ້ໂດຍ:ພະນັກງານຂອງເຮືອນຄອບຄົວຜູ້ໃຫຍ່/ເຮືອນກິນນອນ, RN/LPN ຂອງສະຖານທີ່ປິ່ນປົວ,ພະນັກງານຂອງສະຖານທີ່ປິ່ນປົວ,ນາຍຫມໍຍາມເອກຊົນ.

## ການອູ້ມຊູທີ່ບໍ່ເປັນທາງການ:

ການອູ້ມຊູທີ່ບໍ່ເປັນທາງການເປັນການຊ່ວຍເຫລືອທີ່ທ່ານໄດ້ຮັບຈາກຫມູ່ເພື່ອນ,ຄົນຂ້າງຄຽງ,ຫລືສະມາຊິກຄອບຄົວ. ການອູ້ມຊູທີ່ບໍ່ເປັນທາງການຍັງລວມເອົາໂຄງການເຊັ່ນວ່າການສຸຂະພາບກາງເວັນສຳລັບຜູ້ໃຫຍ່ຫລືບ່ອນຊ່ວຍເຫລືອຕາມຊຸມນຸມຊົນເຊັ່ນວ່າຈາກກຸ່ມໂບດຄຸນພໍ່.ຍົກເວັ້ນແຕ່ສຳລັບໂຄງການບາງຢ່າງເຊັ່ນວ່າການສຸຂະພາບກາງເວັນສຳລັບຜູ້ໃຫຍ່,ພວກເຮົາບໍ່ຈ່າຍໃຫ້ສຳລັບການອູ້ມຊູທີ່ບໍ່ເປັນທາງການ.ຖ້າຫາກວ່າທ່ານມີການອູ້ມຊູທີ່ບໍ່ເປັນທາງການ,ທ່ານໄດ້ຊົ່ວໂມງຫນ້ອຍກວ່າຂອງການຊ່ວຍເຫລືອທີ່ຖືກຈ່າຍເງິນໃຫ້ເມື່ອທ່ານໄດ້ຮັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຂອງທ່ານ. (ພວກເຮົາບໍ່ເບິ່ງໃສ່ການອູ້ມຊູທີ່ບໍ່ເປັນທາງການຖ້າຫາກວ່າທ່ານອາສັຍຢູ່ໃນບ່ອນຢູ່ແບບໂຮງຫມໍເຊັ່ນວ່າເຮືອນຄອບຄົວຜູ້ໃຫຍ່ຫລືເຮືອນກິນນອນ.) ການດັດແປງສຳລັບການອູ້ມຊູທີ່ບໍ່ເປັນທາງການໄດ້ຖືກອີງໃສ່ວ່າການຊ່ວຍເຫລືອເທົ່າໃດທີ່ທ່ານມີຢູ່ເພື່ອຈະຊ່ວຍຕອບສະນອງຄວາມຕ້ອງການຂອງທ່ານ.

ພວກເຮົາໃຊ້ຄຳເວົ້າຕໍ່ລົງໄປນີ້ເມື່ອເວລາເວົ້າເຖິງການອູ້ມຊູທີ່ບໍ່ເປັນທາງການ:

- **ຕອບສະນອງ**: ເມື່ອເວລາການອູ້ມຊູທີ່ບໍ່ເປັນທາງການຕອບສະນອງຄວາມຕ້ອງການຂອງທ່ານ <u>ທັງຫມົດ</u> ສຳລັບຄວາມຊ່ວຍເຫລືອນຳພາລະກິດ.ຕົວຢ່າງວ່າ,ທ່ານບໍ່ສາມາດທີ່ຈະເຮັດກິນແຕ່ວ່າລູກສາວຂອງທ່ານເຮັດກິນໃຫ້ທ່ານໂດຍບໍ່ຕ້ອງຈ່າຍເງິນ.

- **ຕອບສະນອງສ່ວນນຶ່ງ**: ເມື່ອການອູ້ມຊູທີ່ບໍ່ເປັນທາງການຕອບສະນອງ <u>ພາກສ່ວນນຶ່ງ</u> ຂອງຄວາມຕ້ອງການຂອງທ່ານສຳລັບຄວາມຊ່ວຍເຫລືອນຳພາລະກິດ.ຕົວຢ່າງ,ທ່ານບໍ່ສາມາດເຮັດກິນແລະຄົນຂ້າງຄຽງ,ຜູ້ທີ່ບໍ່ຖືກຈ່າຍເງິນໃຫ້,ເອົາຄາບເຂົ້າແລງມາໃຫ້ທ່ານ 2 ເທື່ອຕໍ່ອາທິດ.

- ຖ້າຫາກວ່າການອູ້ມຊູທີ່ບໍ່ເປັນທາງການຕອບສະນອງສ່ວນນຶ່ງຂອງຄວາມຕ້ອງການຂອງທ່ານສຳລັບຄວາມຊ່ວຍເຫລືອທີ່ມີພາລະກິດທີ່ພວກເຮົາເບິ່ງເພື່ອຈະເບິ່ງວ່າດົນປານໃດເທື່ອນຶ່ງທີ່ທ່ານຕ້ອງການຄວາມຊ່ວຍເຫລືອ.ແລ້ວພວກເຮົາເບິ່ງວ່າດົນປານໃດເທື່ອນຶ່ງທີ່ການອູ້ມຊູທີ່ບໍ່ເປັນທາງການຈະມີໄວ້ໃຫ້:

    - ຕ່ຳກວ່າ ¼ ເວລາ.

    - ¼ ຫາ ½ ຂອງເວລາ.

    - ½ ຫາ ¾ ຂອງເວລາ.

    - ຫລາຍເກີນກວ່າ ¾ ຂອງເວລາ.

- **ຍັງບໍ່ໄດ້ເທື່ອ**: ທ່ານບໍ່ການຊ່ວຍເຫລືອຈາກການອູ້ມຊູທີ່ບໍ່ເປັນທາງການ.ຕົວຢ່າງ,ທ່ານບໍ່ສາມາດເຮັດກິນໃຫ້ທ່ານເອງໄດ້ແລະບໍ່ມີຄົນໃດຈະເຮັດກິນໃຫ້ທ່ານ.

- **ກິຈກັມບໍ່ໄດ້ເກີດຂື້ນ/ລູກຄ້າປະຕິເສດ**: ທ່ານຕ້ອງການຄວາມຊ່ວຍເຫລືອນຳ ADL ຫລື  IADL, ແຕ່ວ່າທ່ານບໍ່ຕ້ອງການໃຫ້ຜູ້ໃຫ້ການເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງທ່ານຫລືຄົນໃດຄົນອຶກທີ່ຈະຊ່ວຍ.ຕົວຢ່າງວ່າ,ກ່ອນການຕີຣາຄາປະເມີນຜົນຂອງທ່ານ,ລູກສາວຂອງທ່ານມາຢາມຈາກນອກເມືອງແລະໄດ້ຊ່ວຍເຫລືອທ່ານນຳການເຂົ້າຫ້ອງນ້ຳ.ລາວຈະເມືອແລ້ວດຽວນີ້.ທ່ານບໍ່ຕ້ອງການຄວາມຊ່ວຍເຫລືອນຳການການເຂົ້າຫ້ອງນ້ຳຈາກຜູ້ໃຫ້ການເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງທ່ານຫລືຄົນໃດຄົນອຶກ.*

- **ກິຈກັມບໍ່ໄດ້ເກີດຂື້ນ/ລູກຄ້າບໍ່ສາມາດ**:ທ່ານບໍ່ສາມາດທີ່ຈະປະຕິບັດພາລະກິດ ADL ຫລື  IADL. ຕົວຢ່າງ,ຄົນເຫັນງຕົງບໍ່ໄດ້ບໍ່ສາມາດທີ່ຈະເຮັດ ADL ເພື່ອຍ່າງເຂົ້າຫ້ອງ.

- **ກິຈກັມບໍ່ໄດ້ເກີດຂື້ນ/ບໍ່ມີຜູ້ໃຫ້ການບໍຣິການ**: ທ່ານຕ້ອງການຄວາມຊ່ວຍເຫລືອນຳ ADL ຫລື IADL, ແລະຈະຕ້ອງຮັບເອົາຄວາມຊ່ວຍເຫລືອ,ແຕ່ວ່າພາລະກິດບໍ່ໄດ້ເກີດຂື້ນຍ້ອນວ່າທ່ານບໍ່ມີຜູ້ໃຫ້ການເບິ່ງແຍງດູແລເພື່ອຈະຊ່ວຍເຫລືອທ່ານ. ຕົວຢ່າງວ່າ,ທ່ານຕ້ອງການຄວາມຊ່ວຍເຫລືອນຳການອາບນ້ຳສາມເທື່ອຕໍ່ອາທິດ,ແຕ່ວ່າຜູ້ໃຫ້ການເບິ່ງແຍງດູແລບໍ່ຊາມາດຊ່ວຍທ່ານໄດ້ນຳພາລະກິດອັນນີ້ຍ້ອນວ່າລາວເຈັບຫລັງຂອງລາວ.*

* ເບິ່ງການບັນຣະຍາຍຂອງການໃຫ້ຄະແນນໃນກິຈກັມຂອງການດຳຣົງຊີວິດປະຈຳວັນໃນກ່ອນນີ້ຢູ່ໃນຈຸດສຳຄັນ.

ຕົວຢ່າງ:

ຕາຕະລາງຄົວຖ້ວນສຳລັບ ADLs/IADLs ທີ່ມີເງື່ອນໄຂທຸກໆຢ່າງແມ່ນຢູ່ທາງທ້າຍສຸດຂອງພາກສ່ວນຂອງການອູ້ມຊູ.ຕາຕະລາງອັນນັ້ນເອົາເປີເຊັນຂອງຄຸນຄ່າໃຫ້ສຳລັບ ADLs/IADLs ທີ່ມີເງື່ອນໄຂແຕ່ລະຢ່າງ.

ຕົວຢ່າງ #1:

Ginny ມີອາຍຸ 85 ປີ.ລາວອາສັຍຢູ່ຄົນດຽວຢູ່ໃນຫ້ອງແຖວຜູ້ເຖົ້າ.ລາວໄດ້ 47 ຊົ່ວໂມງ"ພື້ນຖານ"ສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຕໍ່ເດືອນ. Ginny ຕ້ອງການຄວາມຊ່ວຍເຫລືອນຳການນຸ່ງເຄື່ອງ,ການກິນຢາຂອງລາວ,ການອາບນ້ຳ,ອະນາມັຍສ່ວນຕົວ,ການຍ່າງໄປຍ່າງມາຢູ່ນອກຫ້ອງແຖວຂອງລາວ,ການເຮັດກິນ,ວຽກບ້ານ,ການອອກຕະລາດ,ແລະການໄປຫາຫມາຍນັດຫມໍຂອງລາວ.

ຄອບຄົວຂອງ Ginny ເຮັດຄາບເຂົ້າທ່ຽງແລະຄາບເຂົ້າແລງທຸກໆຢ່າງໃຫ້ລາວ.ເຂົາເຈົ້າແວ່ມາແລະເຮັດຄາບເຂົ້າທ່ຽງຫລືຄາບເຂົ້າແລງໃຫ້ລາວ.ບາງເທື່ອເວລາເຂົາເຈົ້າບໍ່ສາມາດແວ່ມາ, Ginny ອຸ່ນແນວໃດແນວນຶ່ງທີ່ເຂົາເຈົ້າໄດ້ເຮັດໄວ້ໃຫ້ລາວໂດຍລ່ວງຫນ້າແລ້ວແລະປະໄວ້ໃນຕູ້ເຢັນຫລືຕູ້ນ້ຳກ້ອນຂອງລາວ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Ginny ເຮັດຄາບເຂົ້າເຊົ້າໃຫ້ Ginny.

Ginny ໄດ້ຮັບຄວາມຊ່ວຍເຫລືອຈາກຄອບຄົວຂອງລາວຜູ້ທີ່ເຮັດຄາບເຂົ້າ 14 ຄາບຂອງ 21 ຄາບທີ່ລາວກິນທຸກໆອາທິດ. ອັນນີ້ແມ່ນ 2/3 ຂອງຄາບເຂົ້າທີ່ Ginny ກິນ. 2/3 ແມ່ນເສດສ່ວນຣະຫວ່າງ ½ - ¾. ຄວາມຕ້ອງການຂອງ Ginnyສຳລັບຄວາມຊ່ວຍເຫລືອນຳການເຮັດກິນໄດ້ຖືກ"ຕອບສະນອງພາກສ່ວນນຶ່ງ" ½ - ¾ ຂອງເວລາໂດຍຄອບຄົວຂອງລາວ.

ຄວາມຕ້ອງການທັງຫມົດຂອງ Ginny ສຳລັບຄວາມຊ່ວຍເຫລືອນຳການນຸ່ງເຄື່ອງ,ການກິນຢາຂອງລາວ,ການອາບນ້ຳ,ອະນາມັຍສ່ວນຕົວ,ວຽກບ້ານ,ການອອກຕະລາດ,ແລະການໄປຫາຫມາຍນັດຫມໍຂອງລາວແມ່ນ"ບໍ່ຖືກຕອບສະນອງເທື່ອ."ອັນນີ້ແມ່ນຍ້ອນວ່າ Ginny ບໍ່ມີຄົນໃດທີ່ຈະຊ່ວຍເຫລືອລາວນຳສິ່ງເຫລົ່ານີ້ຍົກເວັ້ນແຕ່ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ.

ຊົ່ວໂມງເບິ່ງແຍງດູແລສ່ວນຕົວຂອງ Ginny ໄດ້ຖືກລຸດລົງໂດຍ 3 ຊົ່ວໂມງແຕ່ລະເດືອນຍ້ອນການຊ່ວຍເຫລືອຂອງຄອບຄົວຂອງລາວ.ລາວບໍ່ຕ້ອງການຄວາມຊ່ວຍເຫລືອຫລາຍປານໃດຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ.ການຄິດໄລ່ອັນນີ້ໄດ້ຖືກອະທິບາຍຢູ່ຂ້າງລຸ່ມນີ້.ອັນນີ້ແມ່ນອີງຕາມກົດຣະບຽບຂອງກົມ DSHS.

ADLs ແລະ IADLs ທີ່ມີເງື່ອນໄຂທີ່ Ginny ຕ້ອງການຄວາມຊ່ວຍເຫລືອນຳໄດ້ຖືກບວກເຂົ້າໃສ່ກັນ.ບໍ່ແມ່ນວ່າ ADL ທຸກໆອັນຈະແມ່ນ ADL ທີ່ມີເງື່ອນໄຂ. Ginny ຕ້ອງການຄວາມຊ່ວຍເຫລືອນຳ 4 ADLs ທີ່ມີເງື່ອນໄຂ.ມັນແມ່ນການນຸ່ງເຄື່ອງ,ການກິນຢາຂອງລາວ,ການອາບນ້ຳ,ແລະອະນາມັຍສ່ວນຕົວ.ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Ginny ນຳການຍ່າງໄປຍ່າງມາຢູ່ນອກຫ້ອງແຖວຂອງລາວບໍ່ແມ່ນ ADL ທີ່ມີເງື່ອນໄຂ.

Ginny ຕ້ອງການຄວາມຊ່ວຍເຫລືອນຳ 4 IADLs ທີ່ມີເງື່ອນໄຂ.ມັນແມ່ນການເຮັດກິນ,ວຽກບ້ານ,ການອອກຕະລາດ,ແລະການໄປຫາຫມາຍນັດຫມໍຂອງລາວ.

ກົດລະບຽບຂອງກົມ DSHS ແຕ່ງຕັ້ງເປີເຊັນຂອງຄຸນຄ່າໃສ່ຈຳນວນການຊ່ວຍເຫລືອທີ່Ginny ມີໄວ້ໃຫ້ສຳລັບ ADL ຫລື IADL ທີ່ມີເງື່ອນໄຂແຕ່ລະອັນ.ເປີເຊັນຂອງຄຸນຄ່າເບິ່ງໃສ່ສອງຢ່າງ:

- ບໍ່ກ່ຽວວ່າມັນຈະມີການຊ່ວຍເຫລືອອູ້ມຊູທີ່ບໍ່ເປັນທາງການແນວໃດຫລືບໍ່ສຳລັບ ADL/IADLທີ່ມີເງື່ອນໄຂແຕ່ລະຢ່າງ; ແລະ
- ການຊ່ວຍເຫລືອເທົ່າໃດທີ່ມີຢູ່,ຖ້າມີ.

ອັນນີ້ແມ່ນຕາຕະລາງໂດຍສະເພາະກ່ຽວກັບ Ginny ແລະ ADLs/IADLs ທີ່ມີເງື່ອນໄຂຂອງລາວ.Ginny ມີການຊ່ວຍເຫລືອພາກສ່ວນນຶ່ງຫລືການຊ່ວຍເຫລືອມີໄວ້ໄວ້ໃຫ້ສຳລັບການເຮັດກິນຈາກຄອບຄົວຂອງລາວ. Ginny ບໍ່ມີການຊ່ວຍເຫລືອແນວໃດຫລືການຊ່ວຍເຫລືອມີໄວ້ໃຫ້ (ຍົກເວັ້ນຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ) ສຳລັບແນວໃດແນວນຶ່ງອີກ.

ຢູ່ໃນຕາຕະລາງຂ້າງລຸ່ມນີ້,ເປັນຫຍັງ "n/a" (ບໍ່ກ່ຽວນຳ) ຈຶ່ງຖືກໝາຍໃສ່ສຳລັບການຊ່ວຍເຫລືອມີໄວ້ໃຫ້ສຳລັບທຸກໆຢ່າງນອກຈາກ "ການເຮັດກິນ"? ຍ້ອນວ່າການຊ່ວຍເຫລືອມີໄວ້ໃຫ້ໄດ້ຖືກໝາຍໃສ່ແຕ່ ຖ້າຫາກວ່າ ມັນມີການຊ່ວຍເຫລືອພາກສ່ວນນຶ່ງທີ່ມີໄວ້ໃຫ້ສຳລັບ ADL/IADL. N/A ໄດ້ຖືກໝາຍໃສ່ເມື່ອເວລາ:

- ມັນບໍ່ມີການຊ່ວຍເຫລືອມີໄວ້ໃຫ້ (ບໍ່ຕອບສະນອງເທື່ອ) ;
- ການຊ່ວຍເຫລືອທັງໝົດທີ່ມີໄວ້ໃຫ້ (ຕອບສະນອງ);
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານບໍ່ສາມາດຫລືທ່ານບໍ່ມີຜູ້ໃຫ້ການບໍລິການ;
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານປະຕິເສດການຊ່ວຍເຫລືອນຳອັນນີ້.

| ADLs/IADLs | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
|---|---|---|---|
| ການນຸ່ງເຄື່ອງ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ຄວາມຊ່ວຍເຫລືອນຳຢາ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການອາບນ້ຳ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ອະນາມັຍສ່ວນຕົວ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການເຮັດຄາບເຂົ້າ | ຕອບສະນອງສ່ວນນຶ່ງ | ½ - ¾ ຂອງເວລາ | .1 |
| ວຽກບ້ານ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການອອກຕະລາດ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການເດີນທາງໄປຫາ ໝາຍນັດໝໍ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |

ທັງໝົດຂອງເປີເຊັນຂອງຄຸນຄ່າ = 7.1

ຈຳນວນທັງໝົດ # ຂອງ ADLs/IADLS ທີ່ມີເງື່ອນໄຂ = 8

ຂັ້ນທີ 1 ແລະ 2 ແມ່ນທີ່ຈະບວກເຂົ້າໃສ່ກັນຈຳນວນທັງຫມົດຂອງເປີເຊັນຂອງຄຸນຄ່າແລະຈຳນວນທັງຫມົດຂອງ ADLs/IADLs ທີ່ມີເງື່ອນໄຂ.ຈົ່ງເບິ່ງຂ້າງເທິງ.

ຂັ້ນທີ 3 ແມ່ນທີ່ຈະຫານຈຳນວນທັງຫມົດຂອງເປີເຊັນຂອງຄຸນຄ່າໃສ່ຈຳນວນຂອງ ADLs/IADLs ທີ່ມີເງື່ອນໄຂ.ຈຳນວນນັ້ນແມ່ນ ຄຸນຄ່າ A.  7.1 ÷ 8 = .8875 = ຄຸນຄ່າ A. ເລກນີ້ໄດ້ຖືກໄລ່ໃຫ້ໄກ້ສຸດມາເປັນ .89.

ຂັ້ນທີ 4 ແມ່ນທີ່ຈະລົບຄຸນຄ່າ A ຈາກ 1.  1 – .89 = 0.11. ອັນນີ້ແມ່ນຄຸນຄ່າ B.

ຂັ້ນທີ 5 ແມ່ນທີ່ຈະຫານຄຸນຄ່າ B ໃຫ້ 3. .11 ÷ 3 = .036. ອັນນີ້ແມ່ນຄຸນຄ່າ C. ເລກນີ້ໄດ້ຖືກໄລ່ໃຫ້ໄກ້ສຸດມາເປັນ .04.

ຂັ້ນທີ 6 ແມ່ນທີ່ຈະບວກຄຸນຄ່າ A ແລະຄຸນຄ່າ C.  .89 + .04 = .93. ອັນນີ້ແມ່ນຄຸນຄ່າ D.

ຂັ້ນທີ 7 ແມ່ນທີ່ຈະຄູນຄຸນຄ່າ D ໃສ່ຊົ່ວໂມງພື້ນຖານຂອງ Ginny  (ຊຶ່ງແມ່ນ47). 47 x .93 = 43.71.ເລກນີ້ໄດ້ຖືກໄລ່ໃຫ້ໄກ້ສຸດມາເປັນ 44. ອັນນີ້ແມ່ນຈຳນວນຂອງຊົ່ວໂມງເບິ່ງແຍງດູແລສ່ວນຕົວທີ່ Ginny ຈະໄດ້ຮັບແຕ່ລະເດືອນ.

ຊົ່ວໂມງພື້ນຖານຂອງ Ginny ຈະຖືກລຸດລົງໂດຍ 3 ຊົ່ວໂມງຕໍ່ເດືອຍ້ອນວ່າຄອບຄົວຂອງລາວເຮັດອາຫານທ່ຽງແລະອາຫານຄ່ຳຂອງລາວ. (47 - 44 = 3 ຫນ້ອຍຊົ່ວໂມງກວ່າຕໍ່ເດືອນ)

ຕົວຢ່າງ **#2:**

Sam ມີອາຍຸ 37 ປີ.ລາວເປັນອັມມະພາດຂາທັງສອງຂ້າງ,ໃຊ້ຕັ່ງນັ່ງລໍ້ຊຸກ,ແລະອາສັຍຢູ່ນຳຂາຄູ່ຢູ່ນຳກັນຂອງລາວ, John. John ເຮັດວຽກຢູ່ນອກເຮືອນຂອງເຂົາເຈົ້າ. Sam ຕ້ອງການຄວາມຊ່ວຍເຫລືອນຳການເຫນັງຕົງຢູ່ເທິງຕຽງ,ການຍ້າຍທີ່,ການໃຊ້ສ້ວມຖ່າຍ,ການນຸ່ງເຄື່ອງ,ອະນາມັຍສ່ວນຕົວ,ການອາບນ້ຳ,ການເຮັດກິນ,ວຽກບ້ານ,ແລະການອອກຕະລາດ.ຍ້ອນວ່າລາວເປັນອັມມະພາດລາວ,ບໍ່ສາມາດທີ່ຈະຍ່າງໄດ້. Sam ໄດ້ 327 ຊົ່ວໂມງ "ພື້ນຖານ" ສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຕໍ່ເດືອນ.

John ເຮັດອາຫານເຊົ້າແລະອາຫານທ່ຽງຂອງ Sam ໃນວັນເສົາແລະວັນອາທິດ.John ເຮັດອາຫານຄ່ຳຂອງ Sam 3 ເທື່ອຕໍ່ອາທິດ.ຜູ້ເບິ່ງແຍງດູແລຂອງ Sam ເຮັດອາຫານເຊົ້າແລະອາຫານທ່ຽງຂອງລາວໃນຣະຫວ່າງວັນກາງອາທິດ. John ເຮັດວຽກໃນອີກ 4 ຄືນອື່ນເພາະສະນັ້ນແລ້ວຜູ້ເບິ່ງແຍງດູແລຂອງ Sam ເຮັດອາຫານຄ່ຳຂອງ Sam ໃນຄືນເຫລົ່ານັ້ນ.

Sam ໄດ້ຮັບຄວາມຊ່ວຍເຫລືອຈາກ John ຜູ້ທີ່ເຮັດຄາບເຊົ້າ 7 ເທື່ອຂອງ 21 ເທື່ອທີ່ Sam ກິນທຸກໆອາທິດ.ອັນນີ້ແມ່ນ 1/3 ຂອງຄາບເຊົ້າທີ່ຖືກຈັດແຈງໃຫ້ Sam. 1/3 ແມ່ນເສດສ່ວນຣະຫວ່າງ ¼ - ½. ຄວາມຕ້ອງການຂອງ Sam ສຳລັບຄວາມຊ່ວຍເຫລືອໃນການເຮັດຄາບເຊົ້າແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ"ໂດຍ John ຊຶ່ງແມ່ນ ¼ - ½ ຂອງເວລາ.

John ເຮັດການອອກຕະລາດແລະວຽກບ້ານຂອງ Sam ທຸກໆຢ່າງ.ຄວາມຕ້ອງການຂອງ Sam ສຳລັບວຽກບ້ານແລະການອອກຕະລາດແມ່ນ"ຖືກຕອບສະນອງ".

ຄວາມຕ້ອງການຂອງ Sam ທຸກໆຢ່າງສໍາລັບການເຫນັງຕີງຢູ່ເທິງຕຽງ,ການຍ້າຍທີ່,ການໃຊ້ສ້ວມຖ່າຍ,ການນຸ່ງເຄື່ອງ, ອະນາມັຍສ່ວນຕົວ,ແລະການອາບນໍ້າແມ່ນ"ຖືກຕອບສະນອງ".ອັນນີ້ແມ່ນຍ້ອນວ່າ Sam ບໍ່ມີຄົນໃດຄົນນຶ່ງທີ່ຈະຊ່ວຍ ເຫລືອລາວນໍາສິ່ງເຫລົ່ານີ້ຍົກເວັ້ນແຕ່ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ.

ຊົ່ວໂມງເບິ່ງແຍງດູແລສ່ວນຕົວຂອງ Sam ໄດ້ຖືກລຸດລົງໂດຍ 62 ຊົ່ວໂມງຕໍ່ເດືອນ.ຍ້ອນຄວາມຊ່ວຍເຫລືອຂອງ John, Sam ບໍ່ຕ້ອງການຄວາມຊ່ວຍເຫລືອຫລາຍເທົ່າໃດຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ.ການຄິດໄລ່ອັນນັ້ນໄດ້ຖືກອະທິບາຍ ຢູ່ຂ້າງລຸ່ມນີ້.ມັນໄດ້ຖືກອີງໃສ່ກົດລະບຽບຂອງກົມ DSHS.

ADLs ແລະ IADLs ທີ່ມີເງື່ອນໄຂທີ່ Sam ຕ້ອງການຄວາມຊ່ວຍເຫລືອນໍາໄດ້ຖືກຖືກຕື່ມເຂົ້າໃສ່ນໍາກ່ອນ.ບໍ່ແມ່ນວ່າ ADL ທຸກໆຢ່າງຈະແມ່ນ ADL ທີ່ມີເງື່ອນໄຂ. Sam ຕ້ອງການຄວາມຊ່ວຍເຫລືອນໍາ ADLs ທີ່ມີເງື່ອນໄຂ 7 ຢ່າງ.ມັນແມ່ນການ ເຫນັງຕີງຢູ່ເທິງຕຽງ,ການຍ້າຍທີ່,ການໃຊ້ສ້ວມຖ່າຍ,ການນຸ່ງເຄື່ອງ,ອະນາມັຍສ່ວນຕົວ,ແລະການອາບນໍ້າ.ຍ້ອນ Sam ບໍ່ສາມາດຍ່າງໄດ້, ADL "ຍ່າງເຂົ້າຫ້ອງ"ໄດ້ຖືກໃຫ້ຄະແນນວ່າ "ບໍ່ໄດ້ເກີດຂຶ້ນ/ລູກຄ້າບໍ່ສາມາດ." ການຍ່າງເຂົ້າຫ້ອງຈະ ຖືກໄລ່ວ່າເປັນ ADL ທີ່ມີເງື່ອນໄຂອີກຄືກັນ.

Sam ຕ້ອງການຄວາມຊ່ວຍເຫລືອນໍາ IADLs ທີ່ມີເງື່ອນໄຂ 3 ຢ່າງ.ມັນແມ່ນການເຮັດກິນ,ວຽກບ້ານ,ແລະການອອກຕະລາດ.

ກົດລະບຽບຂອງກົມ DSHS ແຕ່ງຕັ້ງເປີເຊັນຂອງຄຸນຄ່າໃສ່ຈໍານວນການຊ່ວຍເຫລືອທີ່Sam ມີໄວ້ໃຫ້ສໍາລັບ ADL ຫລື IADL ທີ່ມີເງື່ອນໄຂແຕ່ລະອັນ.ເປີເຊັນຂອງຄຸນຄ່າເບິ່ງໃສ່ສອງຢ່າງ:

- ບໍ່ກ່ຽວວ່າມັນຈະມີການຊ່ວຍເຫລືອອູ້ມຊູທີ່ບໍ່ເປັນທາງການແນວໃດຫລືບໍ່ສໍາລັບ ADL/IADLທີ່ມີເງື່ອນໄຂແຕ່ລະ ຢ່າງ;ແລະ
- ການຊ່ວຍເຫລືອເທົ່າໃດທີ່ມີຢູ່,ຖ້າມີ.

ອັນນີ້ແມ່ນຕາຕະລາງໂດຍສະເພາະກ່ຽວກັບ Sam ແລະ ADLs/IADLs ທີ່ມີເງື່ອນໄຂຂອງລາວ.Sam ມີການຊ່ວຍເຫລືອ ພາກສ່ວນນຶ່ງຫລືການຊ່ວຍເຫລືອມີໄວ້ໄວ້ໃຫ້ສໍາລັບການເຮັດກິນ.ລາວມີການຊ່ວຍເຫລືອເຕັມທີ່ຫລືການຊ່ວຍເຫລືອສໍາລັບການອອກ ຕະລາດແລະວຽກບ້ານ.Sam ບໍ່ມີການຊ່ວຍເຫລືອແນວໃດຫລືການຊ່ວຍເຫລືອມີໄວ້ໃຫ້ (ຍົກເວັ້ນຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍ ເງິນໃຫ້ຂອງລາວ) ສໍາລັບແນວໃດແນວນຶ່ງອີກ.

ການຊ່ວຍເຫລືອທີ່ມີໄວ້ໃຫ້ສໍາລັບທຸກໆຢ່າງນອກຈາກການເຮັດກິນໄດ້ຖືກຫມາຍໃສ່ວ່າ n/a (ບໍ່ກ່ຽວນໍາ) ຢູ່ໃນຕາຕະ ລາງຂ້າງລຸ່ມ,ເປັນຫຍັງ "n/a" ຈຶ່ງຖືກຫມາຍໃສ່ສໍາລັບການຊ່ວຍເຫລືອທີ່ມີໄວ້ໃຫ້ສໍາລັບແນວອື່ນອີກ? N/A ໄດ້ຖືກຫມາຍ ໃສ່ເມື່ອເວລາ:

- ມັນບໍ່ມີການຊ່ວຍເຫລືອມີໄວ້ໃຫ້ (ບໍ່ຕອບສະນອງເທື່ອ) ;
- ການຊ່ວຍເຫລືອທັງຫມົດທີ່ມີໄວ້ໃຫ້ (ຕອບສະນອງ);
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານບໍ່ສາມາດຫລືທ່ານບໍ່ມີຜູ້ໃຫ້ການບໍລິການ;
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານປະຕິເສດການຊ່ວຍເຫລືອນໍາອັນນີ້.

| ADLs/IADLs | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
|---|---|---|---|
| ການເຫນັງຕີງໄປມາ ຢູ່ຕຽງ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການໂອນໄປ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ຍ່າງເຂົ້າໃນຫ້ອງ | ບໍ່ໄດ້ເກີດຂຶ້ນ | ບໍ່ກ່ຽວ | 1 |
| ການໃຊ້ສ້ວມຖ່າຍ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການນຸ່ງເຄື່ອງ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ອະນາມັຍສ່ວນຕົວ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການອາບນໍ້າ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການເຮັດຄາບເຂົ້າ | ຕອບສະນອງສ່ວນນຶ່ງ | ¼ - ½ | .2 |
| ການອອກຕະລາດ | ຕອບສະນອງ | ບໍ່ກ່ຽວ | 0 |
| ວຽກບ້ານ | ຕອບສະນອງ | ບໍ່ກ່ຽວ | 0 |

ທັງຫມົດຂອງເປີເຊັນຂອງຄຸນຄ່າ = 7.2
ຈຳນວນທັງຫມົດ # ຂອງ ADLs/IADLS ທີ່ມີເງື່ອນໄຂ = 10

ຂັ້ນທີ 1 ແລະ 2 ແມ່ນທີ່ຈະບວກເຂົ້າໃສ່ກັນຈຳນວນທັງຫມົດຂອງເປີເຊັນຂອງຄຸນຄ່າແລະຈຳນວນທັງຫມົດຂອງ ADLs/IADLs ທີ່ມີເງື່ອນໄຂ.ຈົ່ງເບິ່ງຂ້າງເທິງ.

ຂັ້ນທີ 3 ແມ່ນທີ່ຈະຫານຈຳນວນທັງຫມົດຂອງເປີເຊັນຂອງຄຸນຄ່າໃສ່ຈຳນວນຂອງ ADLs/IADLs ທີ່ມີເງື່ອນໄຂ.ຈຳນວນນັ້ນແມ່ນ ຄຸນຄ່າ A. 7.2 ÷ 10 = .72 = ຄຸນຄ່າ A.

ຂັ້ນທີ 4 ແມ່ນທີ່ຈະລົບຄຸນຄ່າ A ຈາກ 1. 1 – .72 = 0.28. ອັນນີ້ແມ່ນຄຸນຄ່າ B.

ຂັ້ນທີ 5 ແມ່ນທີ່ຈະຫານຄຸນຄ່າ B ໃຫ້ 3. .28 ÷ 3 = .093. ອັນນີ້ແມ່ນຄຸນຄ່າ C. ເລກນີ້ໄດ້ຖືກໄລ່ໃຫ້ໃກ້ສຸດມາເປັນ .09.

ຂັ້ນທີ 6 ແມ່ນທີ່ຈະບວກຄຸນຄ່າ A ແລະຄຸນຄ່າ C. .72 + .09 = .81. ອັນນີ້ແມ່ນຄຸນຄ່າ D.

ຂັ້ນທີ 7 ແມ່ນທີ່ຈະຄູນຄຸນຄ່າ D ໃສ່ຊົ່ວໂມງພື້ນຖານຂອງ Sam (ຊຶ່ງແມ່ນ327). 327 x .81 = 264.87.ເລກນີ້ໄດ້ຖືກໄລ່ໃຫ້ໃກ້ສຸດມາເປັນ 265. ອັນນີ້ແມ່ນຈຳນວນຂອງຊົ່ວໂມງເບິ່ງແຍງດູແລສ່ວນຕົວທີ່ Sam ຈະໄດ້ຮັບແຕ່ລະເດືອນ.

ຊົ່ວໂມງພື້ນຖານຂອງ Sam ຈະຖືກລຸດລົງໂດຍ 62 ຊົ່ວໂມງຕໍ່ເດືອຍ້ອນວ່າ Johnເຮັດອາຫານບາງຄາບໃຫ້ລາວແລະເຮັດວຽກບ້ານແລະການອອກຕະລາດທຸກໆຢ່າງ.(327 - 265 = 62 ຫນ້ອຍຊົ່ວໂມງກວ່າຕໍ່ເດືອນ)

ຕົວຢ່າງ **#3:**

Bob ມີອາຍຸ 75 ປີ.ລາວອາສັຍຢູ່ຄົນດຽວຢູ່ໃນເຮືອນໂຫລຂອງລາວຢູ່ເທິງດິນກວ້າງ. Bob ຕ້ອງການຄວາມຊ່ວຍເຫລືອນຳການນຸ່ງເຄື່ອງ,ອະນາມັຍສ່ວນຕົວ,ການອາບນໍ້າ,ການເຮັດກິນ,ວຽກບ້ານ,ແລະການອອກຕະລາດ. Bob ໄດ້ຮັບ 69 ຊົ່ວໂມງ"ພື້ນຖານ"ສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ເຮືອນຕໍ່ເດືອນ.

ລູກຊາຍຂອງ Bob, ທ້າວ Joe ມາຢາມລາວໃນວັນເສົາວັນອາທິດ.ລາວມາຮອດກ່ອນ Bob ໄປນອນໃນວັນສຸກແລະກັບເມືອໃນວັນອາທິດຫລັງຈາກທ່ຽງ. Joe ເຮັດຄາບເຂົ້າຂອງ Bob ທຸກໆເທື່ອໃນວັນເສົາແລະຄາບເຂົ້າວັນອາທິດຂອງ Bob ສອງເທື່ອ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Bob ເຮັດຄາບເຂົ້າເຫລືອນັ້ນໃຫ້ Bob.

Bob ໄດ້ຮັບຄວາມຊ່ວຍເຫລືອຈາກ Joe ຜູ້ທີ່ເຮັດຄາບເຂົ້າ 5 ເທື່ອຂອງ 21 ເທື່ອທີ່ Bob ກິນທຸກໆອາທິດ.ອັນນີ້ແມ່ນຕ່ຳກວ່າ ¼ ຫນ້ອຍນຶ່ງຂອງຄາບເຂົ້າທີ່ຖືກຈັດແຈງໃຫ້ Bob. ຕ່ຳກວ່າ ¼ ຂອງເວລາຫນ້ອຍນຶ່ງແມ່ນເສດສ່ວນຣະຫວ່າງ 0 - ¼. ຄວາມຕ້ອງການຂອງ Bob ສຳລັບຄວາມຊ່ວຍເຫລືອໃນການເຮັດຄາບເຂົ້າແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ"ໂດຍ Joe ຊຶ່ງຕ່ຳກວ່າ ¼ ຂອງເວລາ.

Joe ຊ່ວຍເຫລືອ Bob ນຳການນຸ່ງສິ້ງນອນຂອງລາວໃນວັນສຸກແລະກາງຄືນວັນເສົາແລະນຳການນຸ່ງເຄື່ອງໃນວັນເສົາແລະເຊົ້າວັນອາທິດ. Bob ຕ້ອງການຄວາມຊ່ວຍເຫລືອຊ່ວຍນຸ່ງເຄື່ອງ 14 ເທື່ອໃນຣະຫວ່າງອາທິດ. Joe ຊ່ວຍເຫລືອ Bob 4 ເທື່ອຂອງເວລານັ້ນຊຶ່ງແມ່ນກາຍເກີນ ¼ ຂອງເວລາຫນ້ອຍນຶ່ງ.ຫລາຍກວ່າ ¼ ຫນ້ອຍນຶ່ງແມ່ນເສດສ່ວນຣະຫວ່າງ ¼ - ½. ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Bob ນຳການນຸ່ງເຄື່ອງແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ"ໂດຍ Joe ¼ - ½ ຂອງເວລາ.

ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Bob ທຸກໆຢ່າງນຳອະນາມັຍສ່ວນຕົວ,ວຽກເຮືອນ,ແລະການອອກຕະລາດແມ່ນ "ບໍ່ຖືກຕອບສະນອງ".ອັນນີ້ແມ່ນຍ້ອນວ່າ Bob ບໍ່ມີຄົນໃດທີ່ຈະຊ່ວຍເຫລືອລາວໄດ້ນຳສິ່ງເຫລົ່ານີ້ນອກຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ.ເຖິງແມ່ນວ່າ Bob ຈະຕ້ອງການຄວາມຊ່ວຍເຫລືອນຳການອາບນ້ຳກໍຕາມ,ລາວຈະບໍ່ຍອມຮັບເອົາຄວາມຊ່ວຍເຫລືອຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ, Joe, ຫລືຄົນອື່ນຄົນໃດຄົນນຶ່ງອີກ.

ຊົ່ວໂມງເບິ່ງແຍງດູແລສ່ວນຕົວຂອງ Bob ໄດ້ຖືກລຸດລົງໂດຍ 10 ຊົ່ວໂມງຕໍ່ເດືອນຍ້ອນຄວາມຊ່ວຍເຫລືອຂອງ Joe ແລະຍ້ອນວ່າ Bob ບໍ່ຍອມຮັບເອົາຄວາມຊ່ວຍເຫລືອນຳການອາບນ້ຳ.ການຄິດໄລ່ອັນນັ້ນໄດ້ຖືກອະທິບາຍຢູ່ຂ້າງລຸ່ມນີ້.ມັນໄດ້ຖືກອີງໃສ່ກົດຣະບຽບຂອງກົມ DSHS.

ADLs ແລະ IADLs ທີ່ມີເງື່ອນໄຂໄດ້ຮັບທີ່ Bob ຕ້ອງການຄວາມຊ່ວຍເຫລືອນຳໄດ້ຖືກບວກເຂົ້າກັນກ່ອນ.ບໍ່ແມ່ນວ່າທຸກໆ ADL ຈະແມ່ນ ADL ທີ່ມີເງື່ອນໄຂໄດ້ຮັບ.Bob ຕ້ອງການຄວາມຊ່ວຍເຫລືອນຳ 3 ADLs. ມັນແມ່ນການນຸ່ງເຄື່ອງ,ອະນາມັຍສ່ວນຕົວ,ແລະການອາບນ້ຳ.ແຕ່ວ່າ,ຍ້ອນວ່າ Bob ບໍ່ຮັບເອົາຄວາມຊ່ວຍເຫລືອນຳການອາບນ້ຳ,ມັນບໍ່ສາມາດຖືກນັບວ່າເປັນ ADL ທີ່ມີເງື່ອນໄຂໄດ້ຮັບອັນນຶ່ງ. Bob ມີADLs ທີ່ມີເງື່ອນໄຂໄດ້ຮັບ 2 ຢ່າງທີ່ມີເງື່ອນໄຂໄດ້ຮັບເອົາໄດ້.

Bob ຕ້ອງການຄວາມຊ່ວຍເຫລືອນຳ 3 IADLs ທີ່ມີເງື່ອນໄຂໄດ້ຮັບ.ມັນແມ່ນການເຮັດຄາບເຂົ້າ,ວຽກບ້ານ,ແລະການອອກຕະລາດ.

ກົດຣະບຽບຂອງກົມ DSHS ແຕ່ງຕັ້ງເປີເຊັນຂອງຄຸນຄ່າໃສ່ຈຳນວນການຊ່ວຍເຫລືອທີ່Bob ມີໄວ້ໃຫ້ສຳລັບ ADL ຫລື IADL ທີ່ມີເງື່ອນໄຂແຕ່ລະອັນ.ເປີເຊັນຂອງຄຸນຄ່າເບິ່ງໃສ່ 2 ຢ່າງ:

- ບໍ່ກ່ຽວວ່າມັນຈະມີການຊ່ວຍເຫລືອອູ້ມຊູທີ່ບໍ່ເປັນທາງການແນວໃດຫລືບໍ່ສຳລັບ ADL/IADLທີ່ມີເງື່ອນໄຂແຕ່ລະຢ່າງ;ແລະ
- ການຊ່ວຍເຫລືອເທົ່າໃດທີ່ມີຢູ່,ຖ້າມີ.

ອັນນີ້ແມ່ນຕາຕະລາງໂດຍສະເພາະກ່ຽວກັບ Bob ແລະ ADLs/IADLs ທີ່ມີເງື່ອນໄຂຂອງລາວ.Bob ມີການຊ່ວຍເຫລືອພາກສ່ວນນຶ່ງຫລືການຊ່ວຍເຫລືອມີໄວ້ໄວ້ໃຫ້ສຳລັບການເຮັດກິນແລະການນຸ່ງເຄື່ອງ.

ການຊ່ວຍເຫລືອທີ່ມີໄວ້ໃຫ້ສຳລັບທຸກໆຢ່າງນອກຈາກການເຮັດກິນແລະການນຸ່ງເຄື່ອງໄດ້ຖືກໝາຍໃສ່ວ່າ n/a (ບໍ່ກ່ຽວນຳ). ຢູ່ໃນຕາຕະລາງຂ້າງລຸ່ມ,ເປັນຫຍັງ "n/a" ຈຶ່ງຖືກໝາຍໃສ່ສຳລັບການຊ່ວຍເຫລືອທີ່ມີໄວ້ໃຫ້ສຳລັບອະນາມັຍສ່ວນຕົວ, ການອອກຕະລາດ,ວຽກບ້ານ,ແລະການອາບນ້ຳ? N/A ໄດ້ຖືກໝາຍໃສ່ເມື່ອເວລາ:

- ມັນບໍ່ມີການຊ່ວຍເຫລືອມີໄວ້ໃຫ້ (ບໍ່ຕອບສະໜອງເທື່ອ) ;
- ການຊ່ວຍເຫລືອທັງໝົດທີ່ມີໄວ້ໃຫ້ (ຕອບສະໜອງ);
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານບໍ່ສາມາດຫລືທ່ານບໍ່ມີຜູ້ໃຫ້ການບໍລິການ;
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານປະຕິເສດການຊ່ວຍເຫລືອນຳອັນນີ້.

| ADLs/IADLs | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
|---|---|---|---|
| ການນຸ່ງເຄື່ອງ | ຕອບສະໜອງສ່ວນນຶ່ງ | ¼ - ½ | .55 |
| ອະນາມັຍສ່ວນຕົວ | ບໍ່ຖືກຕອບສະໜອງ | ບໍ່ກ່ຽວ | 1 |
| ການອາບນ້ຳ | ປະຕິເສດບໍ່ຮັບເອົາ | ບໍ່ກ່ຽວ | 0 |
| ການເຮັດອາຫານເຂົ້າ | ຕອບສະໜອງສ່ວນນຶ່ງ | ຕ່ຳກວ່າ ¼ | .3 |
| ການອອກຕະລາດ | ບໍ່ຖືກຕອບສະໜອງ | ບໍ່ກ່ຽວ | 1 |
| ວຽກບ້ານ | ບໍ່ຖືກຕອບສະໜອງ | ບໍ່ກ່ຽວ | 1 |

ທັງໝົດຂອງເປີເຊັນຂອງຄຸນຄ່າ = 3.85
ຈຳນວນທັງໝົດ # ຂອງ ADLs/IADLS ທີ່ມີເງື່ອນໄຂ = 5

ຂັ້ນທີ 1 ແລະ 2 ແມ່ນທີ່ຈະບວກເຂົ້າໃສ່ກັນຈຳນວນທັງໝົດຂອງເປີເຊັນຂອງຄຸນຄ່າແລະຈຳນວນທັງໝົດຂອງ ADLs/IADLs ທີ່ມີເງື່ອນໄຂ.ຈົ່ງເບິ່ງຂ້າງເທິງ.

ຂັ້ນທີ 3 ແມ່ນທີ່ຈະຫານຈຳນວນທັງໝົດຂອງເປີເຊັນຂອງຄຸນຄ່າໃສ່ຈຳນວນຂອງ ADLs/IADLs ທີ່ມີເງື່ອນໄຂ.ຈຳນວນນັ້ນແມ່ນຄຸນຄ່າ A.  3.85 ÷ 5 = .77

ຂັ້ນທີ 4 ແມ່ນທີ່ຈະລົບຄຸນຄ່າ A ຈາກ 1.  1 – .77 = 0.23. ອັນນີ້ແມ່ນຄຸນຄ່າ B.

ຂັ້ນທີ 5 ແມ່ນທີ່ຈະຫານຄຸນຄ່າ B ໃຫ້ 3. .23 ÷ 3 = .07666 ຊຶ່ງໄດ້ຖືກໄລ່ໃຫ້ໃກ້ສຸດມາເປັນ .08. ອັນນີ້ແມ່ນຄຸນຄ່າ C.

ຂັ້ນທີ 6 ແມ່ນທີ່ຈະບວກຄຸນຄ່າ A ແລະຄຸນຄ່າ C.  .77 + .08 = .85. ອັນນີ້ແມ່ນຄຸນຄ່າ D.

ຂັ້ນທີ 7 ແມ່ນທີ່ຈະຄູນຄຸນຄ່າ D ໃສ່ຊົ່ວໂມງພື້ນຖານຂອງ Bob (ຊຶ່ງແມ່ນ69). 69 x .85 = 58.65. ເລກນີ້ໄດ້ຖືກໄລ່ໃຫ້ໃກ້ສຸດມາເປັນ 59. ອັນນີ້ແມ່ນຈຳນວນຂອງຊົ່ວໂມງເບິ່ງແຍງດູແລສ່ວນຕົວທີ່ Bob ຈະໄດ້ຮັບແຕ່ລະເດືອນ.

ຊົ່ວໂມງພື້ນຖານຂອງ Bob ຈະຖືກລຸດລົງໂດຍ 10 ຊົ່ວໂມງຕໍ່ເດືອນຍ້ອນວ່າ Joe ເຮັດອາຫານໃນວັນເສົາວັນອາທິດສ່ວນຫລາຍ, ຊ່ວຍນຳການນຸ່ງເຄື່ອງໃນວັນເສົາວັນອາທິດ,ແລະຍ້ອນວ່າປະຕິເສດການຊ່ວຍເຫລືອນຳການອາບນ້ຳ.(10 ຊົ່ວໂມງຫນ້ອຍກວ່າຕໍ່ເດືອນ)

ຕົວຢ່າງ **#4:**

Janet ອາສັຍຢູ່ນຳຜົວຂອງລາວ. Janet ມີອາຍຸ 63 ປີ. Bill ມີອາຍຸ 65 ປີ.ລາວຍັງເຮັດວຽກຢູ່,ແຕ່ວ່າເຄິ່ງເວລາເທົ່ານັ້ນ. Janet ມີພະຍາດມອລໂຕໂປຊີໂຣຊິສ.ລາວໄດ້ 115 ຊົ່ວໂມງ "ພື້ນຖານ" ສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຕໍ່ເດືອນ. Janet ຕ້ອງການຄວາມຊ່ວຍເຫລືອນຳການນຸ່ງເຄື່ອງ,ການອາບນ້ຳ,ອະນາມັຍສ່ວນຕົວ,ການຍ້າຍໄປມາ,ການຍ່າງໄປຍ່າງມາຢູ່ນອກເຮືອນ,ການເຮັດກິນ,ວຽກບ້ານ,ການອອກຕະລາດ,ແລະການໄປຫາຫມາຍນັດຫມໍຂອງລາວ.

Bill ເຮັດອາຫານຄ່ຳສຳລັບລາວເອງແລະ Janet ອີກທຸກໆຄືນ.ລາວຍັງເຮັດອາຫານເຊົ້າແລະອາຫານທ່ຽງຂອງ Janet ອີກໃນວັນເສົາວັນອາທິດ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Janet ເຮັດອາຫານເຊົ້າແລະອາຫານທ່ຽງໃຫ້ລາວໃນວັນກາງອາທິດ.

Janet ໄດ້ຮັບຄວາມຊ່ວຍເຫລືອຈາກ Bill ສຳລັບຄາບເຂົ້າ 11 ເທື່ອຂອງ 21 ເທື່ອທີ່ລາວ ກິນທຸກໆອາທິດ.ອັນນີ້ແມ່ນຕ່ຳກວ່າ **1/2** ຫນ້ອຍນຶ່ງຂອງຄາບເຂົ້າທີ່ຖືກຈັດແຈງໃຫ້ Janet. ຕ່ຳກວ່າ ½ ຂອງຫນ້ອຍນຶ່ງແມ່ນເສດສ່ວນຣະຫວ່າງ ½ - ¾. ຄວາມຕ້ອງການຂອງ Janet ສຳລັບຄວາມຊ່ວຍເຫລືອໃນການເຮັດຄາບເຂົ້າແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ"ໂດຍ Bill ຊຶ່ງແມ່ນ ½ - ¾ ຂອງເວລາ.

Bill ຊ່ວຍເຫລືອ Janet ນຳການປ່ຽນມານຸ່ງສິ້ງນອນຂອງລາວທຸກໆຄືນ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Janet ຊ່ວຍ Janet ນຸ່ງເຄື່ອງໃນຕອນເຊົ້າ.Janet ຕ້ອງການຄວາມຊ່ວຍເຫລືອຊ່ວຍນຸ່ງເຄື່ອງ 14 ເທື່ອໃນຣະຫວ່າງອາທິດ. Bill ຊ່ວຍເຫລືອ Janet ນຳການນຸ່ງເຄື່ອງ ½ ຂອງເວລາ. ½ ຂອງເວລາແມ່ນເສດສ່ວນຣະຫວ່າງ ½ - ¾. ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Janet ນຳການນຸ່ງເຄື່ອງແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ"ໂດຍ Bill ½ - ¾ ຂອງເວລາ.

Bill ຊ່ວຍເຫລືອ Janet ລຸກຂຶ້ນຈາກຕັ່ງນອນຢຽດທຸກໆຄືນຫລັງຈາກເຂົາເຈົ້າເບິ່ງ TVແລ້ວ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Janet ຊ່ວຍ Janet ລຸກອອກຈາກຕຽງນອນໃນຕອນເຊົ້າໃນຣະຫວ່າງວັນກາງອາທິດ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Janet ຍັງຊ່ວຍ Janet ລຸກຂຶ້ນຈາກຕັ່ງນອນຢຽດໃນວັນກາງອາທິດອີກຄືກັນ. Bill ຊ່ວຍເຫລືອ Janet ລຸກອອກຈາກຕຽງນອນແລະຂຶ້ນຈາກຕັ່ງນອນຢຽດໃນກາງເວັນຂອງວັນເສົາວັນ.ອາທິດ. Janet ຕ້ອງການຄວາມຊ່ວຍເຫລືອນຳການລຸກອອກຈາກຕຽງຫລືການລຸກຂຶ້ນຈາກ

ຕັ່ງນອນຢຽດ 21 ເທື່ອໃນຣະຫວ່າງອາທິດ.ຄວາມຊ່ວຍເຫລືອນຳການລຸກອອກຈາກຕຽງຫລືການລຸກຂຶ້ນຈາກຕັ່ງນອນຢຽດເປັນການຍ້າຍທີ່. Bill ຊ່ວຍເຫລືອ Janet ນຳການຍ້າຍທີ່ 11 ເທື່ອອອກຈາກ 21 ເທື່ອຊຶ່ງແມ່ນຫລາຍກວ່າຫນ້ອຍນຶ່ງຂອງ ½ ຂອງເວລາທີ່ Janet ຕ້ອງການຄວາມຊ່ວຍເຫລືອ. ຫລາຍກວ່າຫນ້ອຍນຶ່ງຂອງ ½ ຂອງເວລາແມ່ນເສດສ່ວນຣະຫວ່າງ ½ - ¾. ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Janet ນຳການຍ້າຍທີ່ແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ"ໂດຍ Bill ½ - ¾ ຂອງເວລາ.

Bill ເຮັດວຽກບ້ານແລະການອອກຕະລາດໃຫ້ສໍາລັບເຂົາເຈົ້າທັງສອງຄົນ.ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Janet ແມ່ນ"ຖືກຕອບສະນອງ"ສໍາລັບວຽກບ້ານແລະການອອກຕະລາດ.

ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Janet ເອົາໃຫ້ຄວາມຊ່ວຍເຫລືອທຸກໆຢ່າງທີ່ Janet ຕ້ອງການນໍາການອາບນໍ້າ,ອະນາມັຍສ່ວນຕົວ,ແລະການພາລາວໄປຫາຫມາຍນັດຫມໍ.ຕາມທັມມະດາແລ້ວ Janet ມີການອາບນໍ້າ 3 ເທື່ອຕໍ່ອາທິດ. Janet ໄປຫາທ່ານຫມໍຂອງລາວຢ່າງຫນ້ອຍເດືອນນຶ່ງເທື່ອນຶ່ງຫລືຢູ່ເລື້ອຍໆ,ສອງເທື່ອຕໍ່ເດືອນ.ເພີ້ມເຕີມອີກ,ລາວໄປຝຶກແອບຣ່ອງກາຍອາທິດນຶ່ງເທື່ອນຶ່ງ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວພາລາວໄປຫາຫມາຍນັດເຫລົ່ານີ້ທຸກໆຢ່າງ.ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Janet ນໍາການອາບນໍ້າ,ອະນາມັຍສ່ວນຕົວ,ແລະການພາລາວໄປຫາຫມາຍນັດຫມໍແມ່ນ"ຖືກຕອບສະນອງ".

ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Janet ຍັງຊ່ວຍ Janet ໃຫ້ຍ່າງຢ່າງປອດພັຍອີກຈາກຕູ້ໄປສະນີໃນຣະຫວ່າງວັນກາງອາທິດ.

ຊົ່ວໂມງເບິ່ງແຍງດູແລສ່ວນຕົວຂອງ Janet ໄດ້ຖືກລຸດລົງໂດຍ 39 ຊົ່ວໂມງ.ຍ້ອນຄວາມຊ່ວຍເຫລືອຂອງ Bill, Janet ບໍ່ຕ້ອງການຄວາມຊ່ວຍເຫລືອຫລາຍເທົ່າໃດຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ.ການຄິດໄລ່ອັນນັ້ນໄດ້ຖືກອະທິບາຍຢູ່ຂ້າງລຸ່ມນີ້.ມັນໄດ້ຖືກອີງໃສ່ກົດຣະບຽບຂອງກົມ DSHS.

ADLs ແລະ IADLs ທີ່ມີເງື່ອນໄຂທີ່ Janet ຕ້ອງການຄວາມຊ່ວຍເຫລືອນໍາໄດ້ຖືກຖືກຕື່ມເຂົ້າໃສ່ນໍາກ່ອນ.ບໍ່ແມ່ນວ່າ ADL ທຸກໆຢ່າງຈະແມ່ນ ADL ທີ່ມີເງື່ອນໄຂ. Janet ຕ້ອງການຄວາມຊ່ວຍເຫລືອນໍາ ADLs ທີ່ມີເງື່ອນໄຂ 4 ຢ່າງ.ມັນແມ່ນການນຸ່ງເຄື່ອງ,ການອາບນໍ້າ,ອະນາມັຍສ່ວນຕົວ,ແລະການຍ້າຍທີ່.ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Janet ນໍາການຍ່າງໄປຍ່າງມາຢູ່ນອກເຮືອນຂອງລາວບໍ່ແມ່ນ ADL ທີ່ມີເງື່ອນໄຂ.

Janet ຕ້ອງການຄວາມຊ່ວຍເຫລືອນໍາ IADLs ທີ່ມີເງື່ອນໄຂ 4 ຢ່າງ.ມັນແມ່ນການເຮັດກິນ,ວຽກບ້ານ,ການອອກຕະລາດ,ແລະການໄກຫາຫມາຍນັດຫມໍຂອງລາວ.

ກົດຣະບຽບຂອງກົມ DSHS ແຕ່ງຕັ້ງເປີເຊັນຂອງຄຸນຄ່າໃສ່ຈໍານວນການຊ່ວຍເຫລືອທີ່Ginny ມີຢູ່ສໍາລັບ ADL ຫລື IADL ທີ່ມີເງື່ອນໄຂແຕ່ລະອັນ.ເປີເຊັນຂອງຄຸນຄ່າເບິ່ງໃສ່ສອງຢ່າງ:

- ບໍ່ກ່ຽວວ່າມັນຈະມີການຊ່ວຍເຫລືອອັ້ມຊູທີ່ບໍ່ເປັນທາງການແນວໃດຫລືບໍ່ສໍາລັບ ADL/IADLທີ່ມີເງື່ອນໄຂແຕ່ລະຢ່າງ;ແລະ
- ການຊ່ວຍເຫລືອເທົ່າໃດທີ່ມີຢູ່,ຖ້າມີ.

ອັນນີ້ແມ່ນຕາຕະລາງໂດຍສະເພາະກ່ຽວກັບ Janet ແລະ ADLs/IADLs ທີ່ມີເງື່ອນໄຂຂອງລາວ.Janet ມີການຊ່ວຍເຫລືອພາກສ່ວນນຶ່ງຫລືການຊ່ວຍເຫລືອມີໄວ້ໄວ້ໃຫ້ສໍາລັບການນຸ່ງເຄື່ອງ,ການຍ້າຍທີ່,ແລະການເຮັດກິນຈາກ Bill. Janet ບໍ່ມີການຊ່ວຍເຫລືອແນວໃດຫລືການຊ່ວຍເຫລືອມີໄວ້ໃຫ້ (ຍົກເວັ້ນຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວ) ສໍາລັບການ

ອາບນໍ້າ,ອະນາມັຍສ່ວນຕົວ,ຫລືການເດີນທາງໄປຫາຫມາຍນັດຫມໍຂອງລາວ. Janet ບໍ່ຕ້ອງການການຊ່ວຍເຫລືອແນວໃດຈາກຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວນໍາວຽກບ້ານຫລືການອອກຕະລາດ.

ການຊ່ວຍເຫລືອທີ່ມີໄວ້ໃຫ້ສຳລັບທຸກໆຢ່າງນອກຈາກການນຸ່ງເຄື່ອງ,ການຍ້າຍທີ່ແລະການເຮັດກິນໄດ້ຖືກໝາຍໃສ່ວ່າ n/a (ບໍ່ກ່ຽວນຳ). ຢູ່ໃນຕາຕະລາງຂ້າງລຸ່ມ,ເປັນຫຍັງ "n/a" ຈຶ່ງຖືກໝາຍໃສ່ສຳລັບການຊ່ວຍເຫລືອທີ່ມີໄວ້ໃຫ້ສຳລັບແນວອື່ນອີກ? N/A ໄດ້ຖືກໝາຍໃສ່ເມື່ອເວລາ:

- ມັນບໍ່ມີການຊ່ວຍເຫລືອມີໄວ້ໃຫ້ (ບໍ່ຕອບສະນອງເທື່ອ) ;
- ການຊ່ວຍເຫລືອທັງໝົດທີ່ມີໄວ້ໃຫ້ (ຕອບສະນອງ);
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານບໍ່ສາມາດຫລືທ່ານບໍ່ມີຜູ້ໃຫ້ການບໍລິການ;
- ADL/IADL ບໍ່ໄດ້ເກີດຂຶ້ນຍ້ອນວ່າທ່ານປະຕິເສດການຊ່ວຍເຫລືອນຳອັນນີ້.

| ADLs/IADLs | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
|---|---|---|---|
| ການນຸ່ງເຄື່ອງ | ຕອບສະນອງສ່ວນນຶ່ງ | ½ - ¾ | .35 |
| ການອາບນ້ຳ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ອະນາມັຍສ່ວນຕົວ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| ການໂອນໄປ | ຕອບສະນອງສ່ວນນຶ່ງ | ½ ຫາ ¾ ຂອງເວລາ | .5 |
| ການເຮັດລາບເຂົ້າ | ຕອບສະນອງສ່ວນນຶ່ງ | ½ - ¾ ຂອງເວລາ | .1 |
| ວຽກບ້ານ | ຕອບສະນອງ | ບໍ່ກ່ຽວ | 0 |
| ການອອກຕະລາດ | ຕອບສະນອງ | ບໍ່ກ່ຽວ | 0 |
| ການເດີນທາງໄປຫາ ໝາຍນັດໝໍ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |

ທັງໝົດຂອງເປີເຊັນຂອງຄຸນຄ່າ = 3.95
ຈຳນວນທັງໝົດ # ຂອງ ADLs/IADLS ທີ່ມີເງື່ອນໄຂ = 8

ຂັ້ນທີ 1 ແລະ 2 ແມ່ນທີ່ຈະບວກເຂົ້າໃສ່ກັນຈຳນວນທັງໝົດຂອງເປີເຊັນຂອງຄຸນຄ່າແລະຈຳນວນທັງໝົດຂອງ ADLs/IADLs ທີ່ມີເງື່ອນໄຂ.ຈົ່ງເບິ່ງຂ້າງເທິງ.

ຂັ້ນທີ 3 ແມ່ນທີ່ຈະຫານຈຳນວນທັງໝົດຂອງເປີເຊັນຂອງຄຸນຄ່າໃສ່ຈຳນວນຂອງ ADLs/IADLs ທີ່ມີເງື່ອນໄຂ.ຈຳນວນນັ້ນແມ່ນ ຄຸນຄ່າ A. 3.95 ÷ 8 = .49375 = ຄຸນຄ່າ A. ເລກນີ້ໄດ້ຖືກໄລ່ໃຫ້ໃກ້ສຸດມາເປັນ .49.

ຂັ້ນທີ 4 ແມ່ນທີ່ຈະລົບຄຸນຄ່າ A ຈາກ 1. 1 – .49 = 0.51. ອັນນີ້ແມ່ນຄຸນຄ່າ B.

ຂັ້ນທີ 5 ແມ່ນທີ່ຈະຫານຄຸນຄ່າ B ໃຫ້ 3. .51 ÷ 3 = .17. ອັນນີ້ແມ່ນຄຸນຄ່າ C.

ຂັ້ນທີ 6 ແມ່ນທີ່ຈະບວກຄຸນຄ່າ A ແລະຄຸນຄ່າ C.  .49 + .17 = .66. ອັນນີ້ແມ່ນຄຸນຄ່າ D.

ຂັ້ນທີ 7 ແມ່ນທີ່ຈະຄູນຄຸນຄ່າ D ໃສ່ຊົ່ວໂມງພື້ນຖານຂອງ Janet (ຊຶ່ງແມ່ນ115). 115 x .66 = 75.9. ເລກນີ້ໄດ້ຖືກໄລ່ໃຫ້ໃກ້ສຸດມາເປັນ 76. ອັນນີ້ແມ່ນຈຳນວນຂອງຊົ່ວໂມງເບິ່ງແຍງດູແລສ່ວນຕົວທີ່ Janet ຈະໄດ້ຮັບແຕ່ລະເດືອນ.

ຊົ່ວໂມງພື້ນຖານຂອງ Janet ຈະຖືກລຸດລົງໂດຍ 39 ຊົ່ວໂມງຕໍ່ເດືອນຍ້ອນວ່າ Billເຮັດອາຫານເຊົ້າແລະອາຫານທ່ຽງໃຫ້ລາວໃນວັນເສົາວັນອາທິດ,ອາຫານຄ່ຳທຸກໆຄືນ,ຊ່ວຍນຳການຍ້າຍທີ່ແລະການນຸ່ງເຄື່ອງ,ແລະເຮັດການອອກຕະລາດແລະວຽກບ້ານທຸກໆຢ່າງ.(115 - 76 = 39 ຊົ່ວໂມງຫນ້ອຍກວ່າຕໍ່ເດືອນ)

## ຕະຕະລາງສຳລັບການອູ້ມຊູທີ່ບໍ່ເປັນທາງການ

| ຢາ | ການກະທຳໂດຍຕົນເອງ | ສະພາບ | ການຊ່ວຍເຫລືອມີໄວ້ໃຫ້ | ເປີເຊັນຂອງຄຸນຄ່າ |
|---|---|---|---|---|
| ການຄວບຄຸມນຳຢາໂດຍຕົນເອງ | ກົດຣະບຽບສຳລັບໂຄດເຄື່ອງຫມາຍທຸກໆອັນຍົກເວັ້ນແຕ່ບໍ່ຂື້ນນຳໃຜບໍ່ຖືກໄລ່ເອົາ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| | | ຕອບສະນອງ | ບໍ່ກ່ຽວ | 0 |
| | | ປະຕິເສດບໍ່ຮັບເອົາ | ບໍ່ກ່ຽວ | 0 |
| | | ຕອບສະນອງສ່ວນນຶ່ງ | <1/4 ເວລາ | .9 |
| | | | 1/4 ຫາ 1/2 ເວລາ | .7 |
| | | | 1/2 ຫາ 3/4 ເວລາ | .5 |
| | | | >3/4 ເວລາ | .3 |
| ADLs ທີ່ບໍ່ໄດ້ຖືກມັດເອົາໄວ້ | ການກະທຳໂດຍຕົນເອງ | ສະພາບ | ການຊ່ວຍເຫລືອມີໄວ້ໃຫ້ | ເປີເຊັນຂອງຄຸນຄ່າ |
| ຂານຕຶງໄປມາຢູ່ເທິງຕຽງ,ການຍ້າຍໄປມາ,ການຍ່າງເຂົ້າຫ້ອງ,ການກິນ,ການໃຊ້ຫ້ອງນ້ຳ | ກົດຣະບຽບໃຊ້ໃສ່ໂຄດເຄື່ອງຫມາຍທຸກໆອັນຍົກເວັ້ນແຕ່:ບໍ່ໄດ້ເກີດຂື້ນ/ລູກຄ້າບໍ່ສາມາດແລະບໍ່ໄດ້ເກີດຂື້ນ/ຜູ້ເບິ່ງແຍງດູແລບໍ່ມີໄວ້ໃຫ້ = 1; | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| | | ຕອບສະນອງ | ບໍ່ກ່ຽວ | 0 |
| | | ປະຕິເສດບໍ່ຮັບເອົາ | ບໍ່ກ່ຽວ | 0 |

| | | | | |
|---|---|---|---|---|
| | ບໍ່ໄດ້ເກີດຂື້ນ/ຜູ້ຮັບ ການຊ່ວຍເຫລືອປະ ຕິເສດແລະບໍ່ຂື້ນນຳ ໃຜບໍ່ຖືກໄລ່ເອົາ. | ຕອບສະນອງສ່ວນນຶ່ງ | <1/4 ຂອງເວລາ | .9 |
| | | | 1/4 ຫາ 1/2 ຂອງເວລາ | .7 |
| | | | 1/2 ຫາ 3/4 ຂອງເວລາ | .5 |
| | | | >3/4 ຂອງເວລາ | .3 |
| ADLs ທີ່ຖືກ ມັດຫມາຍໄວ້ | ການກະທຳໂດຍຕົນເອງ | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
| ການນຸ່ງເຄື່ອງ,<br>ອະນາມັຍສ່ວນຕົວ,<br>ການອາບນ້ຳ | ກົດຣະບຽບໃຊ້ໃສ່ໂຄດ ເຄື່ອງຫມາຍທຸກໆອັນ ຍົກເວັ້ນແຕ່:ບໍ່ໄດ້ເກີດ ຂື້ນ/ລູກຄ້າບໍ່ສາມາດແລະ ບໍ່ໄດ້ເກີດຂື້ນ/ຜູ້ເບິ່ງແຍງ ດູແລບໍ່ມີໄວ້ໃຫ້ = 1; | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| | | ຕອບສະນອງ | ບໍ່ກ່ຽວ | 0 |
| | | ປະຕິເສດບໍ່ຮັບເອົາ | ບໍ່ກ່ຽວ | 0 |
| | ບໍ່ໄດ້ເກີດຂື້ນ/ຜູ້ຮັບ ການຊ່ວຍເຫລືອປະ ຕິເສດແລະບໍ່ຂື້ນນຳ ໃຜບໍ່ຖືກໄລ່ເອົາ. | ຕອບສະນອງສ່ວນນຶ່ງ | <1/4 ຂອງເວລາ | .75 |
| | | | 1/4 ຫາ 1/2 ຂອງເວລາ | .55 |
| | | | 1/2 ຫາ 3/4 ຂອງເວລາ | .35 |
| | | | >3/4 ຂອງເວລາ | .15 |
| **IADLs** | ການກະທຳໂດຍຕົນເອງ | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
| ການຈັດແຈງ ຄາບເຂົ້າ,<br>ວຽກບ້ານຕາມ ທັມມະດາ,<br>ການອອກຕະ ລາດທີ່ຈຳເປັນ | ກົດຣະບຽບສຳລັບໂຄດ ເຄື່ອງຫມາຍທຸກໆອັນ ຍົກເວັ້ນແຕ່ບໍ່ຂື້ນນຳໃຜ ບໍ່ຖືກໄລ່ເອົາ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| | | ຕອບສະນອງ | ບໍ່ກ່ຽວ | 0 |
| | | ປະຕິເສດບໍ່ຮັບເອົາ | ບໍ່ກ່ຽວ | 0 |
| | | ຕອບສະນອງສ່ວນນຶ່ງ | <1/4 ຂອງເວລາ | .3 |

| | | | | |
|---|---|---|---|---|
| | | | 1/4 ຫາ 1/2 ຂອງເວລາ | .2 |
| | | | 1/2 ຫາ 3/4 ຂອງເວລາ | .1 |
| | | | >3/4 ຂອງເວລາ | .05 |
| **IADLs** | ການກະທຳໂດຍຕົນເອງ | ສະພາບ | ການຊ່ວຍເຫລືອ ມີໄວ້ໃຫ້ | ເປີເຊັນ ຂອງຄຸນຄ່າ |
| ການເດີນທາງ ໄປຫາຫມໍ | ກົດຣະບຽບສຳລັບໂຄດ ເຄື່ອງຫມາຍທຸກໆອັນ ຍົກເວັ້ນແຕ່ບໍ່ຂື້ນນຳໃຜ ບໍ່ຖືກໄລ່ເອົາ | ບໍ່ຖືກຕອບສະນອງ | ບໍ່ກ່ຽວ | 1 |
| | | ຕອບສະນອງ | ບໍ່ກ່ຽວ | 0 |
| | | ປະຕິເສດບໍ່ຮັບເອົາ | ບໍ່ກ່ຽວ | 0 |
| | | ຕອບສະນອງສ່ວນນຶ່ງ | <1/4 ຂອງເວລາ | .9 |
| | | | 1/4 ຫາ 1/2 ຂອງເວລາ | .7 |
| | | | 1/2 ຫາ 3/4 ຂອງເວລາ | .5 |
| | | | >3/4 ຂອງເວລາ | .3 |

ຈຸດສຳຄັນ:

> ຫມາຍຄວາມວ່າໃຫຍ່ກວ່າ

< ຫມາຍຄວາມວ່າຫນ້ອຍກວ່າ

## ການຊັກເຄື່ອງຢູ່ນອກເຮືອນ,ການອອກຕະລາດ,ຫລືອາຍອຸ່ນຈາກຟືນດັງໄຟ

ເມື່ອທ່ານອາສັຍຢູ່ໃນເຮືອນ,ການດັດແປງໃນຊົ່ວໂມງຂອງທ່ານໄດ້ຖືກເຣັດເມື່ອທ່ານມີແນວນຶ່ງຫລືຫລາຍແນວຂອງສິ່ງຕໍ່ລົງໄປນີ້:

- ການຊັກເຄື່ອງຢູ່ນອກເຮືອນ:ທ່ານບໍ່ມີເຕົາຊັກເຄື່ອງ/ເຕົາອົບເຄື່ອງຢູ່ໃນເຮືອນຂອງທ່ານ.ຜູ້ເບິ່ງແຍງດູແລ ທີ່ຖືກຈ່າຍເງິນໃຫ້ຂອງທ່ານຕ້ອງຢູ່ນຳເຄື່ອງຊັກຂອງທ່ານໃນເວລາທີ່ມັນກຳລັງຖືກຊັກຫລືອົບຢູ່.

- ທ່ານອາສັຍຢູ່ຫລາຍກວ່າ 45 ນາທີຈາກຕະລາດຂາຍເຄື່ອງບໍຣິການຄົບຫມົດຫລືຮ້ານຂາຍຢາ.

- ບ່ອນມາຂອງອາຍອຸ່ນບ່ອນດຽວຂອງທ່ານແມ່ນຟືນດັງໄຟແລະທ່ານຕ້ອງການຄວາມຊ່ວຍເຫລືອນຳຫນ້າທີ່ເຊັ່ນວ່າການ ຜ່າຟືນ,ການກອງກັນອື່ນ,ຫລືການຫິ້ວຟືນເຂົ້າມາ.

ທ່ານອາດຈະບໍ່ໄດ້ຊົ່ວໂມງເພີ້ມເຕີມຫລາຍຊົ່ວໂມງເມື່ອທ່ານອາສັຍຢູ່ຫລາຍກວ່າ 45 ນາທີໄກຈາກຕະລາດບໍຣິການຫມົດທຸກຢ່າງ ຫລືຮ້ານຂາຍຢາຫລືຕ້ອງການຟືນດັງໄຟຖ້າຫາກວ່າທ່ານໄດ້ຮັບຄວາມຊ່ວຍເຫລືອຈາກການອູ້ມຊູທີ່ບໍ່ເປັນທາງການ. (ການອູ້ມຊູທີ່ບໍ່ເປັນທາງການບໍ່ສະທ້ອນເຖິງຊົ່ວໂມງສຳລັບການຊັກເຄື່ອງຢູ່ນອກບ້ານ) .ການຊ່ວຍເຫລືອທີ່ທ່ານໄດ້ຮັບຈາກຫມູ່ເພື່ອນ,ຄົນຂ້າງຄຽງ ,ຫລືສະມາຊິກຄອບຄົວຖືກເອີ້ນວ່າການອູ້ມຊູທີ່ບໍ່ເປັນທາງການ.ການອູ້ມຊູທີ່ບໍ່ເປັນທາງການຍັງລວມເອົາບ່ອນຊ່ວຍເຫລືອຈາກ ຊຸມນຸມຊົນເຊັ່ນວ່າກຸ່ມໂບດຸນພໍ່.ພວກເຮົາບໍ່ຈ່າຍເງິນໃຫ້ສຳລັບການອູ້ມຊູທີ່ບໍ່ເປັນທາງການ..ພວກເຮົາໃຊ້ຄຳເວົ້າຕໍ່ລົງໄປນີ້ເມື່ອ ເວົ້າເຖິງການອູ້ມຊູທີ່ບໍ່ເປັນທາງການ:

- **ຕອບສະນອງ**: ເມື່ອເວລາການອູ້ມຊູທີ່ບໍ່ເປັນທາງການຕອບສະນອງຄວາມຕ້ອງການຂອງທ່ານ <u>ທັງຫມົດ</u> ສຳລັບ ຄວາມຊ່ວຍເຫລືອນຳພາລະກິດ.ຕົວຢ່າງວ່າ,ທ່ານບໍ່ສາມາດອອກຕະລາດຂອງທ່ານແລະທ່ານອາສັຍຢູ່ຫລາຍກວ່າ 45 ນາທີຈາກຕະລາດຂາຍເຄື່ອງຄົບຫມົດ.ລູກສາວຂອງທ່ານ,ຜູ້ທີ່ບໍ່ຖືກຈ່າຍເງິນໃຫ້,ອອກຕະລາດໃຫ້ທ່ານຫມົດທຸກຢ່າງ.

- **ຕອບສະນອງສ່ວນນຶ່ງ**: ເມື່ອການອູ້ມຊູທີ່ບໍ່ເປັນທາງການຕອບສະນອງ <u>ພາກສ່ວນນຶ່ງ</u> ຂອງຄວາມຕ້ອງການຂອງທ່ານ ສຳລັບຄວາມຊ່ວຍເຫລືອນຳພາລະກິດ.ຕົວຢ່າງ,ຮ້ານຂາຍຢາໃກ້ທີ່ສຸດແມ່ນໄກອອກໄປ 45 ໄມລ໌.ທ່ານບໍ່ສາມາດຂັບຣົດ. ຄົນຂ້າງຄຽງ,ຜູ້ທີ່ບໍ່ຖືກຈ່າຍເງິນໃຫ້,ພາທ່ານໄປເດືອນນຶ່ງສອງເທື່ອ.

    - ຖ້າຫາກວ່າຄວາມຕ້ອງການຂອງທ່ານສຳລັບຄວາມຊ່ວຍເຫລືອນຳພາລະກິດໄດ້ຖືກຕອບສະນອງສ່ວນນຶ່ງໂດຍ ການອູ້ມຊູທີ່ບໍ່ເປັນທາງການ,ພວກເຮົາເບິ່ງເພື່ອຈະຮູ້ວ່າດົນປານໃດເທື່ອນຶ່ງຄວາມຊ່ວຍເຫລືອແມ່ນຕ້ອງການ. ແລ້ວພວກເຮົາຈະເບິ່ງວ່າດົນປານໃດເທື່ອນຶ່ງການອູ້ມຊູທີ່ບໍ່ເປັນທາງການຈະມີໄວ້ໃຫ້ເພື່ອຈະຕອບສະນອງ ຄວາມຕ້ອງການອັນນີ້:

        - ຕ່ຳກວ່າ ¼ ຂອງເວລາ (ຫມາຍເຫດ:ບໍ່ມີການລຸດລົງໄດ້ຖືກເຣັດເມື່ອເວລາທ່ານອາສັຍຢູ່ຫລາຍກວ່າ 45 ນາທີຈາກຕະລາດບໍຣິການຄົບທຸກຢ່າງຫລືຮ້ານຂາຍຢາຫລືຟືນດັງໄຟຕາບໃດທີ່ທ່ານມີການອູ້ມຊູທີ່ບໍ່ເປັນ ທາງການຕ່ຳກວ່າ ¼ ຂອງເວລາເທົ່ານັ້ນນຳສິ່ງເຫລົ່ານີ້) ;

        - ¼ ຫາ ½ ຂອງເວລາ;

- ½ ຫາ ¾ ຂອງເວລາ;
- ຫລາຍເກີນກວ່າ ¾ ຂອງເວລາ.

- **ຍັງບໍ່ໄດ້ເທື່ອ**: ມັນ <u>ບໍ່ມີ</u> ການອູ້ມຊູທີ່ບໍ່ເປັນທາງການ.ຕົວຢ່າງ,ທ່ານບໍ່ສາມາດເຮັດການອອກຕະລາດແລະ ບໍ່ມີຄົນໃດຈະອອກຕະລາດໃຫ້ທ່ານ.

- **ລູກຄ້າປະຕິເສດ**:ອັນນີ້ໝາຍຄວາມວ່າທ່ານບໍ່ຕ້ອງການຄວາມຊ່ວຍເຫລືອນຳການອອກຕະລາດຫລືຟື້ນດັ່ງໄຟ.

ຕົວຢ່າງ:

<u>ຫມາຍເຫດ</u>: ສາຍຕໍ່ໄປຫາກິດຣະບຽບທີ່ກ່ຽວຂ້ອງນຳການຊັກເຄື່ອງຢູ່ນອກບ້ານ,ການອອກຕະລາດ,ແລະຟື້ນດັ່ງໄຟແມ່ນຫລັງ ຈາກຕົວຢ່າງສຸດທ້າຍ.

ຕົວຢ່າງ **#1:**

**Jamie** ມີອາຍຸ **42** ປີ.ລາວອາສັຍຢູ່ຄົນດຽວຢູ່ເຮືອນເກົ່າໆນ້ອຍໆທີ່ຖືກອຸ່ນດ້ວຍເຕົາດັ່ງຟື້ນເກົ່າໆເທົ່ານັ້ນ. **Jamie** ມີພະຍາດ ຣູມາທອຍອາໄທທຣິສແລະບັນຫານຳການຫາຍໃຈຈາກພະຍາດຫືດ.ລາວບໍ່ສາມາດເຮັດຫຍັງໄດ້ຊຶ່ງວ່າຈຳເປັນເພື່ອຈະເຮັດໃຫ້ເຮືອນ ຂອງລາວອຸ່ນ.ລາວຕ້ອງການຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວທີ່ຈະຟັນຟື້ນ,ກອງກັນຂຶ້ນ,ແລະຫິ້ວຟື້ນເຂົ້າມາໃຫ້ລາວ. **Jamie** ໄດ້ **158** ຊົ່ວໂມງສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຕໍ່ເດືອນ.

**Jamie** ບໍ່ມີການຊ່ວຍເຫລືອແນວໃດນຳອາຍອຸ່ນຈາກຟື້ນຈາກຫມູ່ເພື່ອນ,ຄົນຂ້າງຄຽງ,ສະມາຊິກຄອບຄົວ,ຫລືບ່ອນຊ່ວຍເຫລືອ ຂອງຊຸມນຸມຊົນເຊັ່ນວ່າກຸ່ມໂບດຄຸນພໍ່.ຄວາມຕ້ອງການຂອງລາວສຳລັບຟື້ນດັ່ງໄຟແມ່ນ “ບໍ່ຖືກຕອບສະນອງ” ໂດຍການອູ້ມ ຊູທີ່ບໍ່ເປັນທາງການ.ຍ້ອນວ່າຟື້ນດັ່ງໄຟເປັນບ່ອນມາຂອງອາຍອຸ່ນຢ່າງດຽວເທົ່ານັ້ນຂອງລາວ,ລາວຈຶ່ງໄດ້ຊົ່ວໂມງຫລາຍກວ່າເພື່ອວ່າ ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວສາມມາດຊ່ວຍລາວໄດ້ນຳເຣື່ອງນີ້.

ອັນນີ້ແມ່ນຕາຕະລາງໂດຍສະເພາະກ່ຽວກັບ **Jamie** ແລະ ຄວາມຕ້ອງການສຳລັບຄວາມຊ່ວຍເຫລືອຂອງລາວນຳອາຍອຸ່ນດ້ວຍ ຟື້ນດັ່ງໄຟ. ການຊ່ວຍເຫລືອທີ່ມີໄວ້ໃຫ້ຢູ່ໃນແຖວທີສາມໄດ້ຖືກຫມາຍໃສ່ **N/A** ຍ້ອນວ່າ**Jamie** ບໍ່ມີການຊ່ວຍເຫລືອທີ່ບໍ່ເປັນທາງ ການແນວໃດໄວ້ໃຫ້ເພື່ອຈະຊ່ວຍເຫລືອນຳອາຍອຸ່ນດ້ວຍຟື້ນດັ່ງໄຟ.

| ສະພາບການດຳຣົງຊີວິດ | ສະພາບ | ການຊ່ວຍເຫລືອມີໄວ້ໃຫ້ | ຕື່ມຊົ່ວໂມງໃສ່ |
|---|---|---|---|
| ຟື້ນດັ່ງໄຟຖືກໃຊ້ໃຫ້ເປັນບ່ອນ ມາຂອງອາຍອຸ່ນແນວດຽວ | ບໍ່ຕອບສະນອງເທື່ອ | ບໍ່ກ່ຽວ | 8 |

ຊົ່ວໂມງ= 158
ຕື່ມຊົ່ວໂມງໃສ່ = 8

ຊົ່ວໂມງຂອງ Jamieຈະຖືກເພີ້ມຂື້ນໂດຍ 8 ຊົ່ວໂມງຕໍ່ເດືອນຍ້ອນວ່າລາວຕ້ອງການຄວາມຊ່ວຍເຫລືອນຳການອຸ່ນເຮືອນຂອງລາວດ້ວຍຟືນດັງໄຟ. (158 + 8 = 166 ຊົ່ວໂມງຕໍ່ເດືອນ)

ຕົວຢ່າງ **#2:**

Clara ມີອາຍຸ 85 ປີ.ລາວເຄີຍອາສັຍຢູ່ໃນຕຶກຫ້ອງແຖວເກົ່າທີ່ບໍ່ມີເຄື່ອງຊັກເຄື່ອງຫລືເຄື່ອງອົບເຄື່ອງຢູ່ໃນຕຶກອາຄານ.ຜູ້ເບິ່ງແຍງດູແລຂອງລາວຕ້ອງໄດ້ເອົາເຄື່ອງຊັກຂອງລາວໄປຫາຮ້ານຊັກເຄື່ອງຢູ່ໃກ້ໆແລະຢູ່ນຳເຄື່ອງເອົາໄປຊັກຂອງລາວຈົນກວ່າຈະຊັກແລະອົບແລ້ວ.Clara ມີ 65 ຊົ່ວໂມງຕໍ່ເດືອນແລະ 8 ຊົ່ວໂມງໄດ້ຖືກຕື່ມເຂົ້າໃສ່ນຳຍ້ອນວ່າລາວຊັກເຄື່ອງຢູ່ນອກບ້ານ. Clara ໄດ້ຮັບທັງຫມົດເປັນຈຳນວນ 73 ຊົ່ວໂມງຕໍ່ເດືອນ. 65 + 8  = 73.

Clara ໄດ້ຍ້າຍເຮືອນໃນຫມໍ່ໆມານີ້ເຂົ້າມາຢູ່ໃກ້ໆກັບເຮືອນລູກສາວຂອງລາວແລະເຮືອນໃຫມ່ຂອງລາວມີຈັກຊັກເຄື່ອງແລະຈັກອົບເຄື່ອງ. Clara ໄດ້ເຮັດການຕີຣາຄາປະເມີນຜົນປະຈຳປີຂອງລາວແລ້ວບໍ່ດົນຫລັງຈາກລາວຍ້າຍເຮືອນ.ບໍ່ມີຫຍັງຢູ່ໃນການຕີຣາຄາປະເມີນຜົນຂອງລາວໄດ້ປ່ຽນແປງຍົກເວັ້ນແຕ່ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງລາວບໍ່ຕ້ອງໄດ້ໄປຮ້ານຊັກເຄື່ອງແລະຢູ່ນຳເຄື່ອງຂອງ Clara ຕໍ່ໄປອີກແລ້ວ. Clara ບໍ່ມີເງື່ອນໄຂໄດ້ຮັບ 8 ຊົ່ວໂມງສຳລັບການຊັກເຄື່ອງຢູ່ນອກເຮືອນຕໍ່ໄປອີກແລ້ວ. Clara ໄດ້ຮັບຈຳນວນ 65 ຊົ່ວໂມງຕໍ່ເດືອນ.ລາວຈະບໍ່ໄດ້ຮັບ 8 ຊົ່ວໂມງເພີ້ມເຕີມ.

ຕົວຢ່າງ **#3:**

Scott ແມ່ນຜູ້ຮັບມີອາຍຸ 64 ປີຜູ້ທີ່ອາສັຍຢູ່ເຂດນອກຊົນນະບົດແທ້ໆ.ມັນຫລາຍກວ່າ 45 ນາທີຈາກເຮືອນຂອງລາວໄປຫາຕະລາດບໍຣິການທຸກໆຢ່າງຫລືຮ້ານຂາຍຢາ.ລາວອາສັຍຢູ່ໃນເຮືອນເກົ່າທີ່ຖືກອຸ່ນດ້ວຍເຕົາດັງຟືນເທົ່ານັ້ນ. Scott  ອາສັຍຢູ່ຄົນດຽວແລະມັກໃຊ້ເວລາຂອງລາວຢູ່ຕາມບ້ານນອກ.ລາວໄດ້ 111 ຊົ່ວໂມງສຳລັບການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນຕໍ່ເດືອນ.

ລູກຊາຍຂອງ Scott,  Ben ແວ່ມາຢາມສອງເທື່ອຕໍ່ອາທິດ.ເມື່ອລາວມາຢ້ຽມຢາມ,ລາວຜ່າຟືນໄວ້ໃຫ້ພໍສຳລັບສອງມື້.ຟືນຕ້ອງຖືກຂົນເຂົ້າມາໃນເຮືອນອີກຄືກັນ.ເຮືອນຂອງ Scottແມ່ນນ້ອຍໆເພາະສະນັ້ນແລ້ວຈະ Ben ສາມາດເອົາຟືນເຂົ້າມາໄດ້ພຽງພໍສຳລັບ 2 ມື້ເທົ່ານັ້ນ.ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Scott ຈະຜ່າຟືນ 3 ເທື່ອຕໍ່ອາທິດ.ລາວເອົາເຂົ້າມາເຮືອນອີກພໍທີ່ຈະກຸ້ມໄດ້ສຳລັບ 2 ມື້, 3 ເທື່ອຕໍ່ອາທິດ. Scott ຕ້ອງການຜ່າຟືນແລະເອົາເຂົ້າມາໃນເຮືອນ 4 ເທື່ອຕໍ່ອາທິດ. Ben ຊ່ວຍເຫລືອເທື່ອນຶ່ງຂອງ 4 ເທື່ອຊຶ່ງແມ່ນ ¼ ຂອງເວລາ. ¼ ແມ່ນເສດສ່ວນທີ່ຕົກຢູ່ຣະຫວ່າງ ¼ ແລະ ½ ຄວາມຕ້ອງການຄວາມຊ່ວຍເຫລືອຂອງ Scott ສຳລັບຟືນດັງໄຟແມ່ນ"ຖືກຕອບສະນອງພາກສ່ວນນຶ່ງ" ¼ ຫະ ½ ຂອງເວລາ.ແທນທີ່ວ່າຈະໄດ້ 8 ຊົ່ວໂມງເພີ້ມເຕີມຕໍ່ເດືອນຍ້ອນວ່າລາວມີແຕ່ອາຍອຸ່ນດ້ວຍຟືນເທົ່ານັ້ນ, Scott ຈະໄດ້ 6 ຊົ່ວໂມງເພີ້ມເຕີມຕໍ່ເດືອນຍ້ອນການຊ່ວຍເຫລືອຂອງ Ben.

Scott ຕ້ອງການຄວາມຊ່ວຍເຫລືອນຳການອອກຕະລາດເພື່ອວ່າຜູ້ເບີ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງ Scott ຈະອອກຕະລາດໃຫ້ລາວ.ຈະໄດ້ 5 ຊົ່ວໂມງເພີ້ມເຕີມຕໍ່ເດືອນສຳລັບອັນນີ້ຍ້ອນວ່າລາວອາສັຍຢູ່ຫລາຍກວ່າ 45 ນາທີຈາກຕະລາດບໍຣິການທຸກໆຢ່າງຫລືຮ້ານຂາຍຢາ.ຄວາມຕ້ອງການຂອງ Scott ສຳລັບການອອກຕະລາດທາງໄກແມ່ນ "ບໍ່ຖືກຕອບສະນອງ"

ອັນນີ້ແມ່ນຕາຕະລາງໂດຍສະເພາະກ່ຽວກັບ Scott ແລະ ການດັດແປງທີ່ຖືກເຮັດຕໍ່ຊົ່ວໂມງຂອງລາວສຳລັບການອາສັຍຢູ່ໄກຫລາຍກວ່າ 45 ນາທີຈາກຕະລາດບໍຣິການທຸກໆຢ່າງຫລືຮ້ານຂາຍຢາແລະອາຍອຸ່ນດ້ວຍຟືນດັ່ງໄຟ.ການຊ່ວຍເຫລືອທີ່ມີໄວ້ໃຫ້ໄດ້ຖືກຫມາຍໃສ່ N/A ສຳລັບການອາສັຍຢູ່ຫລາຍກວ່າ 45 ນາທີຈາກການອອກຕະລາດທີ່ຈຳເປັນຍ້ອນວ່າ Scott ບໍ່ມີການຊ່ວຍເຫລືອທີ່ບໍ່ເປັນທາງການແນວໃດໄວ້ໃຫ້ເພື່ອຈະຊ່ວຍເຫລືອນຳອັນນີ້.

| ສະພາບການດຳຣົງຊີວິດ | ສະພາບ | ການຊ່ວຍເຫລືອມີໄວ້ໃຫ້ | ຕື່ມຊົ່ວໂມງໃສ່ |
|---|---|---|---|
| ຜູ້ຮັບການຊ່ວຍເຫລືອຢູ່ໄກກວ່າ 45 ນາທີຈາກຕະລາດທີ່ຈຳເປັນ (ຊຶ່ງຫມາຍຄວາມວ່າເຂົາເຈົ້າຢູ່ຫລາຍກວ່າ 45 ນາທີທາງດຽວຈາກຕະລາດບໍຣິການຄົບຖ້ວນ) . | ບໍ່ຕອບສະນອງເທື່ອ | ບໍ່ກ່ຽວ | 5 |
| ຟືນດັ່ງໄຟຖືກໃຊ້ໃຫ້ເປັນບ່ອນມາຂອງອາຍອຸ່ນແນວດຽວ | ຕອບສະນອງສ່ວນນຶ່ງ | ຣະຫວ່າງ ½ ແລະ ¾ ຂອງເວລາ | 4 |

ຊົ່ວໂມງຂອງ Scott ຈະຖືກເພີ້ມຂື້ນໂດຍຊົ່ວໂມງຕໍ່ເດືອນ. (111 + 9 = 120 ຊົ່ວໂມງຕໍ່ເດືອນ)

**http://apps.leg.wa.gov/wac/default.aspx?cite=388-106-0130**